ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ


ມະຫາວິທະຍາໄລແຫ່ງຊາດ

ຄະນະກະເສດສາດ

ພາກວິຊາປູກພືດ

ພາກວິຊາລ້ຽງສັດ - ການປະມົງ


ບົດໂຄງການຈົບຊັ້ນ

ເລື່ອງ

# ສຶກສາຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດກະສິກຳ, ໃນເຂດເປົ້າໝາຍຂອງໂຄງການສົ່ງເສີມກະສິກຳ (LEAP) ເມືອງ ຊານໄຊ, ແຂວງອັດຕະປື

# Study on Input Chain of Agricultural Production in Target Area of LEAP Project, Sanxay District, Attapeu Province


ໂດຍ: ນ. ກອງແກ້ວ ພິລາວົງ

ນ. ອັ່ງຄະນາ ວົງມາຈຽງ

ນັກສຶກສາ: ປະລິນຍາຕີ


2009

ມະຫາວິທະຍາໄລແຫ່ງຊາດ
ຄະນະກະເສດສາດ
ພາກວິຊາປູກພືດ
ພາກວິຊາລ້ຽງສັດ - ການປະມົງ

# ບົດໂຄງການຈົບຊັ້ນ

ເລື່ອງ

# ສຶກສາຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດກະສິກຳ, ໃນເຂດ ເປົ້າໝາຍຂອງໂຄງການສົ່ງເສີມກະສິກຳ (LEAP) ເມືອງ ຊານໄຊ, ແຂວງ ອັດຕະປື

# Study on Input Chain of Agricultural Production in Target Area of LEAP Project, Sanxay District, Attapeu Province

ໂດຍ: ນ. ກອງແກ້ວ ພິລາວົງ

.............................................

ນ. ອັ່ງຄະນາ ວົງມາຈຽງ

...............................................

ຊີ້ນຳໂດຍ: ຮສ. ດຣ. ສິລິນທອນ ສັກລໍຄຳ

........................................

ພາກວິຊາ: ........................................

.......................................

2009

# ບົດຄັດຫຍໍ້

# (Abstract)

ການລົງສຶກສາຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດກະສິກຳຂອງຊາວກະສິກອນ ແມ່ນໄດ້ລົງ ສຶກສາຢູ່ທີ່ ບ້ານດາກກຽດ ແລະ ບ້ານໃໝ່ ເມືອງຊານໄຊ ແຂວງອັດຕະປືເຊິ່ງມີຈຸດປະສົງເພື່ອ: ສຶກ ສາບັນດາກິດຈະກຳການຜະລິດທີ່ຊາວກະສິກອນປະຕິບັດ, ສຶກສາຕ່ອງໂສ້ປັດໃຈນຳເຂົ້າໃນການຜະ ລິດ ແລະ ສົມທຽບໃຫ້ເຫັນຄວາມແຕກຕ່າງການເຂົ້າເຖິງປັດໃຈນຳເຂົ້າຂອງການຜະລິດ ມີໄລຍະເວ ລາໃນການສຶກສາທັງໝົດແມ່ນ 5 ເດືອນ ເຊິ່ງແບ່ງອອກເປັນ 3 ໄລຍະຄື: ໄລຍະທີ 1 ເລີ່ມແຕ່ວັນທີ 2/04/09 - 22/5/2009 ເປັນໄລຍະກະກຽມແບບຟອມສຳພາດ ແລະ ຂຽນບົດ ສະເໜີໂຄງການກ່ອນ ລົງສະໜາມ, ໄລຍະທີ 2 ແຕ່ວັນທີ 23/5/2009 - 23/6/2009 ແມ່ນໄລຍະເວລາລົງພາກສະໜາມເພື່ອເກັບຂໍ້ມູນຕົວຈິງ ແລະ ໄລຍະທີ 3 ແຕ່ວັນທີ 24/6/2009 - 31/8/2009 ແມ່ນໄລຍະເວລາ ວິເຄາະຂໍ້ມູນ ແລະ ຂຽນບົດໂຄງການຈົບຊັ້ນ. ວິທີການສຶກສາໃນຄັ້ງນີ້ແມ່ນໄດ້ເລີ່ມຈາກການສຶກສາຂໍ້ມູນເບື້ອງຕົ້ນກ່ຽວກັບຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດ ຂອງຊາວກະສິກອນ ແລະ ໄດ້ສ້າງແບບຟອມສຳພາດຫຼັງຈາກນັ້ນແມ່ນ ໄດ້ມີການຄັດເລືອກຄອບຄົວທີ່ຈະສຳພາດໂດຍແມ່ນອຳນາດການປົກ ຄອງບ້ານເປັນຜູ້ກຳນົດ ແລະ ຈັດລະດັບປະເພດຂອງຄອບຄົວໃຫ້ເປັນຄອບຄົວເຫຼືອກິນ, ກຸ້ມກິນ ແລະ ບໍ່ກຸ້ມກິນ ເຊິ່ງອີງໃສ່ເງື່ອນໄຂຂອງເຂົາເຈົ້າທີ່ກຳນົດໄວ້ພາຍໃນບ້ານພາຍຫຼັງໄດ້ຂໍ້ມູນທັງໝົດແລ້ວແມ່ນໄດ້ນຳມາວິເຄາະໃນ 2 ລັກສະນະຄື: ລັກສະນະຕ່ອງໂສ້ປັດໃຈນຳເຂົ້າການຜະລິດກະສິກຳຂອງລະດັບຄອບຄົວ ແລະ ປຽບທຽບປັດໃຈນຳເຂົ້າການຜະລິດຂອງແຕ່ລະຄອບຄົວໃນແຕ່ລະກິດຈະກຳ.

ຜົນຂອງການສຳພາດຊາວກະສິກອນຈຳນວນ 12 ຄອບຄົວໄດ້ຊີ້ໃຫ້ເຫັນວ່າລັກສະນະຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດກະສິກຳຂອງຊາວກະສິກອນ ຫຼື ວິທີການເຂົ້າເຖິງແຫຼ່ງປັດໃຈນຳເຂົ້າການຜະລິດຂອງຄອບຄົວເຫຼືອກິນ, ກຸ້ມກິນ ແລະ ບໍ່ກຸ້ມກິນແມ່ນມີຄວາມແຕກຕ່າງກັນ. ໃນການຜະລິດກະສິກຳຂອງຊາວກະສິກອນສ່ວນຫຼາຍແມ່ນຜະລິດແບບພໍກຸ້ມຢູ່ກຸ້ມກິນ, ກິດຈະກຳຕົ້ນຕໍທີ່ຊາວກະສິກອນຜະລິດແມ່ນ ປູກເຂົ້ານາປີ, ປູກເຂົ້າໄຮ່, ປູກສາລີ, ປູກຜັກກາດ ສຳລັບກິດຈະກຳການລ້ຽງ ສັດແມ່ນ ລ້ຽງຄວາຍ, ງົວ, ແບ້, ໝູ ແລະ ສັດປີກ. ປັດໃຈນຳເຂົ້າການຜະລິດ ປະກອບມີ: (1) ດິນການໄດ້ມາແມ່ນຊື້ເປັນເງິນສົດໂດຍຊື້ນຳປະຊາຊົນທີ່ຢູ່ໃນບ້ານດຽວກັນ, ດິນທີ່ກະສິກຳເມືອງແບ່ງປັນໃຫ້ ແລະ ສັບສ່າວເອົາເອງ. (2) ນ້ຳທີ່ຊາວກະສິກອນນຳໃຊ້ໃນການຜະລິດກະສິກຳນັ້ນແມ່ນຍັງອາໄສນ້ຳຈາກທຳມະຊາດເຊັ່ນ: ນ້ຳຝົນ, ນ້ຳຫ້ວຍ, ນ້ຳໜອງ ເພາະຢູ່ເຂດດັ່ງກ່າວບໍ່ມີລະບົບຊົນປະທານ. (3) ສິນເຊື່ອທີ່ຊາວກະສິກອນກູ້ຢືມແມ່ນໄດ້ກູ້ຢືມຈາກທະນະຄານນະໂຍບາຍມີອັດຕາດອກເບ້ຍ 7%/1ປີ - 10%/5ປີ ແລະ ກອງທຶນ

ບ້ານມີອັດຕາດອກເບ້ຍ 6%/1ປີ ເພື່ອນຳໃຊ້ເຂົ້າໃນການຜະລິດກະສິກຳ. (4) ອຸປະກອນທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳສ່ວນຫຼາຍແມ່ນຊື້ເປັນເງິນສົດ ແລະ ນຳມາແຕ່ປະເທດໄທ ໂດຍສະເພາະແມ່ນ ລົດໄຖ, ໄຖ, ໝາກສິບໄຖ, ກ່ຽວ, ຊວ້ານ, ພ້າ (5) ແຮງງານທີ່ໃຊ້ເຂົ້າໃນການຜະລິດກະສິກຳສ່ວນຫຼາຍແມ່ນແຮງງານພາຍໃນຄອບຄົວເປັນຫຼັກ. (6) ແຫຼ່ງຂໍ້ມູນຂ່າວສານໂດຍສະເພາະແມ່ນເລື່ອງຂໍ້ມູນທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີການທີ່ໃຊ້ເຂົ້າໃນການຜະລິດແມ່ນໄດ້ຈາກກະສິກຳເມືອງ, ເພື່ອນບ້ານ ແລະ ອາສາສະໝັກສັດຕະວະແພດບ້ານ (ອສບ) ເປັນຜູ້ສະໜອງໃຫ້. (7) ເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດປະກອບມີ ວັກຊີນ, ປຸ໋ຍ, ເກືອ ແລະ ນ້ຳມັນກາຊວນການໄດ້ມາແມ່ນຊື້ເປັນເງິນສົດທັງໝົດ. (8) ການບໍລິການໃນ ການ ປູກພືດແມ່ນບໍ່ໄດ້ນຳໃຊ້ສຳລັບການລ້ຽງສັດແມ່ນໄດ້ນຳໃຊ້ໂດຍສະເພາະແມ່ນການຈ້າງການບໍ ລິການສັກວັກຊີນຈາກ (ອສບ) ແລະ (9) ປັດໃຈນຳເຂົ້າທີ່ບໍ່ແມ່ນເຄມີທີ່ຊາວກະສິກອນນຳໃຊ້ສຳລັບການປູກພືດມີແນວພັນການໄດ້ມາແມ່ນໂຄງການ IFAD, ກະສິກຳເມືອງເປັນຜູ້ສະໜອງໃຫ້ ຫຼື ແລກ ປ່ຽນພາຍໃນບ້ານໃກ້ຄຽງ ສຳລັບການລ້ຽງສັດປະກອບມີແນວພັນສັດ, ອາຫານ ແລະ ເຊືອກ ການໄດ້ມາແມ່ນຊື້ເປັນເງິນສົດທັງໝົດ.

# ຄຳຂອບໃຈ

# ( Acknowledgement )

ຜ່ານການສຶກສາຮໍ່າຮຽນທີ່ມະຫາວິທະຍາໄລແຫ່ງຊາດ, ຄະນະກະເສດສາດ ຈົນເຖິງການລົງ ຝຶກງານທ້າຍການສຶກສາຢູ່ທີ່ກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ ໃນໂອກາດນີ້ຂ້າພະເຈົ້າຂໍ ສະແດງຄວາມຮູ້ບຸນຄຸນ ແລະ ຂໍສະແດງຄວາມຂອບໃຈມາຍັງ: ທ່ານ ຮສ. ດຣ. ສີລິນທອນ ສັກລໍຄຳ ຫົວໜ້າພາກວິຊາເສດຖະກິດ ແລະ ປຸງແຕ່ງຜະລິດຕະພັນກະສິກຳເຊິ່ງເປັນອາຈານທີ່ປຶກສາຊີ້ນຳຕົວ ຈິງໃນການລົງຝຶກງານຄັ້ງນີ້ ທີ່ໄດ້ເສຍສະຫຼະເວລາໃຫ້ຄຳແນະນຳທຸກໆດ້ານຕະຫຼອດເຖິງການຂຽນ ບົດລາຍງານ ແລະ ກວດແກ້ບົດລາຍງານຈົນສຳເລັດ.

ຂໍຂອບໃຈ ທ່ານ ສົມໄຊ ສີຊານົນ, ທ່ານ Andrew Bartlett ຫົວໜ້າຊ່ຽວຊານໂຄງການ ແລະ ທີມງານຂອງໂຄງການ LEAP ທຸກໆທ່ານທີ່ໃຫ້ການຊ່ວຍເຫຼືອບໍ່ວ່າຈະເປັນທາງດ້ານທຶນຮອນ ແລະ ອຸປະກອນຕ່າງໆໃນການລົງສຶກສາຄັ້ງນີ້.

ຂໍຂອບໃຈມາຍັງ ທ່ານ ຄຳກອັນ ນັນເທພາ ແລະ ທ່ານ ພຸດທະສິນ ພົມມະຈັນ ທີ່ໄດ້ຊີ້ນຳດ້ານເນື້ອໃນ ແລະ ຊ່ວຍກວດແກ້ບົດທັງເປັນຜູ້ຊີ້ນຳໃນການລົງພາກສະໜາມອີກດ້ວຍ.

ຂໍຂອບໃຈມາຍັງຫົວໜ້າພະແນກກະສິກຳ ແລະ ປ່າໄມ້, ສູນບໍລິການເຕັກນິກຕະຫຼອດຮອດຫ້ອງການກະສິກຳ ເມືອງຊານໄຊ ແຂວງອັດຕະປືທີ່ໄດ້ໃຫ້ຄວາມຮ່ວມມື, ຄຳແນະນຳໃນການລົງເກັບຂໍ້ມູນ ແລະ ເອື້ອອຳນວຍຄວາມສະດວກທຸກໆດ້ານໃນການລົງເກັບຂໍ້ມູນຕົວຈິງຄັ້ງນີ້ ພ້ອມດ້ວຍພໍ່ແມ່ປະຊາຊົນທັງສອງບ້ານທີ່ໃຫ້ການຮ່ວມມືເປັນຢ່າງດີ.

ຂໍຂອບໃຈຄະນະບໍດີ ຄະນະກະເສດສາດ ບັນດາຄູອາຈານທັງພາຍໃນ ຄະນະກະເສດສາດທີ່ ໄດ້ຖ່າຍທອດຄວາມຮູ້ ແລະ ເອົາໃຈໃສ່ສິດສອນ ພວກຂ້າພະເຈົ້າຕະຫຼອດມາ. ໃນໂອກາດນີ້ຂໍຂອບໃຈມາຍັງເພື່ອນນັກສຶກສາໃນມະຫາວິທະຍາໄລດຽວກັນ ແລະ ພໍ່, ແມ່, ອ້າຍ, ເອື້ອຍ, ນ້ອງ, ພ້ອມທັງຍາດຕິພີ່ນ້ອງຂອງຂ້າພະເຈົ້າທີ່ໄດ້ໃຫ້ກຳລັງໃຈ, ຊ່ວຍເຫຼືອ ແລະ ສົ່ງເສີມທາງດ້ານວັດຖຸ ແລະ ທຶນ ຮອນໃນການສຶກສາຮໍ່າຮຽນຈົນເຮັດໃຫ້ຂ້າພະເຈົ້າປະສົບຜົນສຳເລັດໃນຄັ້ງນີ້.

ທ້າຍສຸດນີ້ຂໍອວຍພອນໃຫ້ທຸກໆທ່ານ ຈົ່ງມີຄວາມສຸກກາຍສະບາຍໃຈ, ມີສຸຂະພາບພາລານາໄມທີ່ສົມບູນ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກໆປະການ.

ສິງຫາ 2009

ອັງຄະນາ ວົງມາຈຽງ

ກອງແກ້ວ ພິລາວົງ

# ສາລະບານ

# (Table of content)

ໜ້າ

ບົດຄັດຫຍໍ້..........................................................................................I

ຄຳຂອບໃຈ..........................................................................................III

ສາລະບານ..........................................................................................IV

ສາລະບານ

ຕາຕະລາງ..........................................................................................VII

ສາລະບານ

ຮູບ..........................................................................................VIII

ຄຳອະທິບາຍສັນຍາລັກ ແລະ ອັກສອນຫຍໍ້..................................................X.

I.

ບົດນຳ..........................................................................................1

ຈຸດປະສົງ..........................................................................................2

II.

ການຄົ້ນຄວ້າເອກະສານ..........................................................................................3

2.1. ສະພາບລວມຂອງແຂວງ ເມືອງ ແລະ ບ້ານ..................................................3

2.1.1. ສະພາບລວມຂອງແຂວງອັດຕະປື..................................................3

2.1.2. ສະພາບລວມຂອງເມືອງຊານໄຊ ..................................................3

2.1.3. ສະພາບລວມຂອງບ້ານດງກກາດ ແລະ ບ້ານໃໝ່..................................3

1. ທີ່ຕັ້ງ ແລະ ປະຫວັດຄວາມເປັນມາຂອງບ້ານດາກກຽດ..................................4

2. ທີ່ຕັ້ງ ແລະ ປະຫວັດຄວາມເປັນມາຂອງບ້ານໃໝ່..................................5

2.1.4. ສະພາບດິນຟ້າອາກາດຂອງແຂວງອັດຕາປື..................................5

2.2. ນິຍາມ ແລະ ແນວຄວາມຄິດກ່ຽວກັບປັດໃຈການຜະລິດ..................................5

1. ນິຍາມ..........................................................................................5

2. ຄວາມຄິດ..........................................................................................6

III. ອຸປະກອນ ແລະ ວິທີການ ..........................................................................................7

3.1. ອຸປະກອນ..........................................................................................7

3.2. ວິທີການ..........................................................................................7

3.2.1. ສະຖານທີ່ການສຶກສາ..........................................................................................7

3.2.2. ໄລຍະເວລາໃນການສຶກສາ....................................................................7
3.2.3. ຂອບເຂດ ແລະ ຂໍ້ຈຳກັດຂອງສຶກສາ.........................................................7
3.2.4. ວິທີການເກັບກຳຂໍ້ມູນ...........................................................................8
1. ຂໍ້ມູນມືສອງ..........................................................................................8
2. ຂໍ້ມູນມືໜຶ່ງ...........................................................................................8
IV. ຜົນໄດ້ຮັບ.................................................................................................10
4.1. ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບຄອບຄົວ......................................................10
4.1.1. ລັກສະນະຕ່ອງໂສ້ປັດໃຈນຳເຂົ້າການຜະລິດລະດັບຄອບຄົວເຫຼືອກິນ.............10
1. ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນດິນ/ນ້ຳຂອງລະດັບຄອບຄົວເຫຼືອກິນ.....................10
2. ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນສິນເຊື່ອຂອງລະດັບຄອບຄົວເຫຼືອກິນ....................10
3. ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນອຸປະກອນຂອງລະດັບຄອບຄົວເຫຼືອກິນ.................11
4. ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນແຮງງານຂອງລະດັບຄອບຄົວເຫຼືອກິນ...................12
4.1.2. ລັກສະນະຕ່ອງໂສ້ປັດໃຈນຳເຂົ້າການຜະລິດລະດັບຄອບຄົວກຸ້ມກິນ...............13
1.ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນດິນ/ນ້ຳຂອງລະດັບຄອບຄົວກຸ້ມກິນ.......................13
2. ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນສິນເຊື່ອຂອງລະດັບຄອບຄົວກຸ້ມກິນ......................13
3. ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນອຸປະກອນຂອງລະດັບຄອບຄົວກຸ້ມກິນ...................14
4. ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນແຮງງານຂອງລະດັບຄອບຄົວກຸ້ມກິນ....................14
4.1.2. ລັກສະນະຕ່ອງໂສ້ປັດໃຈນຳເຂົ້າການຜະລິດລະດັບຄອບຄົວບໍ່ກຸ້ມກິນ............16
1. ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນດິນ/ນ້ຳຂອງລະດັບຄອບຄົວບໍ່ກຸ້ມກິນ....................16
2. ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນສິນເຊື່ອຂອງລະດັບຄອບຄົວບໍ່ກຸ້ມກິນ...................16
3. ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນອຸປະກອນຂອງລະດັບຄອບຄົວບໍ່ກຸ້ມກິນ................17
4. ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນແຮງງານຂອງລະດັບຄອບຄົວບໍ່ກຸ້ມກິນ..................17
4.2. ຕ່ອງໂສ້ສິ່ງນຳເຂົ້າໃນການຜະລິດໃນແຕ່ລະກິດຈະກຳ......................................18
4.2.1. ຕ່ອງໂສ້ປັດໃຈນຳເຂົ້າກິດຈະກຳການຜະລິດຂອງຄອບຄົວເຫຼືອກິນ.................19
1. ປັດໃຈນຳເຂົ້າກິດຈະກຳການປູກເຂົ້ານາປີຂອງຄອບຄົວເຫຼືອກິນ.......................19
2. ປັດໃຈນຳເຂົ້າກິດຈະກຳການປູກເຂົ້າໄຮ່ຂອງຄອບຄົວ ເຫຼືອກິນ........................20
3. ປັດໃຈນຳເຂົ້າກິດຈະກຳການປູກເຂົ້າສາລີຂອງຄອບຄົວເຫຼືອກິນ.......................21
4. ປັດໃຈນຳເຂົ້າກິດຈະກຳການປູກຜັກກາດຂອງຄອບຄົວເຫຼືອກິນ........................23
5. ປັດໃຈນຳເຂົ້າກິດຈະກຳການລ້ຽງງົວ, ຄວາຍຂອງຄອບຄົວເຫຼືອກິນ....................24
6. ປັດໃຈນຳເຂົ້າກິດຈະກຳການລ້ຽງແບ້ຂອງຄອບຄົວເຫຼືອກິນ.............................25
7. ປັດໃຈນຳເຂົ້າກິດຈະກຳການລ້ຽງໝູຂອງຄອບຄົວເຫຼືອກິນ..............................26
8. ປັດໃຈນຳເຂົ້າກິດຈະກຳການລ້ຽງສັດປີກຂອງຄອບຄົວເຫຼືອກິນ........................28

4.2.1. ຕ່ອງໂສ້ປັດໃຈນໍາເຂົ້າກິດຈະກໍາການຜະລິດຂອງຄອບຄົວກຸ້ມກິນ..................29
1. ປັດໃຈນໍາເຂົ້າກິດຈະກໍາການປູກເຂົ້ານາປີຂອງຄອບຄົວກຸ້ມກິນ........................29
2. ປັດໃຈນໍາເຂົ້າກິດຈະກໍາການປູກເຂົ້າໄຮ່ຂອງຄອບຄົວກຸ້ມກິນ...........................31
3. ປັດໃຈນໍາເຂົ້າກິດຈະກໍາການປູກເຂົ້າສາລີຂອງຄອບຄົວກຸ້ມກິນ........................32
4. ປັດໃຈນໍາເຂົ້າກິດຈະກໍາການລ້ຽງງົວ, ຄວາຍຂອງຄອບຄົວກຸ້ມກິນ.....................33
5. ປັດໃຈນໍາເຂົ້າກິດຈະກໍາການລ້ຽງແບ້ຂອງຄອບຄົວກຸ້ມກິນ..............................34
6. ປັດໃຈນໍາເຂົ້າກິດຈະກໍາການລ້ຽງໝູຂອງຄອບຄົວກຸ້ມກິນ...............................36
7. ປັດໃຈນໍາເຂົ້າກິດຈະກໍາການລ້ຽງສັດປີກຂອງຄອບຄົວກຸ້ມກິນ..........................37
4.2.1. ຕ່ອງໂສ້ປັດໃຈນໍາເຂົ້າກິດຈະກໍາການຜະລິດຂອງຄອບຄົວບໍ່ກຸ້ມກິນ................39
1. ປັດໃຈນໍາເຂົ້າກິດຈະກໍາການປູກເຂົ້ານາປີຂອງຄອບຄົວບໍ່ກຸ້ມກິນ......................39
2. ປັດໃຈນໍາເຂົ້າກິດຈະກໍາການລ້ຽງງົວ, ຄວາຍຂອງຄອບຄົວບໍ່ກຸ້ມກິນ...................40
3. ປັດໃຈນໍາເຂົ້າກິດຈະກໍາການລ້ຽງແບ້ຂອງຄອບຄົວບໍ່ກຸ້ມກິນ............................41
4. ປັດໃຈນໍາເຂົ້າກິດຈະກໍາການລ້ຽງໝູຂອງຄອບຄົວບໍ່ກຸ້ມກິນ.............................43
5. ປັດໃຈນໍາເຂົ້າກິດຈະກໍາການລ້ຽງສັດປີກຂອງຄອບຄົວບໍ່ກຸ້ມກິນ.......................44

4.3.ຊະນິດປັດໃຈນໍາເຂົ້າທີ່ນໍາມາຈາກພາຍນອກ ແລະ ຢູ່ໃນພາຍໃນທີ່ຊາວກະສິກອນ ນໍາໃຊ້.

4.4. ສົມທຽບຄວາມແຕກຕ່າງການໄດ້ມາປັດໃຈນໍາເຂົ້າການຜະລິດໃນລະດັບຄອບຄົວ..46
4.5.ສົມທຽບຄວາມແຕກຕ່າງການໄດ້ມາປັດໃຈນໍາເຂົ້າການຜະລິດຂອງກິດຈະກໍາ.........47
V. ວິຈານ..........................................................................................................49
VI. ສະຫຼຸບ.........................................................................................................51
VII. ຂໍ້ແນະນໍາ.....................................................................................................52
VIII. ເອກະສານອ້າງອີງ.........................................................................................53
IX. ເອກະສານຊ້ອນທ້າຍ.......................................................................................54

# ສາລະບານຕາຕະລາງ

# (List of Tables)

ຕາຕະລາງ ໜ້າ

1. ສົມທຽບຄວາມແຕກຕ່າງການໄດ້ມາປັດໃຈນຳເຂົ້າການຜະລິດໃນລະດັບຄອບຄົວ.......................................................................................................46

2. ສົມທຽບຄວາມແຕກຕ່າງການໄດ້ມາປັດໃຈນຳເຂົ້າການຜະລິດທີ່ຊາວກະສິກອນນຳໃຊ້ເຂົ້າໃນແຕ່ລະກິດຈະກຳ.........................................................................47

# ສາລະບານຮູບ

# (List of figures)


ຮູບ ໜ້າ

1. ແຜນທີ່ບ້ານດາກກຽດ.....4
2. ແຜນທີ່ບ້ານໃໝ່.....5
3. ແຜນວາດການວິເຄາະຂໍ້ມູນ.....9
4. ແຜນວາດຕ່ອງໂສ້ປັດໃຈນຳເຂົ້າລະດັບຄອບຄົວເຫຼືອກິນ.....12
5. ແຜນວາດຕ່ອງໂສ້ປັດໃຈນຳເຂົ້າລະດັບຄອບຄົວກຸ້ມກິນ.....15
6. ແຜນວາດຕ່ອງໂສ້ປັດໃຈນຳເຂົ້າລະດັບຄອບຄົວບໍ່ກຸ້ມກິນ.....17
7. ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກເຂົ້ານາປີຂອງຄອບຄົວເຫຼືອກິນ.....20
8.ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກເຂົ້າໄຮ່ຂອງຄອບຄົວເຫຼືອກິນ.....21
9.ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກເຂົ້າສາລີຂອງຄອບຄົວເຫຼືອກິນ.....22
10. ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກຜັກກາດຂອງຄອບຄົວເຫຼືອກິນ.....23
11. ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງງົວ, ຄວາຍຂອງຄອບຄົວເຫຼືອກິນ.....25
12. ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງແບ້ຂອງຄອບຄົວເຫຼືອກິນ.....26
13. ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງໝູຂອງຄອບຄົວເຫຼືອກິນ.....27
14 ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງສັດປີກຂອງຄອບຄົວເຫຼືອກິນ.....29
15.ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກເຂົ້ານາປີຂອງຄອບຄົວກຸ້ມກິນ.....30
16. ແຜນວາດຕ່ອງໂສ້ການປູກເຂົ້າໄຮ່ຂອງຄອບຄົວກຸ້ມກິນ.....31
17. ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກສາລີຂອງຄອບຄົວກຸ້ມກິນ.....33
18.ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງງົວ,ຄວາຍຂອງຄອບຄົວກຸ້ມກິນ.....34
19.ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງແບ້ຂອງຄອບຄົວກຸ້ມກິນ.....35
20.ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງໝູຂອງຄອບຄົວກຸ້ມກິນ.....37
21.ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງສັດປີກຂອງຄອບຄົວກຸ້ມກິນ .....38
22. ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກເຂົ້ານາປີຂອງຄອບຄົວບໍ່ກຸ້ມກິນ.....40
23.ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງຄວາຍຂອງຄອບຄົວບໍ່ກຸ້ມກິນ.....41
24.ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງແບ້ຂອງຄອບຄົວບໍ່ກຸ້ມກິນ.....42
25.ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງໝູຂອງຄອບຄົວບໍ່ກຸ້ມກິນ.....44
26. ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງສັດປີກຂອງຄອບຄົວບໍ່ກຸ້ມກິນ.....45
27. ການປູກເຂົ້ານາປີ.....55

28. ການປູກສາລີ.......................................................................................55
29.  ການລ້ຽງສັດປີກ .................................................................................55
30. ການລ້ຽງງົວ, ຄວາຍ..............................................................................55
31. ການລ້ຽງແບ້........................................................................................56
32.  ການລ້ຽງໝູ.........................................................................................56
33. ອຸປະກອນໃນການຜະລິດ.......................................................................56

# ຄຳອະທິບາຍສັນຍາລັກ ແລະ ອັກສອນຫຍໍ້
# (Symbols and Abbreviations)

## ຄຳອະທິບາຍສັນຍາລັກ

% = ສ່ວນຮ້ອຍ

/ = ຕໍ່

C° = ອົງສາເຊ

°t = ອຸ່ນຫະພູມ

' = ລິບດາ

\- = ຫາ

° = ອົງສາ

●——● ໝາຍເຖິງໄດ້ຊື້ເປັນເງິນສົດ

●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

▬▬ ໝາຍເຖິງເສັ້ນແບ່ງເຂດຂອງແຕ່ລະປັດໃຈ

## ອັກສອນຫຍໍ້

ດ/ລ = ລຳດັບ

ກມ = ກິໂລແມັດ

ມ = ແມັດ

ກມ$^2$ = ກິໂລຕາແມັດ

ມມ = ມີລີແມັດ

ຮຕ = ເຮັກຕາ

ອສບ = ອາສາສະໝັກສັດຕະວະແພດບ້ານ

ສສທວຽດນາມ = ສາທາລະນະລັດສັງຄົມນິຍົມຫວຽດນາມ

ກສມ = ກະສິກຳເມືອງ

ກສຂ = ກະສິກຳແຂວງ

## ອັກສອນຫຍໍ້ພາສາອັງກິດ

IFAD = International Fund for Agricultural Development

LEAP = Laos Extension for Agriculture Project

# I. ບົດນຳ

# (Introduction)

ພັກ ແລະ ລັດຖະບານຖືເອົາການພັດທະນາດ້ານກະສິກຳເປັນແຜນງານບຸລິມະສິດອັນດັບໜຶ່ງ ເພື່ອເຮັດໃຫ້ປະເທດຫຼຸດພົ້ນອອກຈາກສະຖະນາພາບ ການເປັນປະເທດດ້ອຍພັດທະນາໃນປີ 2020, ຈິ່ງໄດ້ມີແນວທາງພັດທະນາກະສິກຳເພື່ອຍົກສູງສະມັດຕະພາບຂອງຜົນຜະລິດໃຫ້ດີຂື້ນ ແລະ ຜະລິດເປັນສິນຄ້າເຮັດໃຫ້ປະຊາຊົນມີຊີວິດການເປັນຢູ່ທີ່ດີຂື້ນ. ການທີ່ຈະປັບປຸງການຜະລິດແມ່ນ ພົບຄວາມຫຍຸ້ງຍາກຫຼາຍເນື່ອງຈາກວ່າ ຊາວກະສິກອນແຕ່ລະປະເພດມີຄວາມສາມາດເຂົ້າຫາປັດໃຈນຳເຂົ້າໃນການຜະລິດທີ່ແຕກຕ່າງກັນ ແລະ ທ່າແຮງໃນການຜະລິດກະສິກຳຂອງເຂົາເຈົ້າກໍ່ບໍ່ຄືກັນແຕ່ເຖິງຢ່າງໃດກໍ່ຕາມບັນຫາທີ່ຊາວກະສິກອນພົບແມ່ນຄ້າຍຄືກັນເຊັ່ນ: ປັດໃຈນຳເຂົ້າໃນການຜະລິດພືດ ແລະ ການລ້ຽງສັດ, ບັນຫາຕະຫຼາດ, ການສະໜອງຂໍ້ມູນຂ່າວສານດ້ານປັດໃຈນຳເຂົ້າ, ເຕັກນິກການປູກພືດ ແລະ ການລ້ຽງສັດແມ່ນຍັງບໍ່ທັນທົ່ວເຖິງ. ສ່ວນເນື້ອທີ່ການຜະລິດແມ່ນຍັງມີຂໍ້ຈຳກັດເນື້ອທີ່ໜ້ອຍ. ແຮງງານທີ່ຊາວກະສິກອນນຳໃຊ້ໃນການຜະລິດກໍແມ່ນຍັງອາໄສແຮງງານພາຍໃນຄອບຄົວ ແລະ ແຮງງານແລກປ່ຽນ. ສຳລັບຕົ້ນທຶນທີ່ນຳໃຊ້ເຂົ້າໃນການຜະລິດແມ່ນຍັງບໍ່ທັນພຽງພໍ. ບັນຫາເຫຼົ່ານີ້ມີຜົນກະທົບຕໍ່ຊາວ ກະສິກອນ ຍ້ອນມີຄວາມຫຍຸ້ງຍາກໃນການໄດ້ປັດໃຈນຳເຂົ້າໃນການຜະລິດເຊັ່ນ: ອຸປະກອນຕ່າງໆ, ສິນເຊື່ອ, ຂໍ້ມູນຂ່າວສານ, ປັດໃຈນຳເຂົ້າທີ່ເປັນເຄມີ ປຸ໋ຍ, ຢາປົວພະຍາດສັດ, ຢາປ້ອງກັນ ປັດໃຈນຳເຂົ້າທີ່ບໍ່ເປັນເຄມີ ແນວພັນພືດ, ແນວພັນສັດ, ອາຫານສັດ ແລະ ການບໍລິການຕ່າງໆຍັງເປັນຂໍ້ຈຳກັດໃນການຜະລິດຂອງຊາວກະສິກອນ ເພາະວ່າໃນການປັບປຸງລະບົບການຜະລິດກະສິກຳໃດໜຶ່ງມັນຮຽກຮ້ອງໃຫ້ມີການນຳໃຊ້ປັດໃຈນຳເຂົ້າການຜະລິດທີ່ເໝາະສົມກັບສະພາບຕົວຈິງທີ່ຊາວກະສິກອນຜະລິດເນື່ອງຈາກວ່າຊາວກະສິກອນມີທ່າແຮງທີ່ບໍ່ຄືກັນ ແລະ ບໍ່ພົບບັນຫາອັນດຽວກັນຈຶ່ງເຮັດໃຫ້ເຂົາເຈົ້າເຂົ້າຫາແຫຼ່ງປັດໃຈນຳເຂົ້າໄດ້ຍາກ.

ໃນໄລຍະຜ່ານມາແມ່ນມີຫລາຍຫົວຂໍ້ທີ່ໄດ້ສຶກສາລົງເລິກກ່ຽວກັບຕ່ອງໂສ້ການຕະຫຼາດທີ່ພົວພັນກັບການຜະລິດ, ການແປຮູບ, ຕະຫຼາດ ແລະ ຜູ້ບໍລິໂພກແຕ່ຍັງບໍມີການສຶກສາທີ່ລົງເລິກເຖິງຕ່ອງໂສ້ປັດໃຈນຳເຂົ້າການຜະລິດຂອງຊາວກະສິກອນ ດັ່ງນັ້ນຕ່ອງໂສ້ປັດໃຈການຜະລິດຈຶ່ງເປັນປັດໃຈໜຶ່ງທີ່ສຳຄັນສຳລັບການ ຂະຫຍາຍຕົວທາງດ້ານການຜະລິດກະສິກຳເພື່ອໃຫ້ບັນລຸເປົ້າໝາຍການຜະລິດຈາກແບບກຸ້ມກິນໃຫ້ກາຍເປັນສິນຄ້າເພື່ອສ້າງລາຍຮັບຂອງຄອບຄົວຊາວກະສິ ກອນໃຫ້ດີຂື້ນເທື່ອລະກ້າວ.

## ຈຸດປະສົງ

1. ສຶກສາຕ່ອງໂສ້ປັດໃຈນໍາເຂົ້າການຜະລິດຂອງຊາວກະສິກອນ

2. ສຶກສາບັນດາຕ່ອງໂສ້ສິ່ງນໍາເຂົ້າຂອງກິດຈະກໍາການຜະລິດຕ່າງໆທີ່ຊາວກະສິກອນປະຕິບັດ

3. ສົມທຽບຄວາມແຕກຕ່າງປັດໃຈນໍາເຂົ້າການຜະລິດໃນລະດັບຄອບຄົວ ແລະ ລະດັບກິດຈະກໍາຂອງຄອບຄົວ

# II.ພາກຄົ້ນຄວ້າເອກະສານ

# (Literature review)

## 2.1. ສະພາບລວມຂອງແຂວງ, ເມືອງ ແລະ ບ້ານ

### 2.1.1. ສະພາບລວມຂອງແຂວງອັດຕະປື

ແຂວງອັດຕະປືເປັນແຂວງໜຶ່ງທີ່ຕັ້ງຢູ່ພາກໃຕ້ສຸດຂອງປະເທດລາວ ເຊິ່ງມີຊາຍແດນຕິດຈອດກັບທິດຕ່າງໆຄື:

- ທິດໃຕ້ຕິດກັບປະເທດກຳປູເຈຍ.
- ທິດເໜືອຕິດກັບເມືອງລະມາມ, ແຂວງເຊກອງ ແລະ ເມືອງປາກຊອ່ງແຂວງຈຳປາສັກ.
- ທິດຕາເວັນອອກຕິດກັບປະເທດຫວຽດນາມ.
- ທິດຕາເວັນຕົກຕິດກັບເມືອງປະທຸມພອນແຂວງຈຳປາສັກ.

ແຂວງອັດຕະປື ມີພົນລະເມືອງທັງໝົດ 115.097 ຄົນ ປະກອບດ້ວຍ 11 ຊົນເຜົ່າໃຫ່ຍ ຄື: ຊົນເຜົ່າລາວລຸ່ມກວມເອົາ 39% ຂອງພົນລະເມືອງທັງໝົດ, ຊົນເຜົ່າຍູລູກວມເອົາ 4,6%, ຊົນເຜົ່າຕະລຽນກວມເອົາ 8,8%, ຊົນເຜົ່າຕະໂອ້ຍ 0,4%, ເຍຼົາ (ລະແວ) 16,5%, ຊົນເຜົ່າອາລັກ 49%, ຊົນເຜົ່າໂອຍ 16,7%, ກະລຽນ 0,2%, ຊົນເຜົ່າເຈັງ 6,6%, ຊົນເຜົ່າຍະເຫີນ 0,6% ແລະ ຊົນເຜົ່າຕະດັງ 0,5% (ຜົນຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສນະຄອນຫຼວງວຽງຈັນ ມີນາ 2007). ມີເນື້ອທີ່ທັງໝົດ 10.032 ກມ$^2$ ໃນນັ້ນມີເນື້ອທີ່ປ່າໄມ້ 728.000 ຮຕ, ເນື້ອທີ່ທົ່ງພຽງ 180.000 ຮຕ, ເນື້ອທີ່ອື່ນໆມີ 124.000 ຮຕ, ປະກອບມີ 5 ຕົວເມືອງ ແບ່ງອອກເປັນ 31 ກຸ່ມ ບ້ານ, 197 ບ້ານ, ມີ 19.779 ຄອບຄົວ, ຄອບຄົວທຸກຍາກມີ 1.471 ຄອບຄົວ, ກວມເອົາ 27%, ມີຄວາຍທັງໝົດ 47.253 ໂຕ, ມີງົວ 14.588 ໂຕ, ໝູ 26.183 ໂຕ, ແບ້ 3.060 ໂຕ ແລະ ສັດປີກ 419.662 ໂຕ, (ບົດສະຫຼຸບປະຈຳປີ 07-08 ແລະ ທິດທາງແຜນການພັດທະນາສົກປີ 2008 - 2009).

### 2.1.2. ສະພາບລວມຂອງເມືອງຊານໄຊ

ເມືອງຊານໄຊຕັ້ງຢູ່ທາງທິດຕາເວັນອອກສຽ່ງເໜືອຂອງແຂວງອັດຕະປື ແລະ ນອນຢູ່ໃນ 5 ຕົວເມືອງທີ່ຂຶ້ນກັບແຂວງອັດຕະປື ມີເນື້ອທີ່ທັງໝົດ 3.948 ກມ$^2$ ແລະ ມີເນື້ອທີ່ເຂດພູດອຍ 819,5 ກມ$^2$ ມີເນື້ອທີ່ຜະລິດເຂົ້າທັງໝົດ 2.751 ຮຕ, ໃນນັ້ນເນື້ອທີ່ນາ 1.400 ຮຕ ຜົນຜະລິດທັງໝົດ 2.800 ໂຕນ ສະມັດຕະພາບສະເລ່ຍ 2 ໂຕນ/ຮຕ, ເນື້ອທີ່ໄຮ່ 1.778 ຮຕ ຜົນຜະລິດທັງໝົດ 2.667 ໂຕນ ສະມັດຕະພາບສະເລ່ຍ 1,5 ໂຕນ/ຮຕ, ນາແຊງ 28,6 ຮຕ ສະມັດຕະພາບສະເລ່ຍ 2,8 ໂຕນ/ຮຕ, ມີຄວາຍທັງໝົດ 3.430 ໂຕ, ມີງົວ 1.418 ໂຕ, ໝູ 4.089 ໂຕ, ແບ້ 716 ໂຕ, ສັດປີກ 24.266 ໂຕ, ມີພົນລະເມືອງທັງໝົດ 16.976 ຄົນ, ຍິງ 8.683 ຄົນ, ມີ 3.303 ຄອບຄົວ, ມີ 2.247 ຄົວເຮືອນ ປະກອບມີ 5 ຊົນເຜົ່າຄື: ຊົນເຜົ່າລະແວກວມເອົາ 7,12%,

ຊົນເຜົ່າອາລັກ 41,59%, ຊົນເຜົ່າຕາໜ້ຽງ 39,92%, ເຜົ່າແຢະ 10,64%, ເຜົ່າລາວ 0,74%. ປະກອບມີ 5 ກຸ່ມ ບ້ານ ເຊິ່ງມີຊາຍແດນຕິດກັບບັນດາເມືອງ ແລະ ແຂວງຕ່າງໆຄື:

- ທິດເໜືອຕິດກັບເມືອງດາກຈຶງ ແລະ ເມືອງລະມາມແຂວງເຊກອງ.
- ທິດໃຕ້ຕິດກັບເມືອງພູວົງ ແລະ ເມືອງໄຊເສດຖາ.
- ທິດຕາເວັນຕົກຕິດກັບເມືອງໄຊເສດຖາ.
- ທິດຕາເວັນອອກຕິດກັບເມືອງດັກໄລແຂວງກອນຕູມແຫ່ງສສຫວຽດນາມ 105 ກມ

ພູມສັນຖານຂອງເມືອງຈັດຢູ່ໃນລະດັບສູງຖ້າທຽບໃສ່ໜ້ານ້ຳທະເລສູງສຸດ 1.200 - 1.512 ແມັດ, ຕ່ຳສຸດ 300 ແມັດ. ອີງໃສ່ລັກສະນະພູມສັນຖານດັ່ງກ່າວ ສາມາດ ຈັດແບ່ງເມືອງຊານໄຊ ອອກເປັນ 2 ເຂດຄື: ເຂດເນີນສູງ ແລະ ເຂດທົ່ງພຽງເປັນເຂດທີ່ຢູ່ທາງທິດໃຕ້ຂອງເມືອງເຊິ່ງ ກວມເອົາ 10% ຂອງເນື້ອທີ່ທັງໝົດມີເນື້ອທີ່ເຂດທົ່ງພຽງ 1.128 ກມ$^2$. ທັງສອງເຂດດັ່ງກ່າວ ນີ້ຊາວກະສິກອນໄດ້ມີການຜະລິດຫຼາຍຢ່າງເຊັ່ນ : ການປູກເຂົ້ານາປີ, ປູກເຂົ້າໄຮ່, ປູກສາລີ, ປູກ ຜັກກາດ ແລະ ລ້ຽງງົວ, ຄວາຍ, ແບ້, ໝູ , ສັດປີກ.

**2.1.3. <u>ສະພາບລວມຂອງບ້ານດາກກຽດ ແລະ ບ້ານໃໝ່</u>**

1. <u>ທີ່ຕັ້ງ ແລະ ປະຫວັດຄວາມເປັນມາຂອງບ້ານດາກກຽດ</u>

ກ. ທີ່ຕັ້ງຂອງບ້ານດາກກຽດ

ບ້ານດາກກຽດຕັ້ງຢູ່ທາງທິດຕາເວັນຕົກສ່ຽງໃຕ້ຂອງ ຕົວເມືອງປະມານ 6 ກມ, ຕັ້ງຢູ່ເສັ້ນຂະໜານທີ່ N07̊ 00ˈ 09" ເສັ້ນແວງ E14̊55ˈ37" ສູງຈາກລະດັບໜ້ານ້ຳທະ ເລ 142 ມ.

- ທິດເໜືອຕິດກັບສາຍພູກະໂຕງ.
- ທິດໃຕ້ຕິດກັບເຂດຄຸ້ມຄອງຂອງບ້ານມີໄຊ.
- ທິດຕາເວັນອອກ ຕິດກັບເຂດຄຸ້ມຄອງຂອງບ້ານມີໄຊ.
- ທິດຕາເວັນຕົກຕິດກັບເຂດຄຸ້ມຄອງຂອງເມືອງຊານໄຊ.




ຮູບທີ1: ແຜນທີ່ບ້ານດາກກຽດ

ຂ. ປະຫວັດຄວາມເປັນມາຂອງບ້ານດາກກຽດ

ເບື້ອງຕົ້ນປະຊາຊົນຢູ່ບ້ານດັ່ງກ່າວແມ່ນຍ້າຍມາແຕ່ບ້ານອາລັກ ແລະ ປະຊາຊົນກໍ່ ໄດ້ຍ້າຍຖິ່ນຖານໄປອາໃສຢູ່ຫຼາຍບ້ານ ແລະ ຫຼັງຈາກນັ້ນຕໍ່ມາລັດຖະບານໄດ້ມີການເຕົ້າໂຮມ ບ້ານນ້ອຍໃຫ້ກາຍເປັນບ້ານໃຫ່ຍ ຈົນມາຮອດປີ 2001 ປະຊາຊົນໃນເຂດດັ່ງກ່າວມາຕັ້ງຖິ່ນຖານ ຢ່າງຖາວອນຢູ່ທີ່ບ້ານດາກກຽດຈົນມາຮອດປັດຈຸບັນ. ລັດຖະບານໄດ້ມີການແບ່ງດິນແບ່ງປ່າ ເພື່ອໃຫ້ເຂົາເຈົ້ານຳໃຊ້ເຂົ້າໃນການຜະລິດກະສິກຳ.

ຄ. ທາງດ້ານເສດຖະກິດ - ສັງຄົມຂອງບ້ານດາກກຽດ

ບ້ານດາກກຽດມີພົນລະເມືອງທັງໝົດ 300 ຄົນ, ຍິງ 152 ຄົນ, ຊາຍ 148 ຄົນ ເນື້ອທີ່ການຜະລິດມີດິນນາເນື້ອທີ່ທັງໝົດ 31,6 ຮຕ, ເປັນຊົນເຜົ່າອາລັກ (ຖືສາສະໜາຜີ). ເນື້ອທີ່ດິນກະ ສິກຳ 128 ຮຕ, ເນື້ອທີ່ທົ່ງລ້ຽງສັດ 84 ຮຕ, ເນື້ອທີ່ປ່າຜະລິດ 673,4 ຮຕ, ເນື້ອທີ່ປ ່າປ້ອງກັນ 316,4 ຮຕ, ມີຈຳນວນຄອບຄົວ 52 ຄອບຄົວ.

2. <u>ທີ່ຕັ້ງແລະປະຫວັດຄວາມເປັນມາຂອງບ້ານໃໝ່</u>

ທີ່ຕັ້ງຂອງບ້ານໃໝ່ຕັ້ງຢູ່ທາງທິດຕາເວັນອອກສ່ຽງ ໃຕ້ຂອງຕົວເມືອງປະມານ 6 ກມ$^2$ ຕັ້ງຢູ່ເສັ້ນຂະ ໜານ N14° 51' 26" ເສັ້ນແວງ E107° 40' 22" ສູງຈາກ ລະດັບໜ້ານ້ຳທະເລປະມານ 12 ມ ມີຊາຍແດນຕິດຈອດຄື:

- ທິດເໜືອຕິດກັບເຂດຄຸ້ມຄອງຂອງບ້ານເພຍແກ້ວ ແລະ ບ້ານສົມບູນ.
- ທິດໃຕ້ຕິດກັບເຂດຄຸ້ມຄອງຂອງບ້ານແກ້ງໃຫຍ່.
- ທິດຕາເວັນອອກຕິດກັບເຂດຄຸ້ມຄອງຂອງບ້ານຕາດກຸ່ມ.
- ທິດຕາເວັນຕົກຕິດກັບເຂດຄຸ້ມຄອງຂອງບ້ານເພຍແກ້ວ.




ຮູບທີ2: ແຜນທີ່ບ້ານໃໝ່

ກ. ປະຫວັດຄວາມເປັນມາຂອງບ້ານໃໝ່

ເບື້ອງຕົ້ນປະຊາຊົນແມ່ນຍ້າຍມາຈາກຫຼາຍບ້ານຫຼາຍເຜົ່າເຊັ່ນ : ເຜົ່າລະແວ, ເຜົ່າລາວ ແລະ ເຜົ່າເຈັງ ໄດ້ພາກັນມາຕັ້ງບ້ານແຕ່ມເຊປີ 1984 ຈົນມາຮອດປັດຈຸບັນ ຍ້ອນປະຊາຊົນເຫັນວ່າພື້ນທີ່ດັ່ງກ່າວແມ່ນເໝາະສົມກັບບ່ອນທຳການຜະລິດ ປູກຝັງ ແລະ ລ້ຽງສັດເຂົາເຈົ້າຈິ່ງມາຕັ້ງຖິ່ນຖານຢ່າງຖາວອນ.

ຂ. ທາງດ້ານເສດຖະກິດ - ສັງຄົມ

ພົນລະເມືອງທັງໝົດຂອງບ້ານໃໝ່ມີ 558 ຄົນ, ຍິງ 282 ຄົນ, 276 ຄົນ, ມີເນື້ອທີ່ທັງໝົດ 4500 ຮຕ, ເນື້ອທີ່ນາ 96,3 ຮຕ, ດິນສວນ 5,7 ຮຕ, ມີຈຳນວນຄອບຄົວ 112 ຄອບຄົວ ແລະ ປະຊາຊົນໃນເຂດດັ່ງກ່າວເປັນຊົນເຜົ່າລະແວຖືສາສະໜາຜີ.

**2.1.4. ສະພາບດິນຟ້າອາກາດຂອງແຂວງອັດຕະປື**

ແຂວງອັດຕະປື ເປັນແຂວງໜຶ່ງທີ່ຕັ້ງຢູ່ພາກໃຕ້ສຸດຂອງປະເທດລາວ ມີອຸນຫະພູມສະເລ່ຍ/ປີ 27,1 °c, ປະລິມານນ້ຳຝົນສະເລ່ຍ/ປີ 2244,1 ມມ, ຄວາມຊຸ່ມສະເລ່ຍ/ປີ 72% ແລະ ຄວາມດັນອາຍນ້ຳ ສະເລ່ຍ/ປີ25,7° (ຂະແໜງອຸຕຸແຂວງອັດຕະປື, 2008).

## 2.2. ນິຍາມ ແລະ ແນວຄວາມຄິດກ່ຽວກັບປັດໃຈການຜະລິດ

### 1. ນິຍາມ

ປັດໃຈການຜະລິດແມ່ນແຮງງານ, ທີ່ດິນ, ທຶນ, ອຸປະກອນຮັບໃຊ້ພາຫະນະການຜະລິດ ຊະ ນິດຕ່າງໆແນວພັນພືດ, ແນວພັນສັດທີ່ໃຊ້ເຂົ້າໃນການຜະລິດກະສິກຳ (ປູກພືດ, ລ້ຽງສັດ) ທີ່ໃຊ້ໃນພື້ນທີ່ ແລະ ໄລຍະເວລາໃດໜຶ່ງໂດຍແມ່ນຊາວກະສິກອນເປັນຜູ້ດຳເນີນງານ ແລະ ເປັນຜູ້ຊົມໃຊ້ໃນການຜະລິດເພື່ອໃຫ້ບັນລຸຈຸດປະສົງ (ທອງພັນ, 2001).

ຕ່ອງໂສ້ຜະລິດຕະພັນກະສິກຳແມ່ນ ການສຶກສາບັນດາຜູ້ດຳເນີນງານທາງດ້ານເສດຖະກິດທັງໝົດທີ່ມີການພົວພັນເຊິ່ງກັນ ແລະ ກັນຢູ່ໃນຕ່ອງໂສ້, ຈາກຊາວກະສິກອນຜູ້ຜະລິດໄປເຖິງຜູ້ບໍລິໂພກໂດຍຜ່ານບັນດາບຸກຄົນກາງລະດັບຕ່າງກັນ ຫຼື ແມ່ນກະແສໝູນວຽນຂອງຜົນຜະລິດ, ເງິນ, ຂໍ້ມູນຂ່າວສານຕ່າງໆທັງໝົດ, ຈາກຜູ້ຜະລິດໄປຫາຜູ້ບໍລິໂພກ (Faber 1996).

### 2. ແນວຄວາມຄິດ

Faber (1996) ໄດ້ບັນທຶກໄວ້ວ່າ: ຕ່ອງໂສ້ການສະໜອງຜະລິດຕະພັນແມ່ນກຸ່ມຂອງຜູ້ດຳເນີນງານທາງດ້ານເສດຖະກິດ ແລະ ການພົວພັນຂອງເຂົາເຈົ້າທັງໝົດທີ່ໄດ້ປະກອບສ່ວນເຂົ້າໃນຜົນຜະລິດ, ຂະບວນການຜະລິດ, ການແຈກຢາຍ, ການບໍລິໂພກ ແລະ ເອກະລັກຂອງຕ່ອງ ໂສ້ການສະໜອງຜະລິດຕະພັນໄດ້ສ່ອງແສງເຖິງບັນດາຜູ້ປະກອບການ, ສະຖາບັນຕ່າງໆ ການດຳເນີນການ, ທິດທາງ, ຄວາມສາມາດໃນການຕໍ່ລອງ, ເຕັກໂນໂລຊີ, ຄວາມກ່ຽວເນື່ອງຂອງຜົນຜະລິດ ແລະ ການປ່ຽນແປງຂອງລາຄາຜະລິດຕະພັນອື່ນໆ.

# III. ອຸປະກອນ ແລະ ວິທີການສຶກສາ

# (Material and Methods)

## 3.1. ອຸປະກອນ

- ຂໍ້ມູນມືສອງ
- ແບບຟອມສຳພາດ
- ກອ້ງຖ່າຍຮູບ
- ລົດຈັກ
- ອຸປະກອນບັນທຶກ: ປຶ້ມ, ບິກ, ສໍ, ເຈ້ຍA4...
- ຄອມພິວເຕີ

## 3.2. ວິທີການ

### 3.2.1. <u>ສະຖານທີ່ການສຶກສາ</u>

ໃນການສຶກສາລັກສະນະຕ່ອງໂສ້ປັດໃຈນຳເຂົ້າການຜະລິດກະສິກຳຂອງຊາວກະສິກອນຄັ້ງນີ້ແມ່ນໄດ້ດຳເນີນຢູ່ທີ່ບ້ານດາກກຽດ ແລະ ບ້ານໃໝ່ ເມືອງຊານໄຊ ແຂວງອັດຕະປື.

### 3.2.2. <u>ໄລຍະເວລາໃນການສຶກສາ</u>

ການສຶກສາໃນຄັ້ງນີ້ແມ່ນໃຊ້ເວລາ 5 ເດືອນເຊິ່ງໄດ້ແບ່ງອອກເປັນ 3 ໄລຍະຄື:

- ວັນທີ 2/4/ - 22/5/2009 ແມ່ນໄລຍະກະກຽມແບບຟອມສຳພາດ ແລະ ຂຽນບົດສະເໜີໂຄງການກ່ອນລົງພາກສະໜາມ.
- ວັນທີ 23/5 - 23/6/2009 ແມ່ນໄລຍະເວລາການລົງພາກສະໜາມ ແລະ ເກັບຂໍ້ມູນ.
- ວັນທີ 24/5 - 31/8/2009 ແມ່ນໄລຍະວິໃຈຂໍ້ມູນ ແລະ ຂຽນ ບົດລາຍງານໂຄງການຈົບຊັ້ນ.

### 3.2.3. <u>ຂອບເຂດ ແລະ ຂໍ້ຈຳກັດຂອງການສຶກສາ</u>

❖ ຂອບເຂດການສຶກສາຄັ້ງນີ້ແມ່ນໄດ້ສຶກສາວິທີການຜະລິດ, ການນຳໃຊ້ປັດໃຈນຳເຂົ້າການຜະລິດຊະນິດຕ່າງໆ ໂດຍຜ່ານຂັ້ນຕອນ ຫຼື ເຄືອຂ່າຍປັດໃຈນຳເຂົ້າໃນການຜະລິດຂອງຊາວກະສິກອນ ແລະ ສາຍພົວພັນຂອງຕ່ອງໂສ້ທີ່ກ່ຽວຂ້ອງກັບປັດໃຈນຳເຂົ້າໃນການຜະລິດ ເຊິ່ງໄດ້ດຳເນີນຢູ່ທີ່ບ້ານດາກກຽດ ແລະ ບ້ານໃໝ່ ເມືອງຊານໄຊ ແຂວງອັດຕະປື.

❖ ຂໍ້ຈຳກັດການສຶກສາຕ່ອງໂສ້ປັດໃຈນຳເຂົ້າການຜະລິດ ແມ່ນບໍ່ໄດ້ໄລ່ລຽງເສດຖະກິດຂອງຄອບຄົວ, ບໍ່ໄດ້ສຶກສາຜົນກະທົບປັດໃຈການຜະລິດຂອງຊາວກະສິກອນ ໃນການລົງສຳພາດຄັ້ງນີ້ ບໍ່ສາມມາດເປັນຕົວແທນໃຫ້ທຸກຄອບຄົວໃນທົ່ວປະເທດໄດ້ ມັນເປັນພຽງຕົວຢ່າງໜຶ່ງທີ່ສະແດງໃຫ້ເຫັນລັກສະນະຕ່ອງໂສ້ປັດໃຈນຳເຂົ້າເທົ່ານັ້ນ.

### 3.2.4. ວິທີການເກັບກຳຂໍ້ມູນ

1. ຂໍ້ມູນມືສອງ

ແມ່ນບັນດາຂໍ້ມູນທີ່ໄດ້ຈາກບົດສະຫຼຸບຂອງກະຊວງ, ກົມ, ພະແນກຕ່າງໆ ແລະ ບົດລາຍງານ ວາລະສານທີ່ກ່ຽວຂ້ອງກັບຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດກະສິກຳ ເພື່ອມາປະກອບໃສ່ໃນບົດລາຍງານໂຄງການຈົບຊັ້ນຄື: ພາກຄົ້ນຄວ້າເອກະສານ ແລະ ເປັນເອກະສານອ້າງອີງ.

2. ຂໍ້ມູນມືໜຶ່ງ

ແມ່ນໄດ້ຈາກການປະຕິບັດຕົວຈິງທຸກຢ່າງຄື:

ກ. ການຄັດເລືອກບ້ານ

ແມ່ນເລືອກເອົາ 2 ບ້ານຄື: ບ້ານໃໝ່ນາກອກ ແລະ ບ້ານດາກກຽດ ເມືອງຊານໄຊ ແຂວງອັດຕະປື ຍ້ອນວ່າທາງໂຄງການເຄີຍໄດ້ໄປສົ່ງເສີມດ້ານການຜະລິດກະສິກຳ ແຕ່ຍັງບໍ່ທັນໄດ້ສຶກສາທາງດ້ານຕ່ອງໂສ້ປັດໃຈນຳເຂົ້າການຜະລິດກະສິກຳຂອງຊາວກະສິກອນຢູ່ໃນເຂດດັ່ງກ່າວ.

ຂ. ສຳພາດກ່ຽວກັບສະພາບລວມຂອງບ້ານ

ແມ່ນໄດ້ນຳໃຊ້ແບບຟອມສຳພາດທົ່ວໄປ ໂດຍມີການສຳພາດອຳນາດການປົກຄອງບ້ານ, ເຖົ້າແກ່ແນວໂຮມບ້ານເພື່ອຢາກຮູ້ທີ່ຕັ້ງຂອງບ້ານ, ປະຫວັດຄວາມເປັນມາຂອງບ້ານ, ສະ ພາບເສດຖະກິດ-ສັງຄົມ ແລະ ອື່ນໆ.

ຄ. ການຄັດເລືອກ ແລະ ຈັດລະດັບຄອບຄົວ

ການຈັດປະເພດຄອບຄົວໃນບ້ານເປົ້າໝາຍນີ້ ແມ່ນຈັດເປັນຄອບຄົວເຫຼືອກິນ,ຄອບຄົວກຸ້ມກິນ ແລະ ຄອບຄົວບໍ່ກຸ້ມກິນ ເພື່ອໃຫ້ເຂົ້າໃຈງ່າຍໃນການສຶກສາ ຈຳນວນ 2 ບ້ານ ແມ່ນມີການຈັດລະດັບຂອງຄອບຄົວຕາມແຕ່ລະສະພາບຂອງບ້ານໂດຍທີ່ໃຫ້ນາຍບ້ານ ແລະ ຊາວບ້ານເປັນຜູ້ຕັດສິນໃຈຕາມເງື່ອນໄຂທີ່ເຂົາເຈົ້າກຳນົດຂອງແຕ່ລະບ້ານ, ລວມຄອບຄົວທັງໝົດທີ່ສຳ ພາດມີ 12 ຄອບຄົວ, ຄອບຄົວເຫຼືອກິນມີ 4 ຄອບຄົວ, ຄອບຄົວກຸ້ມກິນມີ 4 ຄອບຄົວ ແລະ ຄອບຄົວບໍ່ກຸ້ມກິນມີ 4 ຄອບຄົວ ຂອງຈຳນວນຄອບຄົວທີ່ໄດ້ສຳພາດທັງໝົດ.

ງ. ການເດີນສຳຫຼວດ

ເປັນການສຳຫຼວດພື້ນທີ່ການຜະລິດກະສິກຳຂອງຊາວກະສິກອນ ແລະ ຂອບເຂດເນື້ອທີ່ຂອງບ້ານ ເພື່ອຢາກຮູ້ວ່າກິດຈະກຳການຜະລິດຂອງຊາວກະສິກອນພາຍໃນບ້ານ.

ຈ. ການລົງສຳພາດ

ແມ່ນເລີ່ມຈາກການສຳພາດສະພາບລວມຂອງແຕ່ລະຄອບຄົວ ຫຼັງຈາກນັ້ນກໍ່ໄດ້ລົງເລິກກ່ຽວກັບກິດຈະກຳຕ່າງໆ, ຊະນິດປັດໃຈນຳເຂົ້າທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳຂອງແຕ່ລະກິດຈະກຳນັ້ນມີຫຍັງແດ່, ການໄດ້ມາຂອງປັດໃຈນຳເຂົ້າຊະນິດດັ່ງກ່າວແມ່ນໄດ້ມາດ້ວຍວິທີໃດ?.

### 3.2.5. ການວິເຄາະຂໍ້ມູນ

ຂໍ້ມູນທີ່ໄດ້ຈາກການສຳພາດຕົວຈິງທັງໝົດແມ່ນໄດ້ນຳມາວິເຄາະໃນສອງລັກສະນະຄື: ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບຄົວເຮືອນ ແລະ ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບກິດຈະກຳຕ່າງໆດັ່ງແຜນວາດລຸ່ມນີ້:




ຮູບທີ3: ແຜນວາດການວິເຄາະຂໍ້ມູນ

# IV. ຜົນໄດ້ຮັບ

# (Results)

## 4.1. ຕ່ອງໂສ້ປັດໃຈນຳເຂົ້າໃນລະດັບຄອບຄົວ

ໃນການຜະລິດຂອງຄອບຄົວໃດໜຶ່ງປະກອບມີ: ດິນ/ນ້ຳ, ສິນເຊື່ອ, ທຶນຄົງທີ່ ແລະ ແຮງງານ.

- ດິນ: ໝາຍເຖິງພື້ນທີ່ທັງໝົດທີ່ຊາວກະສິກອນນຳໃຊ້.
- ນ້ຳ: ໝາຍເຖິງນ້ຳທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດພືດ ແລະ ລ້ຽງສັດ.
- ສິນເຊື່ອ: ໝາຍເຖິງທຶນທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດ.
- ແຮງງານ : ໝາຍເຖິງແຮງງານທີ່ໄດ້ຈາກຄອບຄົວ, ການຈ້າງ ຫຼື ການແລກປ່ຽນ ເພື່ອນຳໃຊ້ເຂົ້າໃນການຜະລິດ.

### 4.1.1. ລັກສະນະຕ່ອງໂສ້ປັດໃຈນຳເຂົ້າການຜະລິດໃນລະດັບຄອບຄົວເຫຼືອກິນ

ຈາກການສຳພາດຊາວກະສິກອນໃນເຂດດັ່ງກ່າວເຫັນໄດ້ວ່າຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດກະສິກຳທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດນັ້ນປະກອບມີ:

1. ຕ່ອງໂສ້ຂອງປັດໃຈນຳເຂົ້າທີ່ເປັນດິນ/ນ້ຳຂອງຄອບຄົວເຫຼືອກິນ

ດິນທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳແມ່ນມີ 2 ປະເພດຄື: ດິນທີ່ຊື້ເປັນເງິນສົດ ແລະ ດິນຂອງຕົນເອງ ຫຼື ດິນທີ່ລັດແບ່ງປັນໃຫ້.

- ດິນທີ່ຊື້ເປັນເງິນສົດແມ່ນມີດິນນາ, ດິນປຸກສ້າງ ການໄດ້ມາຂອງດິນດັ່ງກ່າວ ແມ່ນຊື້ຈາກປະຊາຊົນທີ່ຢູ່ພາຍໃນບ້ານດຽວກັນ.




- ດິນຂອງຕົນເອງ ຫຼື ດິນລັດແບ່ງປັນໃຫ້ມີ: ດິນໄຮ່, ດິນນາ, ດິນປຸກສ້າງ ແລະ ດິນສວນ.

ດັ່ງນັ້ນຈຶ່ງເຮັດໃຫ້ລັກສະນະຂອງຕ່ອງໂສ້ປັດໃຈນຳເຂົ້າຂອງດິນທັງສອງແຫຼ່ງຂ້າງເທິງນີ້ມີລັກສະນະສັ້ນ.

- ນ້ຳທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳໃນເຂດດັ່ງກ່າວແມ່ນຍັງອາໄສນ້ຳຈາກທຳມະຊາດເຊັ່ນ: ນ້ຳຝົນ, ຫ້ວຍ, ໜອງ ເນື່ອງຈາກວ່າໃນພື້ນທີ່ທຳການຜະລິດກະສິກຳນັ້ນ ແມ່ນບໍ່ມີລະບົບຊົນລະປະທານ.

2. ຕອ່ງໂສ້ປັດໃຈນຳເຂົ້າທີ່ເປັນສິນເຊື່ອຂອງຄອບຄົວເຫຼືອກິນ

- ສິນເຊື່ອທີ່ຊາວກະສິກອນກູ້ຢືມມານຳໃຊ້ເຂົ້າໃນການຜະລິດກະສິກຳນີ້ແມ່ນມີສິນເຊື່ອຈາກທະນາຄານນະໂຍບາຍ ແລະ ກອງທຶນບ້ານ, ສິນເຊື່ອຈາກທະນາຄານນະໂຍບາຍມີອັດຕາ

ດອກເບ້ຍ 7%/1ປີ ສຳລັບປູກເຂົ້ານາປີ ສ່ວນການລ້ຽງສັດແມ່ນມີອັດຕາດອກເບ້ຍ 10%/5ປີ/ 6 ລ້ານກີບ ແລະ ວິທີການຈ່າຍຄືນຂອງຊາວກະສິກອນແມ່ນຈ່າຍເປັນເງິນສົດ.

ຊາວກະສິກອນ ← ທະນະຄານນະໂຍບາຍ

➢ ສິນເຊື່ອທີ່ຊາວກະສິກອນກູ້ຢືມຈາກກອງທຶນບ້ານທີ່ນຳໃຊ້ເຂົ້າໃນການຜະລິດກະສິກຳ ນັ້ນແມ່ນມີອັດຕາດອກເບ້ຍ 6%/1 ເດືອນ, 7%/10 ເດືອນ ວິທີການຈ່າຍຄືນຂອງຊາວກະສິກອນ ແມ່ນຈ່າຍເປັນເງິນສົດ ແຕ່ວ່າເງິນກອງທຶນບ້ານນີ້ ແມ່ນມີກອງທຶນສະໜັບສະໜູນຈາກໂຄງການ IFAD ເປັນຜູ້ສະໜອງໃຫ້ ດັ່ງນັ້ນຈຶ່ງເຮັດໃຫ້ລັກສະນະຂອງຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດ ກະສິກຳມີລັກສະນະສັ້ນ ແຕ່ບໍ່ມີຄວາມເປັນເອກະລາດ ຍ້ອນວ່າຂຶ້ນກັບຫຼາຍພາກສ່ວນ ອີກຢ່າງໜຶ່ງການກູ້ຢືມເງິນແມ່ນຍັງມີຂໍ້ຈຳກັດ ສະນັ້ນຈຶ່ງເຮັດໃຫ້ຊາວກະສິກອນບາງຄອບຄົວບໍ່ສາມາດເຂົ້າເຖິງແຫຼ່ງປັດໃຈນຳເຂົ້ານີ້ໄດ້.

ຊາວກະສິກອນ ← ກອງທຶນບ້ານ ← ໂຄງການ IFAD

3. ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນອຸປະກອນຂອງຄອບຄົວເຫຼືອກິນ

ອຸປະກອນການຜະລິດກະສິກຳທີ່ຊາວກະສິກອນນຳໃຊ້ເຂົ້າໃນລະດັບຄອບຄົວແມ່ນແບ່ງອອກເປັນ 2 ປະເພດຄື: ອຸປະກອນທີ່ຊື້ເປັນເງິນສົດ ແລະ ອຸປະກອນທີ່ບໍ່ໄດ້ຊື້ເປັນເງິນສົດ.

➢ ອຸປະກອນທີ່ຊື້ເປັນເງິນສົດມີ: ຈົກ, ກ່ຽວ, ຊວ້ານ, ພ້າມີແຫຼ່ງທີ່ມາຂອງຕ່ອງໂສ້ ດັ່ງລຸ່ມນີ້:

ຊາວກະສິກອນ ← ຕະຫຼາດເມືອງຊານໄຊ ← ຕະຫຼາດປາກເຊ ← ປະເທດໄທ

➢ ອຸປະກອນທີ່ຊື້ເປັນເງິນສົດມີ: ລົດໄຖ, ໄຖ, ໝາກລີບໄຖ, ຈົກ, ກ່ຽວ ມີລັກສະນະຕ່ອງໂສ້ ແລະ ແຫຼ່ງທີ່ມາດັ່ງລຸ່ມນີ້:

ຊາວກະສິກອນ ← ຕະຫຼາດເມືອງໄຊເສດຖາ ← ຕະຫຼາດປາກເຊ ← ປະເທດໄທ

ຕ່ອງໂສ້ຂອງອຸປະກອນທີ່ຊື້ເປັນເງິນສົດທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳຂ້າງເທິງນີ້ແມ່ນມີລັກສະນະແກ່ຍາວ ແລະ ຜ່ານຫຼາຍເຄືອຂ່າຍເນື່ອງຈາກວ່າອຸປະກອນດັ່ງກ່າວນີ້ໄດ້ນຳມາແຕ່ປະເທດໄທ.

➢ ອຸປະກອນທີ່ບໍ່ໄດ້ຊື້ເປັນເງິນສົດມີ: ຈົກ, ຊ້ວານ ແຫຼ່ງທີ່ມາແມ່ນກະສິກຳເມືອງເອົາໃຫ້ ສະນັ້ນຈຶ່ງເຮັດໃຫ້ລັກສະນະຕ່ອງໂສ້ມີລັກສະນະສັ້ນ.

ຊາວກະສິກອນ ← ກະສິກຳເມືອງ

4. <u>ຕອ່ງໂສ້ປັດໃຈນຳເຂົ້າທີ່ເປັນແຮງງານຂອງຄອບຄົວເຫຼືອກິນ</u>

ແຮງງານທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳ ສ່ວນໃຫ່ຍແມ່ນນຳໃຊ້ແຮງງານພາຍໃນຄອບຄົວເຂົ້າໃນການປູກພືດ ແລະ ລ້ຽງສັດໂດຍບໍ່ມີການຈ້າງ ຫຼື ແລກປ່ຽນແຮງງານຈາກພາຍນອກເລີຍສະນັ້ນ ຈຶ່ງເຮັດໃຫ້ຕ່ອງໂສ້ປັດໃຈນຳເຂົ້າການຜະລິດກະສິກຳມີລັກສະນະສັ້ນດັ່ງແຜນວາດລຸ່ມນີ້:




ຮູບທີ4: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າລະດັບຄອບຄົວເຫຼືອກິນ

ຂໍ້ສັງເກດ: ●- - - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

●——● ໝາຍເຖິງໄດ້ຊື້ເປັນເງິນສົດ

▬▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1 ດິນນາລັດແບ່ງປັນ ຫຼື ຈັບຈ່ອງໃຫ້ມີ 2 ຄອບຄົວ

2. ດິນທີ່ຊື້ເປັນເງິນສົດມີ ດິນນາ,ດິນປູກສ້າງ ມີ 3 ຄອບຄົວ

3. ນ້ຳທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳແມ່ນບໍ່ໄດ້ຊື້ເປັນນ້ຳທີ່ໄດ້ຈາກທຳມະຊາດຄື: ນ້ຳຝົນ, ຫ້ວຍ, ໜອງ ເພາະເຂດດັ່ງກ່າວບໍ່ມີຊົນລະປະທານ

4. ສິນເຊື່ອທີ່ຊາວກະສິກອນກູ້ຢືມແມ່ນມາຈາກທະນະຄານນະໂຍບາຍເຊິ່ງມີອັດຕາດອກເບ້ຍສຳລັບການລ້ຽງສັດແມ່ນ 10%/5 ປີ ແລະ ປູກພືດແມ່ນມີອັດຕາດອກເບ້ຍແມ່ນ 7%/ປີ ມີ 3 ຄອບຄົວ.

5. ສິນເຊື່ອທີ່ຊາວກະສິກອນກູ້ຢືມຈາກກອງທຶນບ້ານໃນການກູ້ຢືມແມ່ນມານຳໃຊ້ເຂົ້າໃນການລ້ຽງສັດເຊິ່ງອັດຕາດອກເບ້ຍ7%/10ເດືອນ, 6%/1ເດືອນ ມີ 4 ຄອບຄົວ

6. ສິນເຊື່ອກອງທຶນບ້ານແມ່ນໂຄງ IFAD ເປັນຜູ້ສະໜັບສະໜູນໃຫ້ທຶນ

7. ອຸປະກອນທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳທີ່ຊື້ເປັນເງິນສົດນັ້ນມີ ຈົກ, ກ່ຽວ, ຊວ້ານ, ພ້າ ແມ່ນໄດ້ຊື້ມາແຕ່ຕະຫຼາດເມືອງຊານໄຊ

8.ແມ່ຄ້າເມືອງຊານໄຊຊື້ ຈີກ, ກ່ງວ, ຊວ້ານ, ພ້າ ມາແຕ່ຕະຫຼາດປາກເຊ
9. ແມ່ຄ້າຕະຫຼາດປາກເຊຊື້ ຈີກ, ກ່ງວ, ຊວ້ານ, ພ້າ ມາແຕ່ປະເທດໄທ
10. ອຸປະກອນທີ່ຊາວກະສິກອນນໍາໃຊ້ເຂົ້າໃນການຜະລິດມີລົດໄຖ, ໄຖ, ໝາກສິບໄຖ, ຈີກ, ກ່ງວ ຊື້ມາແຕ່ຕະຫຼາດເມືອງໄຊເສດຖາ.
11. ແມ່ຄ້າເມືອງໄຊເສດຊື້ ລົດໄຖ, ໄຖ, ໝາກສິບໄຖ, ຈີກ, ກ່ງວ ມາແຕ່ຕະຫຼາດປາກເຊ
12. ແມ່ຄ້າຕະຫຼາດປາກເຊຊື້ ລົດໄຖ, ໄຖ, ໝາກສິບໄຖ, ຈີກ, ກ່ງວ ມາແຕ່ປະເທດໄທ
13. ແຮງງານທີ່ຊາວກະສິກອນນໍາໃຊ້ເຂົ້າໃນການຜະລິດແມ່ນບໍ່ໄດ້ຈ້າງສ່ວນຫຼາຍເປັນແຮງງານພາຍໃນຄອບຄົວ ແລະ ແຮງງານແລກປ່ຽນພາຍໃນບ້ານດຽວກັນ.

### 4.1.2. ລັກສະນະຕ່ອງໂສ້ປັດໃຈນໍາເຂົ້າການຜະລິດໃນລະດັບຄອບຄົວກຸ້ມກິນ

ຜ່ານການສໍາພາດຕົວຈິງຊາວກະສິກອນແມ່ນເຫັນໄດ້ວ່າການນໍາໃຊ້ປັດໃຈນໍາເຂົ້າໃນການຜະລິດກະສິກໍາບໍ່ຄືກັນມີທັງຊື້ເປັນເງິນສົດ, ບໍ່ໄດ້ຊື້ເປັນເງິນສົດ ແລະ ວິທີການເຂົ້າຫາປັດໃຈນໍາເຂົ້າໃນການຜະລິດ ຫຼື ລັກສະນະຂອງຕ່ອງໂສ້ແມ່ນແຕກຕ່າງກັນຄື:

1. ຕ່ອງໂສ້ປັດໃຈນໍາເຂົ້າທີ່ເປັນດິນ/ນໍ້າຂອງຄອບຄົວກຸ້ມກິນ

ດິນທີ່ຊາວກະສິກອນນໍາໃຊ້ເຂົ້າໃນການຜະລິດກະສິກໍາແມ່ນມີ 2 ປະເພດຄື: ດິນຊື້ເປັນເງິນສົດ ແລະ ດິນຂອງຕົນເອງ ຫຼື ດິນທີ່ລັດແບ່ງປັນໃຫ້.

➢ ສໍາລັບດິນທີ່ຊື້ເປັນເງິນສົດມີດິນນາ, ດິນປຸກສ້າງການໄດ້ມາຂອງດິນດັ່ງກ່າວແມ່ນຊື້ນໍາປະຊາຊົນທີ່ຢູ່ພາຍໃນບ້ານດຽວກັນ

ຊາວກະສິກອນ ◄— ປະຊາຊົນໃນບ້ານດຽວກັນ

➢ ດິນທີ່ຈັບຈ່ອງເອົາເອງ ຫຼື ລັດແບ່ງປັນໃຫ້ມີດິນໄຮ່, ດິນສວນ, ດິນປຸກສ້າງ ດັ່ງນັ້ນຈຶ່ງເຮັດໃຫ້ລັກສະນະຂອງຕ່ອງໂສ້ປັດໃຈນໍາເຂົ້າທີ່ເປັນດິນມີລັກສະນະສັ້ນ ຍ້ອນວ່າດິນທີ່ນໍາໃຊ້ເຂົ້າຜະລິດ ແມ່ນຊື້ນໍາປະຊາຊົນໃນບ້ານດຽວກັນ ແລະ ລັດແບ່ງປັນໃຫ້ເພື່ອນໍາໃຊ້ເຂົ້າໃນການປູກພືດ, ການລ້ຽງສັດ.

➢ ນໍ້າທີ່ຊາວກະສິກອນນໍາໃຊ້ເຂົ້າໃນການຜະລິດກະສິກໍາແມ່ນຍັງອາໄສນໍ້າຈາກທໍາມະຊາດເຊັ່ນວ່າ: ນໍ້າຝົນ, ຫ້ວຍ, ໜອງ ເພາະໃນພື້ນທີ່ທໍາການຜະລິດແມ່ນຍັງບໍ່ມີລະບົບຊົນລະປະທານທີ່ຈະນໍາໃຊ້ເຂົ້າໃນການຜະລິດ.

2. ຕ່ອງໂສ້ປັດໃຈນໍາເຂົ້າທີ່ເປັນສິນເຊື່ອຂອງຄອບຄົວກຸ້ມກິນ

➢ ສິນເຊື່ອທີ່ຊາວກະສິກອນກູ້ຢືມມານໍາໃຊ້ເຂົ້າໃນການຜະລິດກະສິກໍານີ້ແມ່ນມີສິນເຊື່ອຈາກທະນາຄານນະໂຍບາຍ ແລະ ກອງທຶນບ້ານ ສິນເຊື່ອກູ້ຢືມຈາກທະນາຄານນະໂຍບາຍມີອັດຕາດອກເບັ້ຍ 7%/1ປີ ເພື່ອມານໍາໃຊ້ເຂົ້າໃນການປູກເຂົ້ານາປີ ສໍາລັບການລ້ຽງສັດມີອັດຕາດອກເບັ້ຍ 10%/5ປີ/6 ລ້ານກີບ ແລະ ວິທີການຈ່າຍຄືນຂອງຊາວກະສິກອນແມ່ນຈ່າຍເປັນເງິນສົດ.




➢ ສິນເຊື່ອທີ່ກູ້ຢືມຈາກກອງທຶນບ້ານເພື່ອມານຳໃຊ້ເຂົ້າໃນການຜະລິດກະສິກຳນັ້ນມີອັດຕາດອກເບ້ຍແມ່ນ 6%/2ປີ/1,5 ລ້ານກີບ ແລະ 3%/1ປີ/5 ແສນກີບ ວິທີການຈ່າຍຄືນຂອງຊາວກະສິກອນແມ່ນຈ່າຍເປັນເງິນສົດ ແຕ່ວ່າເງິນກອງທຶນບ້ານນີ້ແມ່ນມີທຶນສະໜັບສະໜູນຈາກໂຄງການ IFAD.




ດັ່ງນັ້ນຈຶ່ງເຮັດໃຫ້ລັກສະນະຕ່ອງໂສ້ທີ່ເປັນສິນເຊື່ອນີ້ສັ້ນ ແຕ່ບໍ່ມີຄວາມເປັນເອກະລາດຍ້ອນວ່າປັດໃຈເຫຼົ່ານີ້ຂຶ້ນກັບຫຼາຍພາກສ່ວນ ແລະ ມີຂໍ້ຈຳກັດ ສະນັ້ນຈຶ່ງເຮັດໃຫ້ຊາວກະສິກອນບາງຄອບຄົວບໍ່ສາມາດເຂົ້າເຖິງແຫຼ່ງປັດໃຈນຳເຂົ້ານີ້ໄດ້.

3. <u>ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນອຸປະກອນຂອງຄອບຄົວກຸ້ມກິນ</u>

ອຸປະກອນທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳທີ່ຊາວກະສິກອນນຳໃຊ້ແມ່ນແບ່ງອອກເປັນ 2 ປະເພດຄື: ອຸປະກອນທີ່ໄດ້ມາດ້ວຍການຊື້ເປັນເງິນສົດ ແລະ ຕີເອົາເອງ.

➢ ອຸປະກອນທີ່ໄດ້ມາໂດຍການຊື້ເງິນສົດມີຈົກ, ກ່ຽວ, ຊ້ວານ, ໄຖ, ໝາກສິບໄຖ ເຊິ່ງມີແຫຼ່ງທີ່ມາດັ່ງລຸ່ມນີ້:




➢ ອຸປະກອນທີ່ຕີເອົາເອງມີ ກ່ຽວ, ພ້າ.

ສະນັ້ນຕ່ອງໂສ້ອຸປະກອນທີ່ຊື້ເປັນເງິນສົດແມ່ນມີລັກສະນະແກ່ຍາວຂຶ້ນກັບຫຼາຍພາກສ່ວນເພາະວ່າອຸປະກອນຈຳພວກ ຊ້ວານ, ໄຖ, ກ່ຽວ, ໝາກສິບໄຖໄດ້ນຳມາແຕ່ປະເທດໄທ ດັ່ງນັ້ນ ຈຶ່ງເຮັດໃຫ້ຊາວກະສິກອນບາງຄອບຄົວບໍ່ສາມາດເຂົ້າເຖິງແຫຼ່ງປັດໃຈນຳເຂົ້າດັ່ງກ່າວໄດ້ເທົ່າທີ່ຄວນ.

4. <u>ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນແຮງງານຂອງຄອບຄົວກຸ້ມກິນ</u>

ແຮງງານທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳສ່ວນໃຫ່ຍແມ່ນແຮງງານພາຍໃນຄອບຄົວ ແລະ ແຮງງານແລກປ່ຽນ ໂດຍບໍ່ໄດ້ມີການຈ້າງຈາກພາຍນອກເລີຍ ສະນັ້ນຈຶ່ງເຮັດໃຫ້ຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດມີລັກສະນະງ່າຍດາຍ. ເປັນເອກະລາດບໍ່ຂຶ້ນກັບຫຼາຍພາກສ່ວນ ດັ່ງແຜນວາດລຸ່ມນີ້:




ຮູບທີ 5 : ແຜນວາດຕ່ອງໂສ້ປັດໃຈນຳເຂົ້າລະດັບຄອບຄົວກຸ້ມກິນ

ຂໍ້ສັງເກດ: - - - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

——● ໝາຍເຖິງໄດ້ຊື້ເປັນເງິນສົດ

▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1 .ດິນທີ່ຊາວກະຊິກອນນຳໃຊ້ເຂົ້າໃນການຜະລິດທີ່ຊື້ເປັນເງິນສົດມີ ດິນນາ, ດິນປຸກສ້າງການໄດ້ມາຂອງດິນດັ່ງກ່າວແມ່ນຊື້ນຳປະຊາຊົນທີ່ຢູ່ໃນບ້ານດຽວກັນມີ 3 ຄອບຄົວ

2. ດິນທີ່ລັດແບ່ງປັນໃຫ້ມີ ດິນນາ, ດິນປຸກສ້າງ 1 ຄອບຄົວ

3. ດິນທີ່ຊາວກະສິກອນຈັບຈ່ອງເອົາເອງມີ ດິນໄຮ່, ດິນສວນ, ດິນປຸກສ້າງ, ດິນນາ  2 ຄອບຄົວ

4. ນ້ຳທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳນັ້ນແມ່ນບໍ່ໄດ້ຊື້ເປັນນ້ຳທີ່ໄດ້ຈາກທຳມະຊາດ ນ້ຳຝົນ,ຫ້ວຍ,ໜອງ

5. ສິນເຊື່ອທີ່ຊາວກະສິກອນກູ້ຢືມຈາກທະນາຄານນະໂຍບາຍມີ ອັດຕາດອກເບັ້ຍສຳລັບການລ້ຽງສັດແມ່ນ10%/5ປີ ແລະ ການປູກພືດມີອັດຕາດອກເບັ້ຍແມ່ນ 7%/1ປີ  3 ຄອບຄົວ

6. ສຳລັບສິນເຊື່ອທີ່ຊາວກະສິກອນກູ້ຢືມຈາກກອງທຶນບ້ານມີອັດຕາດອກເບັ້ຍ 6%/2 ປີ, 3%/1 ປີ 2 ຄອບຄົວ

7. ກອງທຶນບ້ານສະໜັບສະໜູນໂດຍໂຄງການ IFAD

8. ອຸປະກອນ ຈົກ, ກ່ຽວ, ຊວ້ານ, ໄຖ, ໝາກສິບໄຖ ຊາວກະສິກອນແມ່ນໄດ້ຊື້ມາຈາກຕະຫຼາດເມືອງຊານໄຊ

9. ແມ່ຄ້າຕະຫຼາດເມືອງຊານໄຊຊື້ ຈົກ, ກ່ຽວ, ຊວ້ານ, ໄຖ, ໝາກສິບໄຖມາຈາກຕະຫຼາດປາກເຊ

10. ແມ່ຄ້າຕະຫຼາດປາກເຊຊື້ ຈົກ, ກ່ຽວ, ຊວ້ານ, ໄຖ, ໝາກສິບໄຖມາແຕ່ປະເທດໄທ

11 . ອຸປະກອນທີ່ຊາວກະສິກອນຕີເອງແມ່ນມີກ່ຽວ,ພ້າ 1 ຄອບຄົວ

12. ອຸປະກອນທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດທີ່ເປັນລົດໄຖນັ້ນມາຈາກພໍ່ຄ້າຢູ່ບ້ານສະແຄະ ແລະ ພໍ່ຄ້າຢູ່ບ້ານພູໄຊ 2 ຄອບຄົວ

13. ແຮງງານທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດແມ່ນບໍ່ໄດ້ຈ້າງເປັນແຮງງານພາຍໃນຄອບຄົວ ແລະ ແຮງງານແລກປ່ຽນພາຍໃນບ້ານດຽວກັນ

**4.1.3. <u>ລັກສະນະຕ່ອງໂສ້ປັດໃຈນຳເຂົ້າການຜະລິດໃນລະດັບຄອບຄົວບໍ່ກຸ້ມກິນ</u>**

ໃນການສຳພາດຊາວກະສິກອນຕົວຈິງເຫັນໄດ້ວ່າຕ່ອງໂສ້ ຫຼື ວິທີການເຂົ້າເຖິງປັດໃຈນຳເຂົ້າໃນການຜະລິດຊະນິດຕ່າງໆແມ່ນມີລັກສະນະຕ່າງກັນດັ່ງນີ້:

1. <u>ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນດິນ/ນ້ຳຂອງຄອບຄົວບໍ່ກຸ້ມກິນ</u>

ດິນທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳນັ້ນແບ່ງອອກເປັນ 2 ປະເພດຄື : ດິນໄດ້ຊື້ເປັນເງິນສົດ ແລະ ດິນຈັບຈອງເອົາເອງ ຫຼື ດິນທີ່ລັດແບ່ງປັນໃຫ້.

➢ ດິນທີ່ຊື້ເປັນເງິນສົດມີ: ດິນນາ ເຊິ່ງການໄດ້ມາຂອງດິນດັ່ງກ່າວແມ່ນຊື້ນຳປະຊາຊົນທີ່ຢູ່ພາຍໃນບ້ານດຽວກັນ

ຊາວກະສິກອນ ← ປະຊາຊົນໃນບ້ານດຽວກັນ

➢ ດິນຂອງຕົນເອງ ຫຼື ດິນລັດແບ່ງປັນໃຫ້ມີ: ດິນນາ, ດິນປຸກສ້າງ, ດິນສວນ ດັ່ງນັ້ນຈຶ່ງເຮັດໃຫ້ ລັກສະນະຂອງຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນດິນມີລັກສະນະສັ້ນ ບໍ່ຂຶ້ນກັບຫຼາຍພາກສ່ວນ ຍ້ອນວ່າດິນທີ່ນຳໃຊ້ເຂົ້າຜະລິດນັ້ນແມ່ນໄດ້ມາຈາກການຊື້ນຳປະຊາຊົນໃນບ້ານດຽວກັນ ແລະ ດິນທີ່ຈັບຈ່ອງເອົາເອງ ຫຼື ລັດແບ່ງປັນໃຫ້ເພື່ອນຳໃຊ້ເຂົ້າໃນການປູກພືດ, ການລ້ຽງສັດ

ຊາວກະສິກອນ ← ກະສິກຳເມືອງ

➢ ນ້ຳທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳແມ່ນຍັງອາໃສນ້ຳຈາກທຳມະຊາດເພາະວ່າຢູ່ໃນພື້ນທຳກາຜະລິດເຂດດັ່ງກ່າວແມ່ນບໍ່ມີຊົນລະປະທານ.

2. <u>ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນສິນເຊື່ອຂອງຄອບຄົວບໍ່ກຸ້ມກິນ</u>

➢ ສິນເຊື່ອທີ່ຊາວກະສິກູ້ຢືມມານຳໃຊ້ເຂົ້າໃນການຜະລິດກະສິກຳນີ້ແມ່ນມີສິນເຊື່ອຈາກທະນາຄານນະໂຍບາຍ ແລະ ກອງທຶນບ້ານ ສິນເຊື່ອທີ່ກູ້ຢືມຈາກທະນາຄານນະໂຍບາຍມີອັດຕາດອກເບັ້ຍແມ່ນ 7%/1ປີ/1 ລ້ານກີບ ເພື່ອມານຳໃຊ້ເຂົ້າໃນການປູກເຂົ້ານາປີ ສຳລັບການລ້ຽງສັດມີອັດຕາດອກເບັ້ຍ 10%/5ປີ/6 ລ້ານກີບ ແລະ ວິທີການຈ່າຍຄືນຂອງຊາວກະສິກອນແມ່ນເປັນເງິນສົດ

ຊາວກະສິກອນ ← ທະນະຄານນະໂຍບາຍ

➢ ສຳລັບສິນເຊື່ອທີ່ຊາວກະສິກອນກູ້ຢືມຈາກກອງທຶນບ້ານເພື່ອມານຳໃຊ້ເຂົ້າໃນການຜະລິດກະສິກຳມີດອກເບ້ຍແມ່ນ 6%/1ປີ ວິທີການຈ່າຍຄືນຂອງຊາວກະສິກອນແມ່ນຈ່າຍເປັນເງິນສົດ ຊຶ່ງໂຄງການ IFAD ເປັນຜູ້ໃຫ້ທຶນ.

ຊາວກະສິກອນ ← ກອງທຶນບ້ານ ← ໂຄງການ IFAD

ດັ່ງນັ້ນຈຶ່ງເຮັດໃຫ້ລັກສະນະຕ່ອງໂສ້ທີ່ເປັນສິນເຊື່ອນີ້ສັ້ນ ແຕ່ບໍ່ມີຄວາມເປັນເອກະລາດ ຍ້ອນວ່າປັດໃຈເຫຼົ່ານີ້ຂື້ນກັບຫຼາຍພາກສ່ວນ, ມີຂໍ້ຈຳກັດ ສະນັ້ນຈຶ່ງເຮັດໃຫ້ຊາວກະສິກອນບາງຄອບຄົວບໍ່ສາມາດເຂົ້າເຖິງແຫຼ່ງປັດນຳເຂົ້ານີ້ໄດ້.

3. <u>ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນອຸປະກອນຂອງຄອບຄົວບໍ່ກຸ້ມກິນ</u>

ອຸປະກອນທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳແມ່ນແບ່ງອອກເປັນ 2 ປະເພດຄື: ອຸປະກອນທີ່ຊື້ເປັນເງິນສົດ ແລະ ລັດມອບໃຫ້

- ອຸປະກອນທີ່ຊື້ເປັນເງິນສົດ: ມີ ກ່ຽວ, ຊວ້ານ, ໄຖ, ໝາກສິບໄຖ ແຫຼ່ງທີ່ມາແມ່ນຊື້ມາຈາກ

ຊາວກະສິກອນ ← ຕະຫຼາດເມືອງໄຊເສດຖາ ← ຕະຫຼາດປາກເຊ ← ປະເທດໄທ

ຕ່ອງໂສ້ປັດໃຈນຳເຂົ້າຂອງອຸປະກອນທີ່ຊື້ເປັນເງິນສົດໂດຍສະເພາະ ກ່ຽວ, ຊວ້ານ, ຈົກ, ໄຖ, ໝາກສິບໄຖ ແມ່ນມີລັກສະນະແກ່ຍາວ ແລະ ຂຶ້ນກັບຫຼາຍພາກສ່ວນຈຶ່ງເຮັດໃຫ້ຊາວກະສິກອນບາງຄອບຄົວບໍ່ສາມາດເຂົ້າເຖິງແຫຼ່ງປັດໃຈນຳເຂົ້າດັ່ງກ່າວໄດ້.

- ອຸປະກອນທີ່ລັດມອບໃຫ້ມີ ຈົກ, ຊວ້ານ

4. <u>ຕ່ອງໂສ້ປັດໃຈນຳເຂົ້າທີ່ເປັນແຮງງານຂອງຄອບຄົວບໍ່ກຸ້ມກິນ</u>

ແຮງງານທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳສ່ວນໃຫ່ຍແມ່ນນຳໃຊ້ແຮງງານພາຍໃນຄອບຄົວເປັນຫຼັກເຂົ້າໃນການປູກພືດ, ການລ້ຽງສັດໂດຍທີ່ບໍ່ໄດ້ຈ້າງແຮງງານ ແລະ ໄດ້ນຳໃຊ້ແຮງງານແລກປ່ຽນບາງຄັ້ງຄາວ ສະນັ້ນຈຶ່ງເຮັດໃຫ້ຕອ່ງໂສ້ປັດໃຈນຳເຂົ້າໃນການຜະລິດມີລັກສະນະສັ້ນ ງ່າຍດາຍເປັນເອກະລາດບໍ່ຂຶ້ນກັບຫຼາຍພາກສ່ວນ.




ຮູບທີ6: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າລະດັບຄອບຄົວບໍ່ກຸ້ມກິນ

ຂໍ້ສັງເກດ: ●----● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

●——● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1 . ດິນທີ່ຊາວກະຊິກອນນຳໃຊ້ເຂົ້າໃນການຜະລິດທີ່ຊື້ເປັນເງິນສົດແມ່ນມີ ດິນນາ, ດິນປຸກສ້າງ ເຊິ່ງການໄດ້ມາຂອງດິນດັ່ງກ່າວແມ່ນຊື້ນຳປະຊາຊົນ ທີ່ຢູ່ໃນບ້ານດຽວກັນ ຈຳນວນ 3 ຄອບຄົວ

2. ດິນທີ່ລັດແບ່ງປັນໃຫ້ແມ່ນມີ ດິນນາ,ດິນປຸກສ້າງ ຈຳນວນ 1 ຄອບຄົວ

3. ດິນທີ່ຊາວກະສິກອນຈັບຈອງເອົາເອງມີ ດິນໄຮ່, ດິນສວນ, ດິນປຸກສ້າງ, ດິນນາ ຈຳນວນ 2 ຄອບຄົວ

4. ນ້ຳທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳນັ້ນແມ່ນບໍ່ໄດ້ຊື້ເປັນນ້ຳທີ່ໄດ້ຈາກທຳມະຊາດ ນ້ຳຝົນ, ຫ້ວຍ, ໜອງ

5. ສິນເຊື່ອທີ່ຊາວກະສິກອນກູ້ຢືມມານຳໃຊ້ເຂົ້າໃນການປູກພືດ ແລະ ການລ້ຽງສັດຈາກທະນາຄານນະໂຍບາຍມີອັດຕາດອກເບ້ຍສຳລັບການລ້ຽງ ສັດແມ່ນ 10%/5ປີ ແລະ ການປູກພືດມີອັດຕາດອກເບ້ຍແມ່ນ 7%/1ປີ ຈຳນວນ 2 ຄອບຄົວ

6. ສິນເຊື່ອທີ່ຊາວກະສິກອນກູ້ຢືມມານຳໃຊ້ເຂົ້າໃນການປູກພືດ ແລະ ການລ້ຽງສັດ ມີອັດຕາດອກເບ້ຍ 6%/1ປີ ຈຳນວນ 2 ຄອບຄົວ

7. ກອງທຶນບ້ານແມ່ນໂຄງ IFAD ເປັນຜູ້ໃຫ້ທຶນ

8. ອຸປະກອນທີເປັນ ກ່ຽວ, ຊວ້ານ, ໄຖ, ໝາກສິບໄຖ ຊາວກະສິກອນໄດ້ຊື້ມາຈາກຕະຫຼາດເມືອງໄຊເສດຖາ

9. ແມ່ຄ້າເມືອງໄຊເສດຖາຊື້ ກ່ຽວ, ຊວ້ານ, ໄຖ, ໝາກສິບໄຖ ມາຈາກຕະຫຼາດປາກເຊ

10. ແມ່ຄ້າຕະຫຼາດປາກເຊຊື້ ກ່ຽວ, ຊວ້ານ, ໄຖ, ໝາກສິບໄຖ ມາຈາກປະເທດໄທ

11. ອຸປະກອນທີ່ລັດມອບໃຫ້ມີ : ຈົກ, ຊວ້ານ ມີຈຳນວນ 1 ຄອບຄົວ

12. ລົດໄຖທີ່ຊາວກະສິກອນນຳໃຊ້ແມ່ນຊື້ມາຈາກພໍ່ຄ້າທີ່ຢູ່ບ້ານສະແຄະ

13. ແຮງງານທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດແມ່ນບໍ່ໄດ້ຈ້າງ ເປັນແຮງງານພາຍໃນຄອບຄົວ ແລະແຮງງານແລກປ່ຽນ

## 4.2. ຕ່ອງໂສ້ປັດໃຈນຳເຂົ້າໃນແຕ່ລະກິດຈະກຳການຜະລິດຂອງຊາວກະສິກອນ

### 4.2. ຕ່ອງໂສ້ສິ່ງນຳເຂົ້າໃນການຜະລິດຂອງແຕ່ລະກິດຈະກຳ

ການຜະລິດກິດຈະກຳໃດໜຶ່ງແມ່ນປະກອບມີ: ແຫຼ່ງຂໍ້ມູນຂ່າວສານ, ສິ່ງທີ່ເປັນເຄມີ, ການບໍລິການ ແລະ ສິ່ງທີ່ບໍ່ເປັນເຄມີ

➢ ແຫຼ່ງຂໍ້ມູນຂ່າວສານໝາຍເຖິງບັນດາຂໍ້ມູນທີ່ໄດ້ຈາກເອກະສານຕ່າງໆ ຫຼື ປຶ້ມ, ແຜ່ນພັບ, ໂທລະທັດ, ວິທະຍຸທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກ ວິທີການຂອງການປູກພືດ ແລະ ການລ້ຽງສັດ.

➢ ສິ່ງນຳເຂົ້າທີ່ເປັນເຄມີໝາຍເຖິງເຄມີທີ່ຊາວກະສິກອນນຳໃຊ້ເຊັ່ນ: ປຸ໋ຍ, ວັກຊິນ, ເກືອ ແລະ ນ້ຳມັນກາຊວນອື່ນໆ.

➢ ການບໍລິການໝາຍເຖິງການຈ້າງ ຫຼື ວານເພື່ອນຳໃຊ້ເຂົ້າໃນການຜະລິດ.

➢ ສິ່ງນຳເຂົ້າທີ່ບໍ່ແມ່ນເຄມີໝາຍເຖິງສິ່ງທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດ ເຊັ່ນ: ແນວພັນພືດ, ແນວພັນສັດ, ອາຫານສັດ, ເຊືອກ ແລະ ຝຸ່ນທຳມະຊາດ.

**4.2.1. <u>ປັດໃຈນຳເຂົ້າກິດຈະກຳການຜະລິດໃນລະດັບຄອບຄົວເຫຼືອກິນ</u>**

ຜ່ານການສຳພາດຊາວກະສິກອນເຫັນໄດ້ວ່າກິດຈະກຳຫຼັກທີ່ເຂົາເຈົ້າຜະລິດມີ: ການປູກເຂົ້ານາປີ, ການປູກເຂົ້າໄຮ່, ການປູກສາລີ, ການປູກຜັກກາດ, ການລ້ຽງງົວ, ລ້ຽງ ຄວາຍ, ລ້ຽງໝູ, ລ້ຽງແບ້ ແລະ ສັດປີກ ຊຶ່ງປັດໃຈທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດມີ ຂໍ້ມູນຂ່າວສານ, ສິ່ງນຳເຂົ້າທີ່ເປັນເຄມີ, ການບໍລິການ ແລະ ສິ່ງນຳເຂົ້າທີ່ບໍ່ເປັນເຄມີ.

1. <u>ກິດຈະກຳການປູກເຂົ້ານາປີ ຂອງຄອບຄົວເຫຼືອກິນ</u>

ການປູກເຂົ້ານາຂອງຊາວກະສິກອນສ່ວນໃຫ່ຍແມ່ນ ການປູກເຂົ້ານາປີເພາະວ່າເຂດດັ່ງກ່າວແມ່ນຍັງໄດ້ອາໃສນ້ຳຈາກທຳມະຊາດໃຊ້ເຂົ້າໃນການຜະລິດ ຍ້ອນວ່າຢູ່ໃນເຂດນີ້ບໍ່ມີລະບົບຊົນລະປະທານຈຶ່ງເຮັດໃຫ້ການປູກເຂົ້າຂອງເຂົາເຈົ້າປູກໄດ້ພຽງລະດູການດຽວຄືການປູກເຂົ້ານາປີເທົ່ານັ້ນ ແລະ ປັດໃຈນຳເຂົ້າທີ່ເຂົາເຈົ້ານຳໃຊ້ເຂົ້າໃນການປູກເຂົ້ານາປີມີ:

➢ ຂໍ້ມູນຂ່າວສານໝາຍເຖິງ ຂໍ້ມູນທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີຕ່າງໆຂອງການຜະລິດເຊິ່ງຊາວກະສິກອນຢູ່ໃນເຂດດັ່ງກ່າວແມ່ນໄດ້ຮັບຂໍ້ມູນມາຈາກຫ້ອງການກະສິກຳ-ປ່າໄມ້ເມືອງ




➢ ເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດກະສິກຳປະກອບມີ: ປຸ໋ຍ, ນ້ຳມັນກາຊວນຊຶ່ງເຄມີດັ່ງກ່າວນີ້ແມ່ນຊາວກະສິກອນໄດ້ຊື້ມາຈາກ




➢ ການບໍລິການທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກເຂົ້ານາປີນີ້ແມ່ນບໍ່ໄດ້ນຳໃຊ້ບໍລິການເຂົ້າໃນການຜະລິດເພາະວ່າເຂົາເຈົ້າບໍ່ໄດ້ມີການຈ້າງ ຫຼື ເຊົ່າອຸປະກອນຊະນິດໃດເລີຍ.

➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກເຂົ້ານາປີປະກອບມີ: ແນວພັນ ເຊິ່ງການໄດ້ມາຂອງແນວພັນຊາວກະສິກອນແມ່ນບໍ່ໄດ້ຊື້ກະສິກຳເມືອງເອົາໃຫ້ ແຕ່ວ່າກະສິກຳເມືອງໄດ້ຊື້ແນວພັນເຂົ້ານີ້ມາຈາກສູນຜະລິດເມັດພັນນາພອກ




ຈາກລວບລວມຂໍ້ມູນຂ້າງເທິງນີ້ແມ່ນສັງເກດເຫັນວ່າຕ່ອງໂສ້ປັດໃຈນຳເຂົ້າໃນການປູກເຂົ້ານາປີແມ່ນມີລັກສະນະແກ່ຍາວ ແລະ ມີສາຍພົວພັນທັງພາຍໃນຈົນໄປເຖິງຕ່າງປະເທດ ເປັນ

ຕົ້ນແມ່ນເຄືອຂ່າຍຂອງສິ່ງທີ່ເປັນເຄມີ ນ້ຳມັນ, ປຸ໋ຍ ສ່ວນຕ່ອງໂສ້ຂອງຂໍ້ມູນຂ່າວສານ, ສິ່ງທີ່ເປັນເຄມີແມ່ນມີລັກສະສັ້ນດັ່ງແຜນວາດລຸ່ມນີ້:




ຮູບທີ7: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກເຂົ້ານາປີຂອງຄອບຄົວເຫຼືອກິນ

ຂໍ້ສັງເກດ: ●- - - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

●——● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ແນວພັນທີ່ຊາວກະສິກອນນຳໃຊ້ໃນການປູກແມ່ນກະສິກຳເມືອງເປັນຜູ້ສະໜອງໃຫ້
2. ກະສິກຳເມືອງຊື້ແນວພັນມາຈາກສູນຜະລິດເມັດພັນນາພອກ
3. ຊາວກະສິກອນຊື້ນ້ຳມັນກາຊວນມາຈາກປ້ຳນ້ຳມັນຢູ່ທີ່ເມືອງໄຊເສດຖາ
4. ແມ່ຄ້າປ້ຳນ້ຳມັນໄຊເສດຖາຊື້ນ້ຳມັນກາຊວນມາຈາກປາກເຊ
5. ປ້ຳນ້ຳມັນປາກເຊຊື້ນ້ຳມັນກາຊວນມາຈາກນະຄອນຫຼວງວຽງຈັນ
6. ປຸ໋ຍທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດແມ່ນໄດ້ຊື້ມາຈາກຕະຫຼາດເມືອງໄຊເສດຖາ
7. ແມ່ຄ້າເມືອງໄຊເສດຖາຊື້ປຸ໋ຍມາຈາກປາກເຊ
8. ແມ່ຄ້າປາກເຊຊື້ປຸ໋ຍມາຈາກປະເທດໄທ

2. <u>ກິດຈະກຳການປູກເຂົ້າໄຮ່ຂອງຄອບຄົວເຫຼືອກິນ</u>

ປັດໃຈທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກເຂົ້າໄຮ່ຢູ່ໃນເຂດດັ່ງກ່າວປະກອບມີ:

➢ ຂໍ້ມູນຂ່າວສານໝາຍເຖິງ ຂໍ້ມູນທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີຕ່າງໆຂອງການຜະລິດເຊິ່ງຊາວກະສິກອນຢູ່ໃນເຂດດັ່ງກ່າວແມ່ນໄດ້ຮັບຂໍ້ມູນຈາກເພື່ອນບ້ານໃກ້ຄຽງ



➢ ການປູກເຂົ້າໄຮ່ຂອງຊາວກະສິກອນໃນເຂດນີ້ແມ່ນບໍ່ໄດ້ນຳໃຊ້ເຄມີຊະນິດໃດໆເຂົ້າໃນການປູກ.

➢ ໃນການບໍລິການກິດຈະກຳການປູກເຂົ້າໄຮ່ຂອງຊາວກະສິກອນແມ່ນບໍ່ໄດ້ມີການນຳໃຊ້ເພາະວ່າບໍ່ມີການຈ້າງແຮງງານ ຫຼື ເຊົ່າອຸປະກອນຊະນິດໃດເຂົ້າໃນການປູກ.

➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກແມ່ນມີພຽງແຕ່ແນວພັນ ເຊິ່ງແນວພັນທີ່ປູກເປັນພື້ນເມືອງ ການໄດ້ມາແມ່ນບໍ່ໄດ້ຊື້ແລກປ່ຽນນຳເພື່ອນບ້ານໃກ້ຄຽງ




ຜ່ານການສັງເກດຕ່ອງໂສ້ປັດໃຈນຳເຂົ້າໃນການປູກເຂົ້າໄຮ່ແມ່ນມີລັກສະນະສັ້ນເປັນເອກະລາດ ແລະ ເປັນທ້ອງຖິ່ນເພາະວ່າທຸກໆປັດໃຈທີ່ນຳໃຊ້ແມ່ນມາຈາກທ້ອງຖິ່ນບໍ່ວ່າຈະເປັນແຫຼ່ງຂໍ້ມູນຂ່າວສານ, ສິ່ງທີ່ບໍ່ເປັນເຄມີ ສ່ວນການບໍລິການ, ສິ່ງທີ່ເປັນເຄມີແມ່ນບໍ່ໄດ້ນຳໃຊ້ສະນັ້ນການຜະລິດຈຶ່ງເປັນການຜະລິດແບບພື້ນເມືອງ ແລະ ປອດສານເຄມີດັ່ງແຜນວາດລຸ່ມນີ້:




ຮູບທີ8: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກເຂົ້າໄຮ່ຂອງຄອບຄົວເຫຼືອກິນ

ຂໍ້ສັງເກດ:
- ●----● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
- ●——● ໝາຍເຖິງໄດ້ຊື້ເປັນເງິນສົດ
- ▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

| |
|---|
| 1. ແນວພັນ, ເຕັກນິກວິທີການ: ແມ່ນເພື່ອນບ້ານເປັນຜູ້ສະໜອງໃຫ້ |

3. <u>ກິດຈະກຳການປູກສາລີຂອງຄອບຄົວເຫຼືອກິນ</u>

ການປູກສາລີຂອງຊາວກະສິກອນຢູ່ເຂດດັ່ງກ່າວແມ່ນໄດ້ມີການນຳໃຊ້ປັດໃຈນຳເຂົ້າຄື:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີຕ່າງໆຂອງການປູກສາລີ ຊາວກະສິກອນຢູ່ໃນເຂດດັ່ງກ່າວແມ່ນໄດ້ຮັບຂໍ້ມູນມາຈາກໂຄງການ IFAD ເປັນຜູ້ສະໜອງໃຫ້.



➢ ເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກສາລີປະກອບມີປຸ໋ຍເຊິ່ງການໄດ້ມາແມ່ນໂຄງການສະໜອງໃຫ້ໂດຍບໍ່ໄດ້ຊື້ເປັນເງິນ ແຕ່ໂຄງການໄດ້ຊື້ປຸ໋ຍມາຈາກປະເທດໄທ.




➢ ໃນກິດຈະກຳການປູກສາລີຂອງຊາວກະສິກອນຢູ່ໃນເຂດທີ່ລົງສຶກສາແມ່ນບໍ່ໄດ້ນຳໃຊ້ການບໍລິການເຂົ້າໃນການຜະລິດເພາະເຂົາເຈົ້າບໍ່ໄດ້ມີການຈ້າງ ຫຼື ອຸປະກອນຊະນິດໃດໆເຂົ້າໃນການປູກ.

➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກສາລີແມ່ນມີພຽງແນວພັນເທົ່ານັ້ນເຊິ່ງການໄດ້ມາບໍ່ໄດ້ຊື້ໂຄງການ IFAD ສະໜອງໃຫ້ແຕ່ທາງໂຄງການຊື້ແນວພັນນີ້ມາຈາກປະເທດໄທ.




ຈາກລວບລວມຂໍ້ມູນຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ປັດໃຈນຳເຂົ້າໃນການປູກສາລີແມ່ນມີລັກສະນະແກ່ຍາວທັງພາຍໃນ ແລະ ຕ່າງປະເທດໂດຍສະເພາະແມ່ນຕ່ອງໂສ້ຂອງປຸ໋ຍ, ແນວພັນ ເພາະທັງສອງປັດໃຈນີ້ແມ່ນນຳມາຈາກປະເທດໄທ. ການນຳເຂົ້າປັດໃຈດັ່ງກ່າວແມ່ນໂຄງການເປັນຜູ້ນຳເຂົ້າມາໂດຍການຊື້ເປັນເງິນສົດດັ່ງແຜນວາດລຸ່ມນີ້:




ຮູບທີ9: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກເຂົ້າສາລີຂອງຄອບຄົວເຫຼືອກິນ

ຂໍ້ສັງເກດ:

●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

●——● ໝາຍເຖິງໄຊ້ເປັນເງິນສົດ

▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ປຸ໋ຍທີ່ຊາວກະສິກອນນຳໃຊ້ແມ່ນບໍ່ໄດ້ຊື້ໂຄງການ IFAD ເປັນຜູ້ສະໜອງໃຫ້
2. ໂຄງການ IFAD ໄດ້ຊື້ປຸ໋ຍມາຈາກປະເທດໄທ
3. ແນວພັນສາລີທີ່ຊາວກສິກອນນຳມາປູກນັ້ນແມ່ນບໍ່ໄດ້ຊື້ໂຄງການ IFAD ເປັນຜູ້ສະໜອງໃຫ້
4. ໂຄງການ IFAD ໄດ້ຊື້ແນວພັນມາຈາກຮ້ານຄ້າທີ່ຢູ່ເມືອງສາມັກຄີໄຊ
5. ຮ້ານຄ້າຊື້ແນວພັນມາແຕ່ຕະຫຼາດປາກເຊ
6. ແມ່ຄ້າປາກເຊຊື້ແນວພັນມາແຕ່ປະເທດໄທ

4. <u>ກິດຈະກຳການປູກຜັກກາດຂອງຄອບຄົວເຫຼືອກິນ</u>

ໃນຄອບຄົວຊາວກະສິກອນທີ່ປູກຜັກກາດເຂົາເຈົ້າ ແມ່ນໄດ້ມີການນຳໃຊ້ປັດໃຈນຳເຂົ້າຄື:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກ ວິທີຕ່າງໆ ຂອງການປູກຜັກກາດ ແມ່ນໄດ້ຮັບຂໍ້ມູນມາຈາກເພື່ອນບ້ານທີ່ເຄີຍເຮັດມາແນະນຳໃຫ້.

➢ ເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກຜັກກາດມີປຸ໋ຍ ເຊິ່ງການໄດ້ມາແມ່ນໄດ້ຊື້ມາຈາກ

ຊາວກະສິກອນ ← ຕະຫຼາດເມືອງໄຊເສດຖາ ← ຕະຫຼາດປາກເຊ ← ປະເທດໄທ

➢ ໃນກິດຈະກຳການປູກຜັກກາດ ຂອງຊາວກະສິກອນຢູ່ໃນເຂດທີ່ລົງສຶກສາແມ່ນບໍ່ໄດ້ໃຊ້ບໍລິການເຂົ້າໃນການຜະລິດເພາະເຂົາເຈົ້າບໍ່ໄດ້ມີການຈ້າງແຮງງານ ຫຼື ເຊົ່າອຸປະກອນຊະນິດໃດໆເຂົ້າໃນການປູກ.

➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກຜັກກາດແມ່ນມີພຽງແນວພັນເທົ່ານັ້ນ ເຊິ່ງການໄດ້ມາແມ່ນໄດ້ຊື້ມາຄື:

ຊາວກະສິກອນ ← ຕະຫຼາດເມືອງໄຊເສດຖາ ← ຕະຫຼາດປາກເຊ ← ປະເທດໄທ

ຈາກລວບລວມຂໍ້ມູນຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ປັດໃຈນຳເຂົ້າໃນການປູກຜັກກາດຂອງຊາວກະສິກອນແມ່ນມີສາຍພົວພັນທັງພາຍໃນ ແລະ ຕ່າງປະເທດໂດຍສະເພາະແມ່ນເຄືອຂ່າຍຂອງປຸ໋ຍ, ແນວພັນ ເພາະປັດໃຈນຳເຂົ້າຊະນິດດັ່ງກ່າວ ບໍ່ສາມາດຜະລິດເອງໄດ້ ສະນັ້ນຈຶ່ງຈຳເປັນຕ້ອງນຳເຂົ້າຈາກຕ່າງແຂວງ ຫຼື ຕ່າງປະເທດ ແລະ ການຜະລິດກໍ່ເປັນການຜະລິດທີ່ມີລັກສະນະເຄມີດັ່ງແຜນວາດລຸ່ມນີ້:




ຮູບທີ10: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກຜັກກາດຂອງຄອບຄົວເຫຼືອກິນ

ຂໍ້ສັງເກດ:
●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
●——● ໝາຍເຖິງໄດ້ຊື້ເປັນເງິນສົດ
━━━ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ເຕັກນິກວິທີການເພື່ອນບ້ານແນະນຳໃຫ້
2. ປຸ໋ຍ, ແນວພັນທີ່ຊາວກະສິກອນນຳໃຊ້ນັ້ນແມ່ນຊື້ມາຈາກຕະຫຼາດເມືອງໄຊເສດຖາ
3. ແມ່ຄ້າເມືອງໄຊເສດຖາຊື້ປຸ໋ຍ, ແນວພັນມາຈາກປາກເຊ
4. ແມ່ຄ້າປາກເຊຊື້ປຸ໋ຍ, ແນວພັນມາຈາກປະເທດໄທ

5. <u>ການລ້ຽງ ງົວ, ຄວາຍຂອງຄອບຄົວເຫຼືອກິນ</u>

ປັດໃຈທີ່ຊາວກະສິກອນນຳເຂົ້າໃນການລ້ຽງງົວ, ຄວາຍປະກອບມີ:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກ ວິທີຕ່າງໆໃນການ ລ້ຽງງົວ, ຄວາຍ ແມ່ນໄດ້ຮັບຂໍ້ມູນມາຈາກອາສາສະໝັກ ສັດຕະວະແພດບ້ານແນະນຳໃຫ້

➢ ເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງແມ່ນປະກອບມີວັກຊິນ, ເກືອ ເຊິ່ງການໄດ້ມາຂອງວັກຊິນແມ່ນຈ້າງບໍລິການນຳອາສາສະໝັກ ສັດຕະວະແພດບ້ານ ແຕ່ ອສບ ໄດ້ຊື້ວັກຊິນມາຈາກ:




➢ ບໍລິການທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງງົວ, ຄວາຍແມ່ນມີພຽງຈ້າງບໍລິການສັກວັກຊິນນຳອາສາສະໝັກ ສັດຕະວະແພດບ້ານເທົ່ານັ້ນ




➢ ສິ່ງທີ່ບໍ່ເປັນເຄມີທີ່ໃຊ້ຢູ່ໃນການລ້ຽງປະກອບມີແນວພັນ ເຊິ່ງເປັນແນວພັນພື້ນເມືອງທີ່ຫາຊື້ໄດ້ນຳເພື່ອນບ້ານໃກ້ຄຽງ ແລະ ເຊືອກການໄດ້ມາແມ່ນຊື້ມາຈາກ




ຈາກການລວບລວມຂໍ້ມູນຂ້າງເທິງນີ້ແມ່ນສັງເກດເຫັນວ່າຕ່ອງໂສ້ປັດໃຈນຳເຂົ້າໃນການລ້ຽງງົວ, ຄວາຍ ຂອງຊາວກະສິກອນມີລັກສະນະຍາວໂດຍສະເພາະເຄືອຂ່າຍຂອງວັກຊິນ, ເກືອ ແລະ ເຊືອກດັ່ງແຜນວາດທີ່ສະແດງລຸ່ມນີ້:




ຮູບທີ11: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງງົວ, ຄວາຍຂອງຄອບຄົວເຫຼືອກິນ

ຂໍ້ສັງເກດ:
- ●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
- ●——● ໝາຍເຖິງໄດ້ຊື້ເປັນເງິນສົດ
- ▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ວັກຊິນທີ່ໃຊ້ສັກສັດແມ່ນຈ້າງບໍລິການສັກນຳ ອສບ
2. ອສບ ຊື້ວັກຊິນມາຈາກກະສິກຳເມືອງ
3. ກະສິກຳເມືອງຊື້ວັກຊິນມາຈາກກະສິກຳແຂວງ
4. ກະສິກຳແຂວງຊື້ວັກຊິນມາຈາກກົມລ້ຽງສັດ
5. ກົມລ້ຽງສັດຊື້ວັກຊິນມາຈາກໂຮງງານຜະລິດວັກຊິນໜອງແຕ່ງ
6. ເຊືອກ, ເກືອທີ່ຊາວກະສິກອນນຳໃຊ້ແມ່ນຊື້ມາຈາກຕະຫຼາດເມືອງໄຊເສດຖາ
7. ແມ່ຄ້າເມືອງໄຊເສດຖາຊື້ ເຊືອກ, ເກືອ ມາຈາກຕະຫຼາດປາກເຊ
8. ແນວພັນທີ່ລ້ຽງເປັນແນວພັນພື້ນເມືອງຊື້ນຳປະຊາຊົນທີ່ຢູ່ບ້ານໃກ້ຄຽງ

6. ກິດຈະກຳການລ້ຽງແບ້ຂອງຄອບຄົວເຫຼືອກິນ

ປັດໃຈທີ່ຊາວກະສິກອນນຳເຂົ້າໃນການລ້ຽງແບ້ປະກອບມີ:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີຕ່າງໆໃນການລ້ຽງແບ້ແມ່ນໄດ້ຮັບຂໍ້ມູນມາຈາກເພື່ອນບ້ານແນະນຳໃຫ້.




➢ ເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງແບ້ແມ່ນປະກອບມີ: ເກືອ ເຊິ່ງການໄດ້ມາຈາກ



➢ ໃນການລ້ຽງແບ້ຊາວກະສິກອນຄອບຄົວເຫຼືອກິນແມ່ນບໍ່ໄດ້ນຳໃຊ້ບໍລິການໃດໆເຂົ້າໃນການລ້ຽງ.

➢ ສິ່ງທີ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງແບ້ແມ່ນມີພຽງແນວພັນ ການໄດ້ມາແມ່ນຂໍນຳພີ່ນ້ອງ ແລະ ເປັນແນວພັນພື້ນເມືອງ




ຜ່ານການສັງລວມຂໍ້ມູນຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ປັດໃຈນຳເຂົ້າໃນການລ້ຽງແບ້ແມ່ນສັ້ນບໍ່ຂື້ນກັບຫຼາຍພາກສ່ວນໂດຍສະເພາະແມ່ນແນວພັນ, ແຫຼ່ງຂໍ້ມູນຂ່າວສານ ຍົກເວັ້ນຕ່ອງໂສ້ຂອງເກືອແມ່ນມີລັກສະນະຍາວ ແຕ່ຍາວພາຍໃນປະເທດ ດັ່ງແຜນວາດລຸ່ມນີ້:




ຮູບທີ12: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງແບ້ຂອງຄອບຄົວເຫຼືອກິນ

ຂໍ້ສັງເກດ:
●- - - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
●——● ໝາຍເຖິງໄດ້ຊື້ເປັນເງິນສົດ
▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ເຕັກນິກ ວິທີການ, ແນວພັນແມ່ນເພື່ອນບ້ານເປັນຜູ້ສະໜອງໃຫ້
2. ເກືອທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງແມ່ນຊື້ມາຈາກຕະຫຼາດເມືອງໄຊເສດຖາ
3. ແມ່ຄ້າທີ່ຢູ່ຕະຫຼາດເມືອງໄຊເສດຖາຊື້ເກືອມາຈາກປາກເຊ

7. ກິດຈະກຳການລ້ຽງໝູຂອງຄອບຄົວເຫຼືອກິນ

ປັດໃຈນຳເຂົ້າຂອງຄອບຄົວຊາວກະສິກອນທີ່ລ້ຽງໝູປະກອບມີ:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກ ວິທີຕ່າງໆໃນການລ້ຽງໝູແມ່ນໄດ້ຮັບຂໍ້ມູນມາຈາກອາສາສະໝັກສັດຕະວະແພດບ້ານແນະນຳໃຫ້.



➢ ເຄມີທີ່ຊາວກະສິນຳໃຊ້ເຂົ້າໃນການລ້ຽງໝູມີພຽງແຕ່ວັກຊິນ ເຊິ່ງການໄດ້ມາແມ່ນຈ້າງບໍລິການຈາກ ອາສາສະໝັກ ສັດຕະແພດບ້ານ ແຕ່ ອສບ ໄດ້ຊື້ວັກຊິນມາຈາກ.




➢ ບໍລິການທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງໝູແມ່ນມີພຽງຈ້າງບໍລິການສັກວັກຊິນຈາກ ອາສາສະໝັກ ສັດຕະວະແພດບ້ານເທົ່ານັ້ນ.




➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງໝູປະກອບມີແນວພັນ ການໄດ້ມາຊື້ນຳປະຊາຊົນທີ່ຢູ່ພາຍໃນບ້ານດຽວກັນ ແລະ ເປັນແນວພັນພື້ນເມືອງ ສ່ວນອາຫານທີ່ໃຊ້ລ້ຽງແມ່ນບໍ່ໄດ້ຊື້.




ຜ່ານການສັງລວມຂໍ້ມູນຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ປັດໃຈນຳເຂົ້າດັ່ງກ່າວນີ້ມີລັກສະນະສັ້ນສາມາດຫາໄດ້ໃນທ້ອງຖິ່ນໂດຍສະເພາະແມ່ນແນວພັນ, ອາຫານ ແລະ ອຸປະກອນໃນການສ້າງຄອກຕ່າງໆ ຍົກເວັ້ນຕ່ອງໂສ້ຂອງວັກຊິນແມ່ນມີລັກສະນະແກ່ຍາວຮອດນະຄອນຫຼວງວຽງຈັນດັ່ງແຜນວາດທີ່ສະແດງລຸ່ມນີ້:




ຮູບທີ13: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງໝູຂອງຄອບຄົວເຫຼືອກິນ

ຂໍ້ສັງເກດ: ●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

●——● ໝາຍເຖິງໄດ້ຊື້ເປັນເງິນສົດ

▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ວັກຊີນ, ແຫຼ່ງຂໍ້ມູນຂ່າວສານທີ່ຊາວກະສິກອນນຳໃຊ້ສັກສັດແມ່ນມາຈາກ ອສບ
2. ອສບ ຊື້ວັກຊີນມາຈາກກະສິກຳເມືອງ
3. ກະສິກຳເມືອງຊື້ວັກຊີນມາຈາກກະສິກຳແຂວງ
4. ກະສິກຳແຂວງຊື້ວັກຊີນມາຈາກກົມລ້ຽງສັດ
5. ກົມລ້ຽງສັດຊື້ວັກຊີນມາຈາກໂຮງງານຜະລິດວັກຊີນໜອງແຕ່ງ
6. ແນວພັນທີ່ຊາວກະສິກອນນຳໃຊ້ລ້ຽງນັ້ນເປັນແນວພັນພື້ນເມືອງຫາຊື້ໄດ້ນຳປະຊາຊົນໃນບ້ານໃກ້ຄຽງ
7. ອາຫານທີ່ໃຊ້ລ້ຽງບໍ່ໄດ້ຊື້ຂອງຕົນເອງ

8. <u>ກິດຈະກຳການລ້ຽງສັດປີກຂອງຄອບຄົວເຫຼືອກິນ</u>

ປັດໃຈນຳເຂົ້າການລ້ຽງສັດປີກຈຳພວກໄກ່, ເປັດ ແລະ ໄກ່ງວງ ຂອງຊາວກະສິກອນໃນທັງສອງບ້ານທີ່ໄດ້ສຳພາດຂອງຄອບຄົວເຫຼືອກິນ ຄອບຄົວນີ້ປະກອບມີຄື:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີຕ່າງໆໃນການລ້ຽງສັດປີກແມ່ນໄດ້ຮັບຂໍ້ມູນມາຈາກອາສາສະໝັກ ສັດຕະວະແພດບ້ານແນະນຳໃຫ້.




➢ ເຄມີທີ່ຊາວກະສິນຳໃຊ້ເຂົ້າໃນການລ້ຽງສັດປີກມີພຽງແຕ່ວັກຊີນ ເຊິ່ງການໄດ້ມາແມ່ນຈ້າງບໍລິການຈາກອາສາສະໝັກ ສັດຕະແພດບ້ານ ແຕ່ ອສບໄດ້ຊື້ວັກຊີນມາຈາກ.




➢ ບໍລິການທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງສັດປີກແມ່ນມີພຽງຈ້າງບໍລິການສັກວັກຊີນຈາກ ອາສາສະໝັກ ສັດຕະວະແພດບ້ານເທົ່ານັ້ນ ນອກຈາກນີ້ແມ່ນບໍ່ໄດ້ນຳໃຊ້.




➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງສັດປີກປະກອບມີແນວພັນ, ຮຳ, ເຂົ້າປຽນ ເຊິ່ງການໄດ້ມາຂອງປັດໃຈເຫຼົ່ານີ້ແມ່ນຊື້ນຳປະຊາຊົນທີ່ຢູ່ພາຍໃນບ້ານດຽວກັນ ແລະ ທີວອາຫານທີ່ໃຊ້ລ້ຽງແມ່ນຊື້ມາຈາກ.




ຈາກການລວບລວມຂໍ້ມູນຂ້າງເທິງນີ້ສັງເກດເຫັນວ່າຕ້ອງໄສ້ປັດໃຈນຳເຂົ້າໃນການລ້ຽງສັດປີກແມ່ນມີລັກສະນະຍາວ ແລະ ຂຶ້ນກັບຫຼາຍພາກສ່ວນບໍ່ເປັນເອກະລາດໂດຍສະເພາະ

ຕ່ອງໂສ້ຂອງວັກຊີນ, ທີວອາຫານ  ແຕ່ວ່າແນວພັນ, ຮຳ, ເຂົ້າປຸ່ນທີ່ຊາວກະສິກອນນຳມາໃຊ້ໃນການລ້ຽງມີລັກສະນະສັ້ນດັ່ງແຜນວາດລຸ່ມນີ້:




ຮູບທີ14: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງສັດປີກຂອງຄອບຄົວເຫຼືອກິນ

ຂໍ້ສັງເກດ:
- ●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
- ●——● ໝາຍເຖິງໄດ້ຊື້ເປັນເງິນສົດ
- ▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ວັກຊີນທີ່ນຳໃຊ້ສັກສັດປີກແມ່ນຈ້າງບໍລິການສັກຈາກ ອສບ
2. ອສບ ຊື້ວັກຊີນມາຈາກກະສິກຳເມືອງ
3. ກະສິກຳເມືອງຊື້ວັກຊີນມາຈາກກະສິກຳແຂວງ
4. ກະສິກຳແຂວງຊື້ວັກຊີນມາຈາກກົມລ້ຽງສັດ
5. ກົມລ້ຽງສັດຊື້ວັກຊີນມາຈາກໂຮງງານຜະລິດວັກຊີນໜອງແຕ່ງ
6. ແນວພັນທີ່ຊາວກະສິກອນນຳມາລ້ຽງແມ່ນເປັນແນວພັນພື້ນເມືອງຫາຊື້ໄດ້ຕາມທ້ອງຖິ່ນ
7. ທີວອາຫານທີ່ຊາວກະສິກອນນຳໃຊ້ແມ່ນໄດ້ຊື້ມາຈາກຕະຫຼາດເມືອງໄຊເສດຖາ
8. ແມ່ຄ້າເມືອງໄຊເສດຖາຊື້ທີວອາຫານປາກເຊ
9. ແມ່ຄ້າປາກເຊຊື້ທີວອາຫານມາຈາກປະເທດໄທ
10. ອາຫານທຳມະຊາດມີຮຳ, ເຂົ້າປຸ່ນຊື້ມາຈາກປະຊາຊົນໃນບ້ານໃກ້ຄຽງ

### 4.2.2. <u>ຕ່ອງໂສ້ປັດໃຈນຳເຂົ້າກິດຈະກຳການຜະລິດຂອງລະດັບຄອບຄົວກຸ້ມກິນ</u>

ຈາກການສຳພາດຊາວກະສິກອນຄອບຄົວກຸ້ມກິນທັງສອງບ້ານທີ່ລົງສຶກສາເຫັນໄດ້ວ່າ ກິດຈະກຳຫຼັກທີ່ເຂົາເຈົ້າຜະລິດມີ: ປູກເຂົ້ານາປີ, ປູກເຂົ້າໄຮ່, ປູກສາລີ,  ລ້ຽງງົວ, ລ້ຽງຄວາຍ, ລ້ຽງໝູ, ລ້ຽງແບ້ ແລະ ສັດປີກ.

1. <u>ກິດຈະກຳການປູກເຂົ້ານາຂອງຄອບຄົວກຸ້ມກິນ</u>

ໃນການປູກເຂົ້າຂອງຊາວກະສິກອນທີ່ຢູ່ໃນເຂດນີ້ສ່ວນໃຫ່ຍແມ່ນປູກເຂົ້ານາປີເພາະວ່າພື້ນທີ່ດັ່ງກ່າວບໍ່ມີລະບົບຊົນລະປະທານສະນັ້ນຈິ່ງຈຳເປັນຕ້ອງອາໃສນ້ຳຈາກທຳມະຊາດໃຊ້ເຂົ້າໃນການຜະລິດ ແລະ ປັດໃຈທີ່ນຳໃຊ້ເຂົ້າໃນການປູກເຂົ້ານາປີມີຄື:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກ ວິທີຕ່າງໆໃນການປູກເຂົ້າແມ່ນໄດ້ຮັບຂໍ້ມູນມາຈາກກະສິກຳເມືອງເປັນຜູ້ສະໜອງໃຫ້.




➢ ເຄມີທີ່ຊາວກະສິນຳໃຊ້ເຂົ້າໃນການຜະລິດປະກອບມີນ້ຳມັນກາຊວນ, ເກືອ ການໄດ້ມາຂອງທັງສອງປັດໃຈນີ້ແມ່ນຊື້ເປັນເງິນສົດ ເຊິ່ງນ້ຳມັນກາຊວນຊື້ມາຈາກ.




➢ ການປູກເຂົ້ານາປີຂອງຊາວກະສິກອນຄອບຄົວທີ່ໄດ້ສຳພາດແມ່ນບໍ່ໄດ້ມີການນຳໃຊ້ບໍລິການເຂົ້າໃນການປູກ ເພາະວ່າເຂົາເຈົ້າບໍ່ໄດ້ມີການຈ້າງ ຫຼື ເຊົ່າອຸປະກອນຊະນິດໃດໆເລີຍ.

➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກເຂົ້ານາປີປະກອບມີແນວພັນເຊິ່ງການໄດ້ມາແມ່ນບໍ່ໄດ້ຊື້ກະສິເມືອງສະໜອງໃຫ້.




ຜ່ານການສັງລວມຂໍ້ມູນປັດໃຈນຳເຂົ້າທີ່ຊາວກະສິກອນນຳໃຊ້ເຂົ້າໃນກິດຈະກຳການປູກເຂົ້ານາປີຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ມີລັກສະນະຍາວ ຂຶ້ນກັບຫຼາຍພາກສ່ວນໂດຍສະເພາະແມ່ນຕ່ອງໂສ້ນ້ຳມັນກາຊວນ, ເກືອ ດັ່ງແຜນວາດທີ່ສະແດງລຸ່ມນີ້:




ຮູບທີ15: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກເຂົ້ານາປີຂອງຄອບຄົວກຸ້ມກິນ

ຂໍ້ສັງເກດ: ●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

●——● ໝາຍເຖິງໄດ້ຊື້ເປັນເງິນສົດ

▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ເຕັກນິກ ວິທີການ ແລະ ແນວພັນແມ່ນບໍ່ໄດ້ຊື້ກະສິກຳເມືອງເປັນຜູ້ສະໜອງໃຫ້
2. ເກືອທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກເຂົ້ານັ້ນແມ່ນຊື້ມາຈາກຕະຫຼາດເມືອງໄຊເສດຖາ
3. ແມ່ຄ້າເມືອງໄຊເສດຖາຊື້ເກືອມາຈາກຕະຫຼາດປາກເຊ
4. ນ້ຳມັນກາຊວນທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກເຂົ້ານາປີແມ່ນຊື້ມາຈາກປ້ຳນ້ຳມັນທີ່ຢູ່ເມືອງໄຊ ເສດຖາ
5. ປ້ຳນ້ຳມັນເມືອງໄຊເສດຖາຊື້ນ້ຳມັນມາຈາກປ້ຳນ້ຳປາກເຊ
6. ປ້ຳນ້ຳມັນປາກເຊຊື້ນ້ຳມັນມາຈາກປ້ຳນ້ຳນະຄອນຫຼວງວຽງຈັນ

2. <u>ກິດຈະກຳການປູກເຂົ້າໄຮ່ຂອງຄອບຄົວກຸ້ມກິນ</u>

ການປູກເຂົ້າໄຮ່ຂອງຊາວກະສິກອນໃນເຂດດັ່ງກ່າວແມ່ນໄດ້ໃຊ້ປັດໃຈນຳເຂົ້າຄື:

➢ ແຫຼ່ງຂໍ້ມູນຂ່າວສານໝາຍເຖິງ ຂໍ້ມູນທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີຕ່າງໆ ຂອງການປູກເຂົ້າໄຮ່ໃນເຂດດັ່ງກ່າວແມ່ນໄດ້ຮັບຂໍ້ມູນຈາກເພື່ອນບ້ານໃກ້ຄຽງ




➢ ການປູກເຂົ້າໄຮ່ຂອງຊາວກະສິກອນໃນເຂດນີ້ແມ່ນບໍ່ໄດ້ນຳໃຊ້ເຄມີຊະນິດໃດໆເຂົ້າໃນການປູກ.

➢ ກິດຈະກຳການປູກເຂົ້າໄຮ່ຂອງຊາວກະສິກອນແມ່ນບໍ່ໄດ້ມີການນຳໃຊ້ການບໍລິການ ເພາະວ່າເຂົາເຈົ້າບໍ່ມີການຈ້າງແຮງງານ ຫຼື ເຊົ່າອຸປະກອນຊະນິດໃດເຂົ້າໃນການປູກ.

➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກແມ່ນມີພຽງແຕ່ແນວພັນເຊື້ອ ເປັນແນວພັນພື້ນເມືອງ ການໄດ້ມາແມ່ນບໍ່ໄດ້ຊື້ແລກປ່ຽນນຳເພື່ອນບ້ານໃກ້ຄຽງ.




ຜ່ານການລວບລວມຂໍ້ມູນຕ່ອງໂສ້ປັດໃຈນຳເຂົ້າສັງເກດເຫັນວ່າການປູກເຂົ້າໄຮ່ແມ່ນມີລັກສະນະສັ້ນເປັນເອກະລາດ ແລະ ເປັນທ້ອງຖິ່ນເພາະວ່າທຸກໆປັດໃຈທີ່ນຳໃຊ້ແມ່ນມາຈາກທ້ອງຖິ່ນບໍ່ວ່າຈະເປັນແຫຼ່ງຂໍ້ມູນຂ່າວສານ, ສິ່ງທີ່ບໍ່ເປັນເຄມີ, ການບໍລິການ ແລະ ສິ່ງທີ່ເປັນເຄມີແມ່ນບໍ່ໄດ້ນຳໃຊ້ສະນັ້ນການຜະລິດຈຶ່ງເປັນການຜະລິດແບບພື້ນເມືອງ ແລະ ປອດສານເຄມີດັ່ງແຜນວາດລຸ່ມນີ້:



ຮູບທີ16: ແຜນວາດຕ່ອງໂສ້ການປູກເຂົ້າໄຮ່ຂອງຄອບຄົວກຸ້ມກິນ

ຂໍ້ສັງເກດ:
●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
●——● ໝາຍເຖິງໄດ້ຊື້ເປັນເງິນສົດ
▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ແຫຼ່ງຂໍ້ມູນຂ່າວສານ, ແນວພັນແມ່ນໄດ້ມາຈາກເພື່ອນບ້ານໃກ້ຄຽງ ຫຼື ປະຊາຊົນໃນບ້ານດຽວກັນເປັນຜູ້ສະໜອງໃຫ້

3. <u>ກິດຈະກຳປູກສາລີຂອງຄອບຄົວກຸ້ມກິນ</u>

ການປູກສາລີຂອງຊາວກະສິກອນຢູ່ເຂດດັ່ງກ່າວແມ່ນໄດ້ມີການນຳໃຊ້ປັດໃຈນຳເຂົ້າຄື:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີຕ່າງໆ ຂອງການປູກສາລີແມ່ນໄດ້ຮັບຂໍ້ມູນມາຈາກໂຄງການ IFAD ເປັນຜູ້ສະໜອງໃຫ້.




➢ ເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກສາລີປະກອບມີປຸ໋ຍເຊິ່ງການໄດ້ມາແມ່ນໂຄງການສະໜອງໃຫ້ໂດຍບໍ່ໄດ້ຊື້ເປັນເງິນສົດ ແຕ່ໂຄງການໄດ້ຊື້ປຸ໋ຍມາຈາກປະເທດໄທ.




➢ ໃນກິດຈະກຳການປູກສາລີຂອງຊາວກະສິກອນຢູ່ໃນເຂດທີ່ລົງສຶກສາແມ່ນບໍ່ໄດ້ນຳໃຊ້ການບໍລິການໃດໆເຂົ້າໃນການຜະລິດເພາະເຂົາເຈົ້າບໍ່ໄດ້ມີການຈ້າງ ຫຼື ເຊົ່າອຸປະກອນຕ່າງໆເຂົ້າໃນການປູກ.

➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກສາລີແມ່ນມີພຽງແນວພັນເທົ່ານັ້ນ ເຊິ່ງການໄດ້ມາແມ່ນໂຄງການ IFAD ສະໜອງໃຫ້ ແຕ່ທາງໂຄງການຊື້ແນວພັນນີ້ມາຈາກປະເທດໄທ.




ຜ່ານການລວບລວມຂໍ້ມູນຂ້າງເທິງນີ້ສັງເກດເຫັນວ່າ ຕ່ອງໂສ້ປັດໃຈນຳເຂົ້າໃນການປູກສາລີແມ່ນມີລັກສະນະແກ່ຍາວທັງພາຍໃນ ແລະ ຕ່າງປະເທດ ໂດຍສະເພາະແມ່ນຕ່ອງໂສ້ຂອງປຸ໋ຍ, ແນວພັນ ເພາະທັງສອງປັດໃຈນີ້ແມ່ນນຳມາຈາກປະເທດໄທ ເຊິ່ງການນຳເຂົ້າປັດໃຈດັ່ງກ່າວແມ່ນໂຄງການເປັນຜູ້ນຳເຂົ້າມາໂດຍການຊື້ເປັນເງິນສົດດັ່ງແຜນວາດລຸ່ມນີ້:




ຮູບທີ17: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກສາລີຂອງຄອບຄົວກຸ້ມກິນ

ຂໍ້ສັງເກດ: ●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

●——● ໝາຍເຖິງໄດ້ຊື້ເປັນເງິນສົດ

▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ແຫຼ່ງຂໍ້ມູນຂ່າວສານ, ແນວພັນ, ປຸ໋ຍແມ່ນໂຄງການ IFAD ເປັນຜູ້ສະໜອງໃຫ້
2. ສຳລັບແນວພັນ, ປຸ໋ຍແມ່ນທາງໂຄງການໄດ້ຊື້ມາແຕ່ປະເທດໄທ

4. <u>ກິດຈະກຳການລ້ຽງງົວ, ຄວາຍຂອງຄອບຄົວກຸ້ມກິນ</u>

ປັດໃຈທີ່ຊາວກະສິກອນນຳເຂົ້າໃນການລ້ຽງງົວ, ຄວາຍ ປະກອບມີ:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກ ວິທີຕ່າງໆ ໃນການລ້ຽງງົວ, ຄວາຍ ແມ່ນໄດ້ຮັບຂໍ້ມູນມາຈາກອາສາສະໝັກ ສັດຕະວະແພດບ້ານເປັນຜູ້ແນະນຳໃຫ້.




➢ ເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງແມ່ນປະກອບມີວັກຊີນ, ເກືອ ເຊິ່ງການໄດ້ມາຂອງວັກຊີນແມ່ນຈ້າງບໍລິການນຳອາສາສະໝັກ ສັດຕະວະແພດບ້ານ ແຕ່ວ່າ ອສບ ໄດ້ຊື້ວັກຊີນມາຈາກ.




➢ ບໍລິການທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງງົ ການສັກວັກຊີນນຳອາສາສະໝັກສັດຕະວະແພດບ້ານເທົ່ານັ້ນ.

➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ຢູ່ໃນການລ້ຽງປະກອບມີແນວພັນ ເຊິ່ງເປັນແນວພັນພື້ນເມືອງຫາຊື້ໄດ້ນຳເພື່ອນບ້ານໃກ້ຄຽງ ແລະ ເຊືອກການໄດ້ມາແມ່ນຊື້ມາຈາກ.

ຊາວກະສິກອນ ← ຕະຫຼາດເມືອງໄຊເສດຖາ ← ຕະຫຼາດປາກເຊ

ຜ່ານການລວບລວມຂໍ້ມູນຂ້າງເທິງນີ້ສັງເກດໄດ້ວ່າຕ່ອງໂສ້ປັດໃຈນຳເຂົ້າການລ້ຽງງົວ, ຄວາຍ ຂອງຊາວກະສິກອນມີລັກສະນະຍາວໂດຍສະເພາະເຄືອຂ່າຍຂອງວັກຊີນ, ເກືອ ແລະ ເຊືອກ ດັ່ງແຜນວາດທີ່ສະແດງລຸ່ມນີ້:




ຮູບທີ18: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງງົວ, ຄວາຍ ຂອງຄອບຄົວກຸ້ມກິນ

ຂໍ້ສັງເກດ:
●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
●——● ໝາຍເຖິງໄດ້ຊື້ເປັນເງິນສົດ
━━ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ວັກຊີນທີ່ຊາວກະສິກອນນຳໃຊ້ແມ່ນໄດ້ຈ້າງບໍລິການສັກນຳ ອສບ
2. ອສບ ຊື້ວັກຊີນມາຈາກກະສິກຳເມືອງ
3. ກະສິກຳເມືອງຊື້ວັກຊີນມາຈາກກະສິກຳແຂວງ
4. ກະສິກຳແຂວງຊື້ວັກຊີນມາຈາກກົມລ້ຽງສັດ
5. ກົມລ້ຽງສັດຊື້ວັກຊີນມາຈາກໂຮງງານຜະລິດວັກຊີນໜອງແຕ່ງ
6. ເຊືອກ, ເກືອ ແມ່ນຊື້ມາຈາກຕະຫຼາດເມືອງໄຊເສດຖາ
7. ແມ່ຄ້າເມືອງໄຊເສດຖາຊື້ເຊືອກ, ເກືອມາຈາກຕະຫຼາດປາກເຊ
8. ແນວທີ່ລ້ຽງເປັນແນວພັນພື້ນເມືອງຊື້ນຳປະຊາຊົນໃນບ້ານໃກ້ຄຽງ

5. <u>ກິດຈະກຳການລ້ຽງແບ້ຂອງຄອບຄົວກຸ້ມກິນ</u>

ປັດໃຈທີ່ຊາວກະສິກອນນຳເຂົ້າໃນການລ້ຽງແບ້ປະກອບມີ:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີຕ່າງໆໃນການລ້ຽງແບ້ ແມ່ນໄດ້ຮັບຂໍ້ມູນມາຈາກໂຄງການ IFAD ເປັນຜູ້ສະໜອງໃຫ້.




➢ ເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງແບ້ແມ່ນປະກອບມີ ເກືອ ແລະ ວັກຊິນ ເຊິ່ງການໄດ້ມາຂອງວັກຊິນແມ່ນຈ້າງບໍລິການຈາກ ອສບ ແຕ່ວ່າອສບໄດ້ຊື້ມາຈາກ.




➢ ໃນການລ້ຽງແບ້ຊາວກະສິກອນຄອບຄົວພໍ່ກຸ້ມກິນແມ່ນໄດ້ມີນຳໃຊ້ບໍລິການຄືການຈ້າງ ອສບ ສັກວັກຊິນໃຫ້ແກ່ສັດລ້ຽງຂອງເຂົາເຈົ້າ.




➢ ສິ່ງທີ່ເປັນບໍ່ເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງແບ້ແມ່ນມີແນວພັນ,ເຊືອກ ແລະ ເກືອ ເຊິ່ງການໄດ້ມາຂອງ ເຊືອກ, ເກືອ ແມ່ນຊື້ມາຈາກ:




ແຕ່ວ່າແນວພັນ ແລະ ກ້ອນແຮ່ທາດແມ່ນທາງໂຄງການເປັນຜູ້ສະໜອງໃຫ້.

ຜ່ານການສັງລວມຂໍ້ມູນຂ້າງເທິງນີ້ສັງເກດໄດ້ວ່າຕ່ອງໂສ້ປັດໃຈນຳເຂົ້າການລ້ຽງແບ້ແມ່ນ ມີລັກສະນະຍາວຂຶ້ນກັບຫຼາຍພາກສ່ວນໂດຍສະເພາະແມ່ນແນວພັນ, ວັກຊິນ, ເກືອ ແລະ ເຊືອກ ດັ່ງແຜນວາດລຸ່ມນີ້:




ຮູບທີ19: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງແບ້ຂອງຄອບຄົວກຸ້ມກິນ

ຂໍ້ສັງເກດ:
●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
●——● ໝາຍເຖິງໄດ້ຊື້ເປັນເງິນສົດ
▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ແຫຼ່ງຂໍ້ມູນຂ່າວສານ, ແນວພັນ, ອາຫານເສີມແມ່ນໂຄງການ IFAD ເປັນຜູ້ສະໜອງໃຫ້
2. ວັກຊີນທີ່ຊາວກະສິກອນນຳໃຊ້ແມ່ນບໍລິການຈ້າງສັກນຳ ອສບ
3. ອສບ ຊື້ວັກຊີນມາຈາກກະສິກຳເມືອງ
4. ກະສິກຳເມືອງຊື້ວັກຊີນມາຈາກກະສິກຳແຂວງ
5. ກະສິກຳແຂວງຊື້ວັກຊີນມາຈາກກົມລ້ຽງສັດ
6. ກົມລ້ຽງສັດຊື້ວັກຊີນມາຈາກໂຮງງານຜະລິດວັກຊີນໜອງແຕ່ງ
7. ເຊືອກ, ເກືອທີ່ຊາວກະສິກອນນຳໃຊ້ແມ່ນຊື້ມາຈາກຕະຫຼາດເມືອງຊານໄຊ
8. ແມ່ຄ້າເມືອງຊານໄຊຊື້ເກືອ, ເຊືອກມາຈາກຕະຫຼາດປາກເຊ

6. <u>ກິດຈະກຳການລ້ຽງໝູຂອງຄອບຄົວກຸ້ມກິນ</u>

ປັດໃຈນຳເຂົ້າຂອງຄອບຄົວຊາວກະສິກອນທີ່ລ້ຽງໝູປະກອບມີ:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກ ວິທີຕ່າງໆ ໃນການລ້ຽງໝູແມ່ນໄດ້ຮັບຂໍ້ມູນມາຈາກເພື່ອນບ້ານເປັນຜູ້ແນະນຳໃຫ້.




➢ ເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງໝູມີພຽງແຕ່ວັກຊີນ ເຊິ່ງການໄດ້ມາ ແມ່ນຈ້າງບໍລິການຈາກ ອາສາສະໝັກສັດຕະແພດບ້ານ ແຕ່ ອສບໄດ້ຊື້ວັກຊີນມາຈາກ:




➢ ບໍລິການທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງໝູແມ່ນມີພຽງຈ້າງບໍລິການສັກວັກ ຊີນຈາກ ອາສາສະໝັກສັດຕະວະແພດບ້ານເທົ່ານັ້ນ.




➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງໝູປະກອບມີແນວພັນ ແລະ ອາຫານ ການໄດ້ມາຊື້ນຳປະຊາຊົນທີ່ຢູ່ພາຍໃນບ້ານດຽວກັນ ແນວພັນທີ່ໃຊ້ລ້ຽງເປັນແນວ ພັນພື້ນເມືອງຫາໄດ້ຊື້ໄດ້ໃນທ້ອງຖິ່ນ.




ຜ່ານການສັງລວມຂໍ້ມູນຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ປັດໃຈນຳເຂົ້າດັ່ງກ່າວນີ້ມີລັກສະ ນະສັ້ນ ສາມາດຫາໄດ້ໃນທ້ອງຖິ່ນໂດຍສະເພາະແມ່ນແນວພັນ, ອາຫານ ແລະ ອຸປະກອນໃນ

ການສ້າງຄອກຕ່າງໆ ຍົກເວັ້ນຕ່ອງໂສ້ຂອງວັກຊີນແມ່ນມີລັກສະນະຍາວຮອດນະຄອນຫຼວງວຽງຈັນດັ່ງແຜນວາດທີ່ສະແດງລຸ່ມນີ້:




ຮູບທີ20: ແຜນວາດຕ່ອງໂສ້ປັດໃຈນໍາເຂົ້າການລ້ຽງໝູຂອງຄອບຄົວກຸ້ມກິນ

ຂໍ້ສັງເກດ:
- ●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
- ●——● ໝາຍເຖິງໄດ້ຊື້ເປັນເງິນສົດ
- ▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນໍາເຂົ້າ

1. ແນວພັນພື້ນເມືອງ, ຮາ ແມ່ນຊື້ນໍາປະຊາຊົນໃນບ້ານໃກ້ຄຽງ
2. ວັກຊີນທີ່ຊາວກະສິກອນນໍາໃຊ້ແມ່ນບໍລິການຈ້າງສັກຈາກ ອສບ
3. ອສບ ຊື້ວັກຊີນມາຈາກກະສິກໍາເມືອງ
4. ກະສິກໍາເມືອງຊື້ວັກຊີນມາຈາກກະສິກໍາແຂວງ
5. ກະສິກໍາແຂວງຊື້ວັກຊີນມາຈາກກົມລ້ຽງສັດ
6. ກົມລ້ຽງສັດຊື້ວັກຊີນມາຈາກໂຮງງານຜະລິດວັກຊີນໜອງແຕ່ງ

7. <u>ກິດຈະກໍາການລ້ຽງສັດປີກຂອງຄອບຄົວກຸ້ມກິນ</u>

ປັດໃຈນໍາເຂົ້າການລ້ຽງສັດປີກຂອງຊາວກະສິກອນໃນທັງສອງບ້ານທີ່ໄດ້ສໍາພາດຂອງຄອບຄົວກຸ້ມກິນນີ້ປະກອບມີຄື:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີຕ່າງໆໃນການລ້ຽງສັດປີກແມ່ນໄດ້ຮັບຂໍ້ມູນມາຈາກອາສາສະໝັກສັດຕະວະແພດບ້ານເປັນຜູ້ແນະນໍາໃຫ້.




➢ ເຄມີທີ່ຊາວກະສິ່ງນໍາໃຊ້ເຂົ້າໃນການລ້ຽງສັດປີກມີພຽງແຕ່ວັກຊີນເຊິ່ງການໄດ້ມາແມ່ນຈ້າງບໍລິການຈາກອາສາສະໝັກສັດຕະແພດບ້ານ ແຕ່ ອສບໄດ້ຊື້ວັກຊີນມາຈາກ:



➢ ບໍລິການທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງສັດປີກແມ່ນມີພຽງຈ້າງບໍລິການສັກວັກຊີນຈາກອາສາສະມັກ ສັດຕະວະແພດບ້ານເທົ່ານັ້ນນອກຈາກນີ້ແມ່ນບໍ່ໄດ້ນຳໃຊ້.




➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງສັດປີກປະກອບມີແນວພັນ, ຮຳ, ເຂົ້າປຽນ ເຊິ່ງການໄດ້ມາຂອງປັດໃຈເຫຼົ່ານີ້ແມ່ນຊື້ນຳປະຊາຊົນທີ່ຢູ່ພາຍໃນບ້ານດຽວກັນ.




ຈາກການລວບລວມຂໍ້ມູນຂ້າງເທິງນີ້ສັງເກດເຫັນວ່າ ຕ່ອງໂສ້ປັດໃຈນຳເຂົ້າໃນການລ້ຽງສັດປີກແມ່ນມີລັກສະນະສັ້ນເຊັ່ນແນວພັນ, ຮຳ, ເຂົ້າປຽນເພາະວ່າຫາຊື້ໄດ້ພາຍໃນທ້ອງຖິ່ນຍົກເວັ້ນ ຕ່ອງໂສ້ຂອງວັກຊີນທີ່ມີລັກສະນະຍາວຮອດນະຄອນຫຼວງວຽງຈັນດັ່ງແຜນວາດລຸ່ມນີ້:




ຮູບທີ21: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງສັດປີກຂອງຄອບຄົວກຸ້ມກິນ

ຂໍ້ສັງເກດ:
- ●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
- ●——● ໝາຍເຖິງໄດ້ຊື້ເປັນເງິນສົດ
- ▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ວັກຊີນທີ່ຊາວກະສິກອນນຳໃຊ້ແມ່ນໄດ້ຈ້າງບໍລິການສັກນຳ ອສບ
2. ອສບ ຊື້ວັກຊີນມາຈາກກະສິກຳເມືອງ
3. ກະສິກຳເມືອງຊື້ວັກຊີນມາຈາກກະສິກຳແຂວງ
4. ກະສິກຳແຂວງຊື້ວັກຊີນມາຈາກກົມລ້ຽງສັດ
5. ກົມລ້ຽງສັດຊື້ວັກຊີນມາຈາກໂຮງງານຜະລິດວັກຊີນໜອງແຕ່ງ
6. ຮຳ, ເຂົ້າປຽນ ແລະ ແນວພັນແມ່ນຊື້ນຳປະຊາຊົນບ້ານໃກ້ຄຽງ

### 4.2.3. ຕ່ອງໂສ້ປັດໃຈນໍາເຂົ້າກິດຈະກໍາການຜະລິດຂອງລະດັບຄອບຄົວບໍ່ກຸ້ມກິນ

ຈາກການສໍາພາດຊາວກະສິກອນຄອບຄົວບໍ່ກຸ້ມກິນທັງສອງບ້ານທີ່ຢູ່ໃນເຂດລິງສຶກສາ ເຫັນໄດ້ວ່າກິດຈະກໍາຫຼັກທີ່ເຂົາເຈົ້າຜະລິດມີ: ປູກເຂົ້ານາປີ, ລ້ຽງງົວ, ລ້ຽງຄວາຍ, ລ້ຽງໝູ, ລ້ຽງແບ້ ແລະ ສັດປີກ.

1. ກິດຈະກໍາການປູກເຂົ້ານາຂອງຄອບຄົວບໍ່ກຸ້ມກິນ

ໃນການປູກເຂົ້າຂອງຊາວກະສິກອນທີ່ຢູ່ໃນເຂດນີ້ສ່ວນໃຫ່ຍແມ່ນປູກເຂົ້ານາປີເພາະວ່າ ພື້ນທີ່ດັ່ງກ່າວບໍ່ມີລະບົບຊົນລະປະທານແມ່ນຍັງອາໃສນໍ້າຈາກທໍາມະຊາດໃຊ້ເຂົ້າໃນການຜະລິດ ແລະ ປັດໃຈທີ່ນໍາໃຊ້ເຂົ້າປະກອບມີຄື:

- ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີຕ່າງໆໃນການປູກເຂົ້ານາແມ່ນໄດ້ຮັບຂໍ້ມູນມາຈາກກະສິກໍາເມືອງເປັນຜູ້ສະໜອງໃຫ້.




- ເຄມີທີ່ຊາວກະສິນໍາໃຊ້ເຂົ້າໃນການຜະລິດປະກອບມີນໍ້າມັນກາຊວນ, ເກືອ ການໄດ້ມາຂອງທັງສອງປັດໃຈນີ້ແມ່ນຊື້ເປັນເງິນສົດ ເຊິ່ງນໍ້າມັນກາຊວນຊື້ມາຈາກ:




- ການປູກເຂົ້ານາປີຂອງຊາວກະສິກອນຄອບຄົວທີ່ໄດ້ສໍາພາດແມ່ນບໍ່ໄດ້ມີການນໍາໃຊ້ບໍ ລິການເຂົ້າໃນການປູກ ເພາະວ່າເຂົາເຈົ້າບໍ່ໄດ້ມີການຈ້າງ ຫຼື ເຊົ່າອຸປະກອນຊະນິດໃດໆເລີຍ.
- ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນໍາໃຊ້ເຂົ້າໃນການປູກເຂົ້ານາປີປະກອບມີແນວພັນ ເຊິ່ງການໄດ້ມາແມ່ນບໍ່ໄດ້ຊື້ກະສິກໍາເມືອງສະໜອງໃຫ້.




ຜ່ານການສັງລວມຂໍ້ມູນປັດໃຈນໍາເຂົ້າທີ່ຊາວກະສິກອນນໍາໃຊ້ເຂົ້າໃນກິດຈະກໍາການປູກເຂົ້ານາປີຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ມີລັກສະນະຍາວ ຂຶ້ນກັບຫຼາຍພາກສ່ວນໂດຍສະເພາະແມ່ນຕ່ອງໂສ້ຂອງແນວພັນ, ນໍ້າມັນກາຊວນ, ເກືອ ດັ່ງແຜນວາດທີ່ສະແດງລຸ່ມນີ້:




ຮູບທີ22: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການປູກເຂົ້ານາປີຂອງຄອບຄົວບໍ່ກຸ້ມກິນ

ຂໍ້ສັງເກດ: ●– – –● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

●——● ໝາຍເຖິງໄດ້ຊື້ເປັນເງິນສົດ

▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ແຫຼ່ງຂໍ້ມູນຂ່າວສານ, ແນວພັນທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດແມ່ນກະສິກຳເມືອງເປັນຜູ້ສະໜອງໃຫ້
2. ສ່ວນແນວພັນກະສິກຳເມືອງຊື້ມາຈາກສູນຜະລິດເມັດພັນນາພອກ
3. ນ້ຳມັນກາຊວນທີ່ຊາວກະສິກອນນຳໃຊ້ເຂົ້າໃນການປູກເຂົ້າແມ່ນຊື້ມາຈາກປ້ຳນ້ຳມັນເມືອງໄຊເສດຖາ
4. ປ້ຳນ້ຳມັນເມືອງໄຊເສດຖາຊື້ນ້ຳມັນກາຊວນມາຈາກປ້ຳນ້ຳມັນປາກເຊ
5. ແຕ່ປ້ຳນ້ຳມັນປາກເຊຊື້ນ້ຳມັນກາຊວນມາຈາກນະຄອນຫຼວງວຽງຈັນ

2. <u>ກິດຈະກຳການລ້ຽງງົວ, ຄວາຍຂອງຄອບຄົວບໍ່ກຸ້ມກິນ</u>

ປັດໃຈທີ່ຊາວຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງງົວ, ຄວາຍປະກອບມີ:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີຕ່າງໆ ໃນ ການປູກເຂົ້ານາແມ່ນໄດ້ຮັບຂໍ້ມູນມາຈາກ ອສບ ເປັນຜູ້ສະໜອງໃຫ້.




➢ ເຄມີທີ່ຊາວກະສິນຳໃຊ້ເຂົ້າໃນການລ້ຽງມີພຽງວັກຊິນ ເຊິ່ງການໄດ້ມາແມ່ນຈ້າງບໍລິການຈາກ ອສບ ແຕ່ວ່າ ອສບ ຊື້ວັກຊິນມາຈາກ:




➢ ການລ້ຽງງົວ, ຄວາຍຂອງຊາວກະສິກອນຄອບຄົວທີ່ໄດ້ສຳພາດແມ່ນໄດ້ມີການນຳໃຊ້ບໍ ລິການຄືການບໍລິການຈ້າງສັກວັກຊິນຈາກ ອສບ ນອກຈາກນີ້ແມ່ນບໍ່ໄດ້ນຳໃຊ້.



➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງປະກອບມີແນວພັນ, ເຊືອກເຊິ່ງການໄດ້ມາຂອງເຊືອກແມ່ນໄດ້ຊື້ມາຈາກ:

ຊາວກະສິກອນ ← ຕະຫຼາດເມືອງໄຊເສດຖາ ← ຕະຫຼາດປາກເຊ

ສຳລັບແນວພັນທີ່ນຳມາລ້ຽງແມ່ນເປັນແນວພັນພື້ນເມືອງທີ່ຫາຊື້ໄດ້ໃນທ້ອງຖິ່ນ.

ຜ່ານການສັງລວມຂໍ້ມູນປັດໃຈນຳເຂົ້າທີ່ຊາວກະສິກອນນຳໃຊ້ເຂົ້າໃນກິດຈະກຳການລ້ຽງງົວ, ຄວາຍຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ມີລັກສະນະຍາວ ຂຶ້ນກັບຫຼາຍພາກສ່ວນໂດຍສະເພາະແມ່ນຕ່ອງໂສ້ຂອງວັກຊີນ ແລະ ເຊືອກ ດັ່ງແຜນວາດທີ່ສະແດງລຸ່ມນີ້:




ຮູບທີ23: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງຄວາຍຂອງຄອບຄົວບໍ່ກຸ້ມກິນ

ຂໍ້ສັງເກດ: ●- -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

●—● ໝາຍເຖິງໄດ້ຊື້ເປັນເງິນສົດ

▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1. ວັກຊີນທີ່ຊາວກະສິກອນນຳໃຊ້ນັ້ນແມ່ນໄດ້ຈ້າງບໍລິການສັກນຳ ອສບ
2. ອສບ ຊື້ວັກຊີນມາຈາກກະສິກຳເມືອງ
3. ກະສິກຳເມືອງຊື້ວັກຊີນມາຈາກກະສິກຳແຂວງ
4. ກະສິກຳແຂວງຊື້ວັກຊີນມາຈາກກົມລ້ຽງສັດ
5. ກົມລ້ຽງສັດຊື້ວັກຊີນມາຈາກໂຮງງານຜະລິດວັກຊີນໜອງແຕ່ງ
6. ເຊືອກທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງແມ່ນຊື້ມາຈາກຮ້ານຄ້າທີ່ຢູ່ຕະຫຼາດເມືອງໄຊເສດຖາ
7. ແມ່ຄ້າເມືອງໄຊເສດຖາຊື້ເຊືອກມາຕະຫຼາດປາກເຊ.
8. ແນວພັນທີ່ຊາວກະສິກອນນຳມາລ້ຽງແມ່ນເປັນແນວພັນພື້ນເມືອງທີ່ຫາຊື້ໄດ້ນຳປະຊາຊົນໃນບ້ານໃກ້ຄຽງ

3. <u>ກິດຈະກຳການລ້ຽງແບ້ຂອງຄອບຄົວບໍ່ກຸ້ມກິນ</u>

ການສຳພາດຄອບຄົວຊາວກະສິກອນທີ່ລ້ຽງແບ້ເຂົາເຈົ້າໄດ້ມີການນຳໃຊ້ປັດໃຈນຳເຂົ້າຄື:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກ ວິທີຕ່າງໆໃນການລ້ຽງແບ້ແມ່ນໄດ້ຮັບຂໍ້ມູນມາຈາກໂຄງການ IFAD ເປັນຜູ້ສະໜອງໃຫ້.

ຊາວກະສິກອນ ← ໂຄງການ IFAD

➤ ເຄມີທີ່ຊາວກະສິນຳໃຊ້ເຂົ້າໃນການລ້ຽງມີພຽງວັກຊີນ ແລະ ເກືອ ເຊິ່ງການໄດ້ມາຂອງວັກຊີນແມ່ນຈ້າງບໍລິການຈາກ ອສບ ແຕ່ວ່າ ອສບ ຊື້ວັກຊີນມາຈາກ:




ສ່ວນເກືອຊາວກະສິກອນນຳໃຊ້ແມ່ນຊື້ມາຈາກ:




➤ ການລ້ຽງແບ້ຂອງຊາວກະສິກອນຄອບຄົວທີ່ໄດ້ສຳພາດແມ່ນໄດ້ມີການນຳໃຊ້ບໍລິການຄືການບໍລິການຈ້າງສັກວັກຊີນຈາກ ອສບ ນອກຈາກນີ້ແມ່ນບໍ່ໄດ້ນຳໃຊ້.




➤ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງມີພຽງແນວພັນເຊິ່ງເປັນແນວພັນພື້ນເມືອງການໄດ້ມາແມ່ນໄດ້ຊື້ໂຄງການ IFAD ເປັນຜູ້ສະໜອງໃຫ້.




ຜ່ານການສັງລວມຂໍ້ມູນປັດໃຈນຳເຂົ້າທີ່ຊາວກະສິກອນນຳໃຊ້ເຂົ້າໃນກິດຈະກຳການລ້ຽງແບ້ຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ມີລັກສະນະຍາວຂຶ້ນກັບຫຼາຍພາກສ່ວນໂດຍສະເພາະແມ່ນ ຕ່ອງໂສ້ຂອງວັກຊີນ ແລະ ເກືອ ດັ່ງແຜນວາດທີ່ສະແດງລຸ່ມນີ້:




ຮູບທີ24: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງແບ້ຂອງຄອບຄົວບໍ່ກຸ້ມກິນ

ຂໍ້ສັງເກດ: ●- - - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ

●———● ໝາຍເຖິງໄດ້ຊື້ເປັນເງິນສົດ

▬▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນຳເຂົ້າ

1.ແຫຼ່ງຂໍ້ມູນຂ່າວສານ, ແນວພັນແມ່ນໂຄງ IFAD ເປັນຜູ້ສະໜອງໃຫ້
2. ວັກຊິນທີ່ຊາວກະສິກອນນຳໃຊ້ແມ່ນຈ້າງບໍລິການສັກຈາກ ອສບ
3. ອສບ ຊື້ວັກຊິນມາຈາກກະສິກຳເມືອງ.
4. ກະສິກຳເມືອງຊື້ວັກຊິນມາຈາກກະສິກຳແຂວງ
5. ກະສິກຳແຂວງຊື້ວັກຊິນມາຈາກກົມລ້ຽງສັດ
6. ກົມລ້ຽງສັດຊື້ວັກຊິນມາຈາກໂຮງງານຜະລິດວັກຊິນໜອງແຕ່ງ
7. ເກືອທີ່ໃຊ້ເຂົ້າໃນການຜະລິດຊີ້ນມາຈາກຮ້ານຄ້າທີ່ຢູ່ຕະຫຼາດເມືອງຊານໄຊ
8. ແມ່ຄ້າເມືອງຊານໄຊຊື້ເກືອມາຈາກປາກເຊ

4. <u>ກິດຈະກຳລ້ຽງໝູຂອງຄອບຄົວບໍ່ກຸ້ມກິນ</u>

ປັດໃຈຂອງຄອບຄົວຊາວກະສິກອນທີ່ລ້ຽງໝູນຳໃຊ້ປະກອບມີຄື:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກ ວິທີຕ່າງໆ ໃນການລ້ຽງໝູແມ່ນໄດ້ຮັບຂໍ້ມູນມາຈາກເພື່ອນບ້ານ ແລະ ອສບ ເປັນຜູ້ສະໜອງໃຫ້.

ຊາວກະສິກອນ ← ເພື່ອນບ້ານ, ອສບ

➢ ເຄມີທີ່ຊາວກະສິນຳໃຊ້ເຂົ້າໃນການລ້ຽງມີພຽງວັກຊິນເຊິ່ງການໄດ້ມາຂອງວັກຊິນ ແມ່ນຈ້າງບໍລິການຈາກ ອສບ ແຕ່ວ່າ ອສບ ຊື້ວັກຊິນມາຈາກ:

ຊາວກະສິກອນ ← ອສບ ← ກສມ ← ກສຂ ← ກົມລ້ຽງສັດ ↑ ສູນຜະລິດວັກຊິນໜອງແຕ່ງ

➢ ການລ້ຽງໝູຂອງຊາວກະສິກອນຄອບຄົວທີ່ໄດ້ສຳພາດແມ່ນໄດ້ມີການນຳໃຊ້ ບໍລິການຄືການບໍລິການຈ້າງສັກວັກຊິນຈາກ ອສບ ນອກຈາກນີ້ແມ່ນບໍ່ໄດ້ນຳໃຊ້.

ຊາວກະສິກອນ ← ອສບ

➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງມີພຽງແນວພັນ ເຊິ່ງເປັນ ແນວພັນພື້ນເມືອງທີ່ຫາຊື້ໄດ້ຕາມທ້ອງຖິ່ນ ຫຼື ເພື່ອນບ້ານໃກ້ຄຽງ ແລະ ອາຫານທີ່ໃຊ້ລ້ຽງແມ່ນ ຮຳ ການໄດ້ມາບໍ່ໄດ້ຊື້.

ຊາວກະສິກອນ ← ເພື່ອນບ້ານ

ຜ່ານການສັງລວມຂໍ້ມູນປັດໃຈນໍາເຂົ້າທີ່ຊາວກະສິກອນນໍາໃຊ້ເຂົ້າໃນກິດຈະກໍາການລ້ຽງແບ້ຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ມີລັກສະນະຍາວ ຂຶ້ນກັບຫຼາຍພາກສ່ວນໂດຍສະເພາະແມ່ນ ຕ່ອງໂສ້ຂອງວັກຊີນ ຍົກເວັ້ນຕ່ອງໂສ້ແຫຼ່ງຂໍ້ມູນຂ່າວສານ, ສິ່ງທີ່ບໍ່ເປັນເຄມີ ແລະ ການບໍລິການແມ່ນມີລັກສະນະສັ້ນ ດັ່ງແຜນວາດທີ່ສະແດງລຸ່ມນີ້:




ຮູບທີ25: ແຜນວາດຕ່ອງໂສ້ປັດໃຈນໍາເຂົ້າການລ້ຽງໝູຂອງຄອບຄົວບໍ່ກຸ້ມກິນ

ຂໍ້ສັງເກດ: ●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
●——● ໝາຍເຖິງໄດ້ຊື້ເປັນເງິນສົດ
▬▬ ໝາຍເຖິງເສັ້ນແບ່ງເຂດຂອງປັດໃຈນໍາເຂົ້າ

1. ຂໍ້ມູນຂ່າວສານທີ່ຊາວກະສິກອນໄດ້ຮັບແມ່ນມາຈາກອສບ, ເພື່ອນບ້ານໃກ້ຄຽງເປັນຜູ້ແນະນໍາໃຫ້
2. ວັກຊີນທີ່ຊາວກະສິກອນນໍາໃຊ້ນັ້ນແມ່ນຈ້າງບໍລິການສັກຈາກ ອສບ
3. ອສບ ຊື້ວັກຊີນມາຈາກກະສິກໍາເມືອງ
4. ກະສິກໍາເມືອງຊື້ວັກຊີນມາຈາກກະສິກໍາແຂວງ
5. ກະສິກໍາແຂວງຊື້ວັກຊີນມາຈາກກົມລ້ຽງສັດ
6. ສໍາລັບກົມລ້ຽງສັດຊື້ວັກຊີນມາຈາກໂຮງງານຜະລິດວັກຊີນໜອງແຕ່ງ
7. ແນວພັນທີ່ຊາວກະສິກອນນໍາມາລ້ຽງເປັນແນວພັນພື້ນເມືອງທີ່ຫາຊື້ໄດ້ນໍາປະຊາຊົນໃນບ້ານໃກ້ຄຽງ
8. ອາຫານທີ່ລ້ຽງເປັນອາຫານທໍາມະດາຫາໄດ້ໃນຄອບຄົວ

5. <u>ກິດຈະກໍາການລ້ຽງສັດປີກຂອງຄອບຄົວບໍ່ກຸ້ມກິນ</u>

ການລ້ຽງສັດປີກຂອງຊາວກະສິກອນທັງສອງບ້ານທີ່ສໍາພາດຂອງຄອບຄົວທີ່ບໍ່ກຸ້ມກິນ ໃນການລ້ຽງຂອງເຂົາເຈົ້າແມ່ນລ້ຽງແບບພື້ນບ້ານ ແຕ່ມີການນໍາໃຊ້ວັກຊີນເຂົ້າໃນການລ້ຽງ ແລະ ປັດໃຈທີ່ນໍາໃຊ້ເຂົ້າໃນການລ້ຽງມີຄື:

➢ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກ ວິທີຕ່າງໆໃນການລ້ຽງສັດປີກແມ່ນໄດ້ຮັບຂໍ້ມູນມາຈາກເພື່ອນບ້ານ ແລະ ອສບ ເປັນຜູ້ສະໜອງໃຫ້.




➢ ເຄມີທີ່ຊາວກະສິນຳໃຊ້ເຂົ້າໃນການລ້ຽງມີພຽງວັກຊິນເຊິ່ງການໄດ້ມາຂອງວັກຊິນ ແມ່ນຈ້າງບໍລິການຈາກ ອສບ ແຕ່ວ່າ ອສບ ຊື້ວັກຊິນມາຈາກ:




➢ ການລ້ຽງສັດປີກຊາວກະສິກອນຂອງຄອບຄົວທີ່ໄດ້ສຳພາດແມ່ນໄດ້ມີການນຳໃຊ້ ບໍລິການຄືການບໍລິການຈ້າງສັກວັກຊິນຈາກ ອສບ ນອກຈາກນີ້ແມ່ນບໍ່ໄດ້ນຳໃຊ້.




➢ ສິ່ງທີ່ບໍ່ເປັນເຄມີທີ່ຊາວກະສິກອນນຳໃຊ້ເຂົ້າໃນການລ້ຽງມີພຽງແນວພັນ ເຊິ່ງເປັນ ແນວພັນພື້ນເມືອງທີ່ຫາຊື້ໄດ້ຕາມທ້ອງຖິ່ນ ຫຼື ເພື່ອນບ້ານໃກ້ຄຽງ ແລະ ອາຫານທີ່ໃຊ້ລ້ຽງການ ໄດ້ມາບໍ່ໄດ້ຊື້.




ຜ່ານການສັງລວມຂໍ້ມູນປັດໃຈນຳເຂົ້າທີ່ຊາວກະສິກອນນຳໃຊ້ເຂົ້າໃນກິດຈະກຳການ ລ້ຽງແບ້ຂ້າງເທິງນີ້ສັງເກດເຫັນວ່າຕ່ອງໂສ້ມີລັກສະນະຍາວ ຂຶ້ນກັບຫຼາຍພາກສ່ວນໂດຍສະ ເພາະແມ່ນ ຕ່ອງໂສ້ຂອງວັກຊິນ ຍົກເວັ້ນຕ່ອງໂສ້ແຫຼ່ງຂໍ້ມູນຂ່າວສານ, ສິ່ງທີ່ບໍ່ເປັນເຄມີ ແລະ ການບໍລິການແມ່ນມີລັກສະນະສັ້ນ ດັ່ງແຜນວາດທີ່ສະແດງລຸ່ມນີ້:




ຮູບທີ26: ແຜນວາດຕ່ອງໂສ້ປັດໃຈນຳເຂົ້າການລ້ຽງສັດປີກຂອງຄອບຄົວບໍ່ກຸ້ມກິນ

ຂໍ້ສັງເກດ:
- ●- - -● ໝາຍເຖິງບໍ່ໄດ້ຊື້ເປັນເງິນສົດ
- ●——● ໝາຍເຖິງໄດ້ຊື້ເປັນເງິນສົດ
- ▬ ໝາຍເຖິງເສັ້ນແບ່ງເຂດ

| |
|---|
| 1. ຂໍ້ມູນຂ່າວສານທີ່ຊາວກະສິກອນໄດ້ຮັບແມ່ນມາຈາກອສບ, ເພື່ອນບ້ານໃກ້ຄຽງເປັນຜູ້ແນະນໍາໃຫ້ |
| 2. ວັກຊີນທີ່ຊາວກະສິກອນນໍາໃຊ້ເຂົ້າໃນການລ້ຽງສັດແມ່ນຈ້າງບໍລິການສັກຈາກ ອສບ |
| 3. ອສບ ຊື້ວັກຊີນມາຈາກກະສິກໍາເມືອງ |
| 4. ກະສິກໍາເມືອງຊື້ວັກຊີນມາຈາກກະສິກໍາແຂວງ |
| 5. ກະສິກໍາແຂວງຊື້ວັກຊີນມາຈາກກົມລ້ຽງສັດ |
| 6. ກົມລ້ຽງສັດຊື້ວັກຊີນມາຈາກໂຮງງານຜະລິດວັກຊີນໜອງແຕ່ງ |
| 7. ແນວພັນທີ່ນໍາມາລ້ຽງນັ້ນເປັນແນວພັນພື້ນເມືອງທີ່ຫາຊື້ໄດ້ນໍາປະຊາຊົນໃນບ້ານໃກ້ຄຽງ |
| 8. ອາຫານທີ່ລ້ຽງເປັນອາຫານທໍາມະດາຫາໄດ້ໃນຄອບຄົວເຂົ້າປຽນ, ຮໍາ |

## 4.3. ຊະນິດປັດໃຈນໍາເຂົ້າທີ່ນໍາມາຈາກພາຍນອກ ແລະ ຢູ່ໃນພາຍໃນທີ່ຊາວກະສິກອນນໍາໃຊ້

ກ. ຊະນິດສິ່ງນໍາເຂົ້າທີ່ມາຈາກພາຍນອກໝາຍເຖິງນໍາມາຈາກປະເທດໄທມີອຸປະກອນຈໍາພວກ (ໄຖ, ລົດໄຖ, ຊວ້ານ, ກ່ຽວ, ພ້າ, ໝາກສິບໄຖ) ສິ່ງທີ່ເປັນເຄມີແມ່ນປຸ໋ຍ ແລະ ສິ່ງທີ່ບໍ່ເປັນເຄມີແມ່ນແນວພັນພືດໂດຍສະເພາະແມ່ນແນວພັນສາລີ, ຜັກກາດ ແລະ ເຊືອກ.

ຂ. ຊະນິດສິ່ງນໍາເຂົ້າທີ່ຢູ່ພາຍໃນໝາຍເຖິງປັດໃຈຕ່າງໆທີ່ສາມາດຜະລິດໄດ້ພາຍໃນບ້ານ, ເມືອງ ແຂວງ ຫຼື ພາຍໃນປະເທດເຊັ່ນວ່າ: ດິນ/ນໍ້າ, ສິນເຊື່ອ, ອຸປະກອນຈໍາພວກ (ກ່ຽວ, ພ້າ) , ແຮງງານ, ແຫຼ່ງຂໍ້ມູນຂ່າວສານ, ສິ່ງທີ່ເປັນເຄມີໂດຍສະເພາະແມ່ນວັກຊີນ, ເກືອ, ການບໍລິການໂດຍສະເພາະແມ່ນການສັກວັກຊີນ, ສິ່ງທີ່ບໍ່ເປັນເຄມີແມ່ນແນວພັນສັດ, ອາຫານ ແລະ ແນວພັນພືດໂດຍສະເພາະແມ່ນແນວພັນເຂົ້າ.

## 4.4. ສົມທຽບຄວາມແຕກຕ່າງປັດໃຈນໍາເຂົ້າການຜະລິດໃນລະດັບຄອບຄົວ

ຈາກການສໍາພາດຊາວກະສິກອນທັງ3 ລະດັບຄອບຄົວຄື: ລະດັບຄອບຄົວເຫຼືອກິນ, ກຸ້ມກິນ ແລະ ບໍ່ກຸ້ມກິນເຫັນວ່າການນໍາໃຊ້ປັດໃຈນໍາເຂົ້າຢູ່ໃນລະດັບຄອບຄົວທີ່ເປັນດິນ/ນໍ້າ, ສິນເຊື່ອ, ທຶນຄົງທີ່ ແລະ ແຮງງານແມ່ນມີຄວາມແຕກຕ່າງກັນດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ1: ສົມທຽບປັດໃຈການຜະລິດລະດັບຄອບຄົວ

| ລ/ດ | ຊະນິດປັດໃຈນໍາເຂົ້າ | ຄອບຄົວເຫຼືອກິນ | ຄອບຄົວກຸ້ມກິນ | ຄອບຄົວບໍ່ກຸ້ມກິນ |
|---|---|---|---|---|
| 1 | ດິນ/ນໍ້າ | - ຊື້ເປັນເງິນສົດ<br>- ຈັບຈ່ອງເອົາເອງ<br>- ລັດແບ່ງປັນໃຫ້<br>- ນໍ້າຈາກທໍາມະຊາດ | - ຊື້ເປັນເງິນສົດ<br>- ຈັບຈ່ອງເອົາເອງ<br>- ລັດແບ່ງປັນໃຫ້<br>- ນໍ້າຈາກທໍາມະຊາດ | - ຈັບຈ່ອງເອົາເອງ<br>- ລັດແບ່ງປັນໃຫ້<br>- ນໍ້າຈາກທໍາມະຊາດ |
| 2 | ສິນເຊື່ອ | - ທະນາຄານນະໂຍບາຍ | - ທະນາຄານນະໂຍບາຍ | - ທະນາຄານນະໂຍບາຍ |

| | | | | |
|---|---|---|---|---|
| | | - ກອງທຶນບ້ານ | - ກອງທຶນບ້ານ | - ກອງທຶນບ້ານ |
| 3 | ທຶນຄົງທີ່ | - ຊື້ເປັນເງິນສົດມີ: ລົດໄຖ, ໄຖ, ຈັກ, ກ່ຽວ, ໝາກສິບໄຖ, ຊວ້ານ ແລະ ພ້າ | - ຊື້ເປັນເງິນສົດມີ: ລົດໄຖ, ກ່ຽວ, ໄຖ, ໝາກສິບໄຖ ແລະ ຊວ້ານ.<br>- ຕີເອົາເອງມີ: ກ່ຽວ,ພ້າ | - ຊື້ເປັນເງິນສົດມີ: ລົດໄຖ, ກ່ຽວ, ໄຖ, ໝາກສິບໄຖ ແລະ ຊວ້ານ.<br>- ກະສິກຳເມືອງມອບ ໃຫ້ມີ: ຈັກ, ຊວ້ານ |
| 4 | ແຮງງານ | - ແຮງງານພາຍໃນ ຄອບຄົວ<br>- ແຮງງານແລກປ່ຽນ | - ແຮງງານພາຍໃນ ຄອບຄົວ<br>- ແຮງງານແລກປ່ຽນ | - ແຮງງານພາຍໃນ ຄອບຄົວ<br>- ແຮງງານແລກປ່ຽນ |

## 4.4. ສັງລວມສົມທຽບຄວາມແຕກຕ່າງການໄດ້ມາຂອງປັດໃຈນຳເຂົ້າການຜະລິດຂອງກິດຈະກຳ

ການຜະລິດຂອງຊາວກະສິກອນແຕ່ລະກິດຈະກຳຂອງ 3 ລະດັບຄອບຄົວເຫັນໄດ້ວ່າປັດໃຈທີ່ເຂົາເຈົ້ານຳໃຊ້ໃນການປູກພືດ ຫຼື ລ້ຽງສັດທີ່ເປັນແຫຼ່ງຂໍ້ມູນຂ່າວສານ, ສິ່ງທີ່ເປັນເຄມີ, ການບໍລິການ ແລະ ບໍ່ເປັນເຄມີການໄດ້ມາຂອງແຕ່ລະປັດໃຈແມ່ນມີຄວາມແຕກຕ່າງກັນດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ2: ສົມທຽບປັດໃຈນຳເຂົ້າໃນລະດັບກິດຈະກຳ

| ລ/ດ | ຊະນິດ ສິ່ງນຳເຂົ້າ | ຊະນິດ ກິດຈະກຳ | ຄອບຄົວເຫຼືອກິນ | ຄອບຄົວກຸ້ມກິນ | ຄອບຄົວບໍ່ກຸ້ມກິນ |
|---|---|---|---|---|---|
| 1 | ແຫຼ່ງຂໍ້ມູນ ຂ່າວສານ ເຊັ່ນ: ເຕັກນິກວິທີການ | ການປູກພືດ | -ໂຄງການIFAD<br>- ເພື່ອນບ້ານ<br>- ກະສິກຳເມືອງ | -ໂຄງການIFAD<br>- ເພື່ອນບ້ານ<br>- ກະສິກຳເມືອງ | - ເພື່ອນບ້ານ<br>-ກະສິກຳເມືອງ |
| | | ການລ້ຽງສັດ | - ເພື່ອນບ້ານ<br>- ອສບ | -ໂຄງການIFAD<br>- ເພື່ອນບ້ານ<br>- ອສບ | -ໂຄງການIFAD<br>- ເພື່ອນບ້ານ<br>- ກະສິກຳເມືອງ |
| 2 | ສິ່ງທີ່ເປັນ | ການປູກພືດ ເຊັ່ນ: ປຸ໋ຍ, ນ້ຳມັນກາຊວນ | - ຊື້ເປັນເງິນສົດມີ ປຸ໋ຍ, ນ້ຳມັນ<br>- ບໍ່ໄດ້ຊື້ເປັນເງິນສົດ ໂຄງການ | -ຊື້ເປັນເງິນສົດ ມີນ້ຳມັນ<br>-ບໍ່ໄດ້ຊື້ເປັນເງິນ ສົດໂຄງການ | -ຊື້ເປັນເງິນສົດມີ ນ້ຳມັນ |

| | | | | | |
|---|---|---|---|---|---|
| | ເຄມີ | | IFADມີປຸ໋ຍ | IFADມີປຸ໋ຍ | |
| | | ການລ້ຽງສັດ | - ຊື້ເປັນເງິນສົດມີເກືອ, ວັກຊິນ | - ຊື້ເປັນເງິນສົດ ມີເກືອ, ວັກຊິນ | -ຊື້ເປັນເງິນສົດ ມີ ເກືອ, ວັກຊິນ |
| 3 | ການບໍລິ ການ | ການປູກພືດ | ບໍ່ໄດ້ນໍາໃຊ້ | ບໍ່ໄດ້ນໍາໃຊ້ | ບໍ່ໄດ້ນໍາໃຊ້ |
| | | ການລ້ຽງສັດ | - ບໍລິການຈ້າງວັກຊິນ ຈາກ ອສບ | -ບໍລິການຈ້າງ ວັກຊິນຈາກອສບ | -ບໍລິການຈ້າງວັກ ຊິນຈາກ ອສບ |
| 4 | ສິ່ງທີ່ບໍ່ ເປັນເຄມີ | ການປູກພືດ ເຊັ່ນ: ແນວພັນ | - ຊື້ເປັນເງິນສົດ<br>- ບໍ່ໄດ້ຊື້ເປັນເງິນສົດ | - ຊື້ເປັນເງິນສົດ<br>- ບໍ່ໄດ້ຊື້ເປັນ ເງິນສົດ | - ບໍ່ໄດ້ຊື້ເປັນ ເງິນສົດ |
| | | ການລ້ຽງສັດ ເຊັ່ນ: ແນວພັນ ,ອາຫານ, ເຊືອກ, ທົວອາຫານ | - ຊື້ເປັນເງິນສົດມີ ແນວພັນ, ອາຫານ, ເຊືອກ, ທົວອາຫານ<br>- ບໍ່ໄດ້ຊື້ເປັນເງິນສົດມີ ແນວພັນ, ອາຫານ | - ຊື້ເປັນເງິນສົດມີ ແນວພັນ, ອາຫານ, ເຊືອກ,<br>- ບໍ່ໄດ້ຊື້ເປັນເງິນ ສົດມີແນວພັນ, ອາຫານເສີມ | - ຊື້ເປັນເງິນສົດມີ ແນວພັນ, ເຊືອກ,<br>- ບໍ່ໄດ້ຊື້ເປັນເງິນ ສົດມີ ແນວພັນ, ອາຫານ |

# ວິຈານ
# (Discussion)

ຜ່ານການລົງເກັບກຳຂໍ້ມູນຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດກະສິກຳຂອງຊາວກະສິກອນ ແລະ ອີງໃສ່ການວິເຄາະຂໍ້ມູນຕົວຈິງທີ່ໄດ້ຈາກການສຳພາດຕີລາຄາໄດ້ເຖິງການເຂົ້າຫາຕ່ອງໂສ້ປັດໃຈນຳເຂົ້າໃນການຜະລິດຂອງ 3 ລະດັບຄອບຄົວຄື: ຄອບຄົວເຫຼືອກິນ, ຄອບຄົວກຸ້ມກິນ ແລະ ຄອບຄົວບໍ່ກຸ້ມກິນ. ສາມາດຮູ້ໄດ້ວ່າຊາວກະສິກອນທັງ 3 ລະດັບຄອບຄົວຢູ່ໃນເຂດທີ່ລົງສຶກສານັ້ນເຂົາເຈົ້າໄດ້ມີກິດຈະກຳການຜະລິດຄ້າຍຄືກັນທັງສອງບ້ານຄື: ກິດຈະກຳການປູກເຂົ້ານາ, ປູກເຂົ້າໄຮ່, ປູກສາລີ, ປູກຜັກກາດ, ລ້ຽງງົວ, ຄວາຍ, ໝູ ແລະ ສັດປີກ. ແຕ່ລະກິດຈະກຳຂອງຊາວກະສິກອນຜະລິດນັ້ນແມ່ນມີການນຳໃຊ້ປັດໃຈນຳເຂົ້າທີ່ບໍ່ຄືກັນເຊັ່ນ: ຄອບຄົວເຫຼືອກິນ, ຄອບຄົວກຸ້ມກິນແມ່ນເຂົ້າຫາແຫຼ່ງປັດໃຈນຳເຂົ້າໄດ້ຫຼາຍ ເພາະວ່າທັງສອງລະດັບຄອບຄົວນີ້ໄດ້ຊື້ອຸປະກອນຕ່າງໆເຂົ້າໃນການຜະລິດ ໂດຍສະເພາະແມ່ນລົດໄຖ, ເກືອ, ເຊືອກ, ຫົວອາຫານໄກ່ນອ້ຍ, ປຸ໋ຍ ແຕ່ຄອບຄົວບໍ່ກຸ້ມກິນແມ່ນບໍ່ໄດ້ຊື້. ຈາກການສຳພາດຄອບຄົວຊາວກະສິກອນ ໃນການເຂົ້າຫາປັດໃຈນຳເຂົ້າຂອງດິນທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດຂອງຄອບຄົວເຫຼືອກິນ, ຄອບຄົວກຸ້ມກິນແມ່ນໄດ້ມາຈາກການຊື້, ດິນ ສືບມູນ, ດິນລັດແບ່ງປັນໃຫ້ ແຕ່ຄອບຄົວບໍ່ກຸ້ມກິນແມ່ນໄດ້ມາຈາກການແບ່ງປັນຂອງລັດ, ສັບສ່າວເອງ. ນ້ຳທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດແມ່ນຍັງອາໃສນ້ຳຈາກທຳມະຊາດ ສະນັ້ນຈຶ່ງເຮັດໃຫ້ຊາວກະສິກອນມີຄວາມຫຍຸ້ງຍາກໃນການຜະລິດພືດໃນລະດູແລ້ງ. ປັດໃຈນຳເຂົ້າທີ່ເປັນສິນເຊື່ອຊາວກະສິກອນນຳໃຊ້ເຂົ້າໃນການປູກພືດ ແລະ ລ້ຽງສັດນັ້ນເຂົາເຈົ້າໄດ້ກູ້ຢືມເງິນຈາກທະນາຄານນະໂຍບາຍ ແລະ ກອງທຶນບ້ານ ແຕ່ຊາວກະສິກອນຄອບຄົວບໍ່ກຸ້ມກິນນັ້ນແມ່ນຍັງບໍ່ສາມາດກູ້ຢືມເງິນຈາກທະນາຄານນະໂຍບາຍໄດ້ ເພາະວ່າເຂົາເຈົ້າບໍ່ມີສິ່ງຄ້ຳປະກັນໃນການກູ້ຢືມຄືກັນກັບຄອບຄົວເຫຼືອກິນ, ຄອບຄົວກຸ້ມກິນ ມີແຕ່ໄດ້ກູ້ຢືມຈາກກອງທຶນບ້ານ ສ່ວນທາງດ້ານອຸປະກອນຕ່າງໆທີ່ນຳໃຊ້ ເຂົ້າໃນການຜະລິດຄອບຄົວບໍ່ກຸ້ມກິນແມ່ນບໍ່ໄດ້ຊື້ ເພາະບໍ່ມີທຶນທີ່ຈະຊື້ມີພຽງແຕ່ໄດ້ມາຈາກການແບ່ງປັນຂອງລັດ ແລະ ຕີເອົາເອງ ສ່ວນແຮງງານທີ່ຊາວກະສິກອນນຳໃຊ້ເຂົ້າໃນການຜະລິດຂອງຄອບຄົວເຫຼືອກິນ, ກຸ້ມກິນແມ່ນມີແຮງງານພາຍໃນຄອບຄົວ ແລະ ແຮງງານແລກປ່ຽນ ແຕ່ສຳລັບຄອບຄົວບໍ່ກຸ້ມກິນແມ່ນໄດ້ນຳໃຊ້ແຮງງານພາຍໃນຄອບຄົວເທົ່ານັ້ນ. ດ້ານແຫຼ່ງຂໍ້ມູນຂ່າວສານ ແລະ ເຕັກນິກວິທີການຕ່າງໆໃນການປູກພືດ ແລະ ການລ້ຽງສັດຂອງທັງ 3 ລະດັບຄອບຄົວນັ້ນແມ່ນໄດ້ມາຈາກກະສິກຳເມືອງ, ອສບ, ເພື່ອນບ້ານໃກ້ຄຽງ.

ໃນການເຂົ້າເຖິງປັດໃຈນຳເຂົ້າການຜະລິດກະສິກຳຂອງທັງ 3 ລະດັບຄອບຄົວເຫັນໄດ້ວ່າຄອບຄົວບໍ່ກຸ້ມກິນແມ່ນຍັງບໍ່ສາມາດເຂົ້າຫາປັດໃຈນຳເຂົ້າທີ່ເປັນສິນເຊື່ອໄດ້ຫຼາຍຄືກັນກັບຄອບຄົວເຫຼືອກິນ, ຄອບຄົວກຸ້ມກິນ ເພາະວ່າເຂົ້າເຈົ້າມີຂໍ້ຈຳກັດໃນການເຂົ້າຫາສິນເຊື່ອ ຈຶ່ງເຮັດໃຫ້

ຊາວກະສິກອນຄອບຄົວບໍ່ກຸ້ມກິນມີຄວາມຫຍຸ້ງຍາກທາງດ້ານທຶນຮອນທີ່ຈະຊື້ປັດໃຈນຳເຂົ້າໃນການຜະລິດ ສະນັ້ນຄວນຈະມີການເປີດກ້ວາງໃນການກູ້ຢືມສິນເຊື່ອ ເພື່ອໃຫ້ຊາວກະສິກອນຄອບຄົວບໍ່ກຸ້ມກິນສາມາດເຂົ້າເຖິງແຫຼ່ງປັດໃຈນຳເຂົ້າໄດ້ຫຼາຍຂຶ້ນ ແລະ ຊ່ວຍໃຫ້ເຂົາເຈົ້າມີຊີວິດການເປັນຢູ່ດີຂື້ນກວ່າເກົ່າ.

# VI. ສະຫຼຸບ
# (Conclusion)

ຜ່ານການລົງສຶກສາຕໍ່ອງປັດໃຈນຳເຂົ້າການຜະລິດກະສິກຳ ຂອງຊາວກະສິກອນທີ່ ບ້ານດາກກຽດ ແລະ ບ້ານໃໝ່ ເມືອງຊານໄຊ ແຂວງອັດຕະປື ແມ່ນໄດ້ໃຊ້ໄລະເວລາຢູ່ 5 ເດືອນ ເລີ່ມແຕ່ວັນທີ 2/4/2009 - 31/8/2009 ໂດຍມີ 3 ຈຸດປະສົງຄື: ສຶກສາບັນດາກິດຈະກຳການຜະລິດຕ່າງໆ ທີ່ຊາວກະສິກອນປະຕິບັດ, ສຶກສາຕ່ອງໂສ້ປັດໃຈນຳເຂົ້າການຜະລິດຂອງຊາວກະສິກອນ ແລະ ສົມທຽບຄວາມແຕກຕ່າງຂອງປັດໃຈນຳເຂົ້າການຜະລິດໃນລະດັບຄອບຄົວ, ລະດັບກິດຈະກຳຂອງຄອບຄົວ.

ໃນການລົງສຶກສາຄັ້ງນີ້ສາມາດສະຫຼຸບໄດ້ວ່າບັນດາປັດໃຈທີ່ຊາວກະສິກອນນຳໃຊ້ໃນລະດັບຄອບຄົວປະກອບມີ ດິນ/ນ້ຳ ເຊິ່ງການໄດ້ມາແມ່ນຊື້ເປັນເງິນສົດ, ຈັບຈ່ອງເອົາເອງ ແລະ ລັດແບ່ງປັນໃຫ້. ສິນເຊື່ອຊາວກະສິກອນແມ່ນໄດ້ກູ້ຢືມຈາກທະນາຄານໂດຍມີອັດຕາດອກເບ້ຍ 7%/1ປີ ສຳລັບການປູກພືດ, ລ້ຽງສັດມີອັດຕາດອກເບ້ຍ10%/5ປີ, ກອງທຶນບ້ານມີອັດຕາດອກເບ້ຍແມ່ນ 6%/1ປີ. ທຶນຄົງທີ່ແມ່ນໄດ້ຊື້ເປັນເງິນສົດ, ຕີເອງ, ລັດມອບໃຫ້. ແຮງງານແມ່ນນຳໃຊ້ແຮງງານພາຍໃນຄອບຄົວ ແລະ ແຮງງານແລກປ່ຽນ ໃນນັ້ນຕ່ອງໂສ້ທີ່ມີລັກສະນະຍາວຂຶ້ນກັບຫຼາຍພາກສ່ວນແມ່ນຕ່ອງໂສ້ຂອງອຸປະກອນເພາະປັດໃຈເຫຼົ່ານີ້ສ່ວນຫຼາຍແມ່ນນຳມາຈາກປະເທດໄທ. ນອກຈາກນີ້ແມ່ນມີລັກສະນະສັ້ນ ສ່ວນສິ່ງນຳເຂົ້າທີ່ຊາວກະສິກອນນຳໃຊ້ເຂົ້າໃນກິດຈະ ກຳປູກເຂົ້ານາ, ປູກເຂົ້າໄຮ່, ປູກສາລີ, ປູກຜັກກາດ, ລ້ຽງງົວ, ຄວາຍ, ແບ້, ໝູ ແລະ ສັດປີກປະ ກອບມີ ແຫຼ່ງຂໍ້ມູນຂ່າວສານທີ່ໃຫ້ຄວາມຮູ້ແກ່ຊາວກະສິກອນກ່ຽວກັບເຕັກນິກວິທີການຕ່າງໆ ສ່ວນຫຼາຍຊາວກະສິກອນໄດ້ມາຈາກກະສິກຳເມືອງ, ອສບ, ເພື່ອນບ້ານ ມີສ່ວນໜ້ອຍທີ່ໄດ້ມາຈາກໂຄງການ IFAD, ສິ່ງທີ່ເປັນເຄມີທີ່ໃຊ້ຢູ່ໃນການປູກພືດມີປຸ໋ຍ, ເກືອ, ນ້ຳມັນກາຊວນ ແລະ ລ້ຽງສັດມີວັກຊີນ, ເກືອ ການໄດ້ຂອງປັດໃຈດັ່ງກ່າວຊື້ເປັນເງິນສົດ, ການບໍລິການສຳລັບການປູກພືດຊາວກະສິກອນແມ່ນບໍ່ໄດ້ນຳໃຊ້ ສ່ວນການລ້ຽງສັດແມ່ນໄດ້ໃຊ້ບໍລິການຈ້າງສັກວັກຊີນຈາກ ອສບ ແລະ ສິ່ງບໍ່ເປັນເຄມີທີ່ນຳໃຊ້ເຂົ້າໃນການປູກພືດມີພຽງແຕ່ແນວພັນເທົ່ານັ້ນການໄດ້ມາຊື້ເປັນເງິນສົດ, ບໍ່ເປັນເງິນສົດ ການລ້ຽງສັດມີອາຫານ, ທົ່ວອາຫານ, ເຊືອກ, ແນວພັນ ເຊິ່ງການໄດ້ມາຂອງປັດໃຈເຫຼົ່ານີ້ແມ່ນມີທັງຊື້ເປັນເງິນສົດ ແລະ ບໍ່ເປັນເງິນສົດ ໃນນັ້ນຕ່ອງໂສ້ທີ່ຊາວກະສິ ກອນນຳເຂົ້າໃນລະດັບກິດຈະກຳທີ່ມີລັກສະນະຍາວ ຂຶ້ນກັບຫຼາຍພາກສ່ວນມີຕ່ອງໂສ້ສິ່ງທີ່ເປັນເຄມີ, ບໍ່ເປັນເຄມີ.

# VII. ຂໍ້ແນະນຳ
# (Recommendation)

ຕາມການສັງເກດໃນການລົງເກັບກຳຂໍ້ມູນຕົວຈິງເຫັນໄດ້ວ່າຊາວກະສິກອນໄດ້ຮັບຜົນຜະລິດຕ່ຳໂດຍສະເພາະແມ່ນການປູກພືດ, ລ້ຽງສັດເພື່ອເປັນການປັບປຸງໃຫ້ໄດ້ຜົນຜະລິດດີຂຶ້ນກວ່າເກົ່າ ແລະ ສ້າງລາຍຮັບໃຫ້ແກ່ຊາວກະສິກອນເຮັດໃຫ້ຊາວກະສິກອນຫຼຸດພົ້ນອອກຈາກຄວາມທຸກຍາກ ສະນັ້ນທີມງານສຶກສາຈຶ່ງໄດ້ມີຂໍ້ແນະນຳເພື່ອໃຫ້ເຫັນທາງເລືອກແກ່ຊາວກະສິກອນດັ່ງນີ້:

1. ປັດໃຈນຳເຂົ້າໃນການຜະລິດທີ່ເປັນດິນ/ນ້ຳ

- ເນື່ອງຈາກວ່າເນື້ອທີ່ການຜະລິດຂອງຊາວກະສິກອນນັ້ນມີຄວາມອຸດົມສົມບູນຕ່ຳເຮັດໃຫ້ຜົນຜະລິດຕົກຕ່ຳ ຖ້າເປັນໄປໄດ້ຄວນມີການແນະນຳໃຫ້ຊາວກະສິກອນປັບປຸງດິນໂດຍການໃສ່ຝຸ່ນຊີວະພາບ, ຝຸ່ນຄອກ, ຝຸ່ນບົ່ມ, ຝຸ່ນສີຂຽວ ແລະ ປູກພືດຕະກຸນຖົ່ວເພື່ອຮັກສາຄວາມອຸດົມສົມບູນຂອງດິນໄວ້.
- ສຳລັບນ້ຳທີ່ຊາວກະສິກອນນຳໃຊ້ນັ້ນແມ່ນຍັງອາໃສນ້ຳຈາກທຳມະຊາດ ດັ່ງນັ້ນຖ້າເປັນໄປໄດ້ຄວນມີການສ້າງເໝືອງ ຫຼື ຝາຍຂະໜາດນ້ອຍໃຫ້ແກ່ຊາວກະສິກອນເພື່ອທີ່ຈະຊ່ວຍໃຫ້ຊາວກະສິກອນສາມາດປູກພືດໃນລະດູແລ້ງໄດ້.

2. ສິນເຊື່ອ

ພາກສ່ວນລັດ ແລະ ເອກະຊົນຄວນມີການກະຈາຍ ຫຼື ສະໜອງທຶນແກ່ຊາວກະສິກອນໃຫ້ທົ່ວເຖິງເພື່ອໃຫ້ຊາວກະສິກອນສາມາດເຂົ້າເຖິງສິນເຊື່ອໄດ້ທຸກລະດັບຄອບຄົວ.

3. ປັດໃຈນຳເຂົ້າແຫຼ່ງຂໍ້ມູນຂ່າວສານ

ຄວນມີການເຜີຍແຜ່ ແລະ ຈັດຝຶກອົບໃຫ້ແກ່ຊາວກະສິກອນກ່ຽວກັບຂໍ້ມູນທາງດ້ານເຕັກນິກວິທີການປູກພືດ, ການບົວລະບັດຮັກສາ, ການລ້ຽງສັດ ແລະ ການຄັດເລືອກແນວພັນພືດ, ແນວພັນສັດ.

4. ສິ່ງທີ່ເປັນເຄມີ

ຄວນມີການຈັດຝຶກອົບຮົມແນະນຳວິທີການໃຊ້ວິທີການເກັບຮັກສາໃຫ້ຊາວກະສິກອນໄດ້ເຂົ້າໃຈຜົນດີ ແລະ ຜົນເສຍຂອງເຄມີນັ້ນໃຫ້ດີ.

5. ສິ່ງທີ່ບໍ່ເປັນເຄມີ

- ຄວນແນະນຳໃຫ້ຊາວກະສິກອນຄັດແນວພັນທີ່ມີຢູ່ໃນທ້ອງຖິ່ນ ຫຼື ຖ້າເປັນໄປໄດ້ຄວນມີການຈັດກຸ່ມຂະຫຍາຍແນວພັນ.

# VII. ເອກະສານອ້າງອີງ
# (References)

ກົງສີ ທອງຈັນເພັງ, 2006. ບົດລາຍງານທ້າຍການສຶກສາ, ການສຶກສາລະບົບກະສິກຳໃນ 12 ໝູ່ບ້ານທາງພາກຕາເວັນຕົກຂອງເມືອງຍອດອູ ແຂວງຜົ້ງສາລີ. ໜ. 1 - 2.

ກອງສົ່ງເສີມກະສິກຳ - ປ່າໄມ້ແຫ່ງຊາດ, 2006. ຄູ່ມືການລິເລີ່ມຂະບວນການວຽກງານການພັດທະນາລະບົບວິສາຫະກິດກະສິກຳ. ໜ. 9 -11.

ຂະແໜງອຸຕຸວິທະຍາ, 2008 . ບົດສະຫຼຸບປະຈຳກ່ຽວກັບສະຖິຕິດິນຟ້າອາກາດຂອງແຂວງອັດຕະປື (ບໍ່ລະບຸໜ້າ).

ສີທາ ເຂັມມະລາດ, 2001. ທຸລະກິດກະເສດ ຄະນະກະເສດສາດ ມະຫາວິທະຍາໄລແຫ່ງຊາດ .ໜ. 11 - 12.

ສົມພັນ ປາຊູວາງ, 2004. ລະບົບກະສິກຳ ຄະນະກະເສດສາດ ມະຫາວິທະຍາໄລແຫ່ງຊາດ .ໜ. 18 - 22.

ທອງພັນ ກຸສິນສະຫວັດ, 2001. ຫຼັກການກະສິກຳ ຄະນະກະເສດສາດ ມະຫາວິທະຍາໄລແຫ່ງຊາດ. ໜ. 10 -22.

ພະແນກກະສິກຳ - ປ່າໄມ້ ຂອງແຂວງອັດຕະປື, 2006. ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະ ກິດ - ສັງຄົມຂອງ ແຂວງອັດຕະປື. ໜ. 5 -10.

ພະແນກກະສິກຳ - ປ່າໄມ້ຂອງແຂວງອັດຕະປື, 2009. ບົດສະຫຼຸບປະຈຳປີ 2007-2008 ແລະທິດທາງແຜນການ ຂອງ ແຂວງອັດຕະປື. ໜ. 6 -12.

ຫ້ອງການກະສິກຳ - ປ່າໄມ້ຂອງແຂວງອັດຕະປື, 2008. ບົດລາຍງານຜົນການວິເຄາະສະຖານະ ພາບ ບ້ານດາກກຽດ ເມືອງຊານໄຊ ແຂວງອັດຕະປື (ບໍ່ລະບຸໜ້າ).

ຫ້ອງວ່າການແຜນການ, 2007. ຜົນຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສ ນະຄອນຫຼວງວຽງຈັນ. ໜ. 15 - 25.

Faber, 1996. ຕ່ອງໂສ້ຜະລິດຕະພັນກະສິກຳ. ໜ. 2.

# ເອກະສານຊ້ອນທ້າຍ

# (Appendix)

ຮູບທີ27: ການປູກເຂົ້ານາປີ





ຮູບທີ28: ການປູກສາລີ



ຮູບທີ29: ການລ້ຽງສັດປີກ



ຮູບທີ30: ການລ້ຽງງົວ, ຄວາຍ





ຮູບທີ31: ການລ້ຽງແບ້





ຮູບທີ32: ການລ້ຽງໝູ





ຮູບທີ33: ອຸປະກອນໃນການຜະລິດ



